No. 02

ອົງການຮ່ວມມືສາກົນ
ປະເທດຍີ່ປຸ່ນ ( JICA )

ກະຊວງ ກະສິກຳ-ປ່າໄມ້
ສ ປ ປ ລາວ



# ແຜນແມ່ບົດ
# ກ່ຽວກັບ
# ການພັດທະນາກະສິກຳຮອບດ້ານ
# ຢູ່ທີ່
# ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

# ບົດລາຍງານຕົ້ນຕໍ

ຕຸລາ 2001

JICA LIBRARY
J1166654(2)

Nippon Koei Co., Ltd.
KRI International Corp.

AFA
JR
01−43

ອົງການຮ່ວມມືສາກົນ
ປະເທດຍີ່ປຸ່ນ ( JICA )

ກະຊວງ ກະສິກຳ-ປ່າໄມ້
ສ ປ ປ ລາວ

ແຜນແມ່ບົດ
ກ່ຽວກັບ
ການພັດທະນາກະສິກຳຮອບດ້ານ
ຢູ່ທີ່
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

# ບົດລາຍງານຕົ້ນຕໍ

ຕຸລາ 2001

Nippon Koei Co., Ltd.
KRI International Corp.

1166654(2)

# ຄຳນຳ

ຕອບສະໜອງຕາມຄຳສະເໜີຂອງລັດທະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ( ສ ປ ປ ລາວ ) ລັດຖະບານປະເທດຍີ່ປຸ່ນ ໄດ້ຕົກລົງສ້າງແຜນແມ່ບົດພັດທະນາກະສິກຳຮອບດ້ານ ແລະ ໄດ້ມອບໝາຍການສຶກສາດັ່ງກ່າວໃຫ້ແກ່ອົງການຮ່ວມມືສາກົນຂອງປະເທດຍີ່ປຸ່ນ ( ໃຈກາ ).

ອົງການໃຈກາໄດ້ສົ່ງທີມງານສຶກສານຳໂດຍຫົວໜ້າທີມ ທ່ານ. ຢູຕາກະ ມູຣາຍ ຈາກ ບໍລິສັດ ນິປອນໂກຍ ຈຳກັດ ໄປເຮັດວຽກຢູ່ ສ ປ ປ ລາວ ເປັນ ( 3 ) –ໄລຍະລະຫ່ວາງເດືອນພະຈິກ 2000 –ເຖິງເດືອນກັນຍາ 2001 .

ທີມງານໄດລົມທແນາປຶກສາຫາລື ນຳເຈົ້າໜ້າທີ່ທີ່ກ່ຽວຂ້ອງ ລັດຖະບານ ສປປລາວ ແລະ ໄດ້ລົງສຳຫຼວດເກັບກຳສະພາບຄວາມເປັນຈິງໃນເຂດເນື້ອທີ່ສຶກສາ. ພາຍຫຼັງທີມງານໄດ້ກັບຄືນປະເທດຍີ່ປຸ່ນ ໄດ້ມີການສຶກສາເພີ້ມເຕີມ ແລະ ໄດ້ກະກຽມບົດລາບງານສະບັບນີ້ .

ຂ້າພະເຈົ້າຫັວງວ່າ ບົດລາຍງານສະບັບນີ້ ຈະປະກອບໃນການສົ່ງເສີມໂຄງການ ແລະ ຈະທັດແໜ້ນສາຍພົວພັນດ້ານມິດຕະພາບ ລະຫ່ວາງສອງປະເທດຂອງພວກເຮົາ.

ຂ້າພະເຈົ້າ ຂໍສະແດງຄຳຊົມເຊີຍຢ່າງໜັກແໜ້ນ ຕໍ່ພະນັກງານເຈົ້າໜ້າທີ່ທີ່ກ່ຽວຂ້ອງຂອງລັດຖະບານສປປລາວທີ່ໄດ້ໃຫ້ຄວາມຮ່ວມມືຕໍ່ທີມງານຂອງພວກເຮົາ.

ຕຸລາ 2001

ຕາກາໂອ ກາວາກາມິ

ປະທານອົງການຮ່ວມມືສາກົນປະເທດຍີ່ປຸ່ນ

ຕຸລາ 2001

ເຖິງທ່ານ ຕາກາໂອ ກາວາກາມິ

ປະທານ

ອົງການຮ່ວມມືສາກົນປະເທດຍີ່ປຸ່ນ

ໂຕກີໂອ, ປະເທດຍີ່ປຸ່ນ

ທ່ານທີ່ເຄົາລົບ,

## ໜັງສືນຳສົ່ງ

ພວກຂ້າພະເຈົ້າມີຄວາມຍິນດີ ນຳສົ່ງບົດລາຍງານຂອງ ແຜນແມ່ບົດພັດທະນາກະສິກຳຮອບດ້ານ ຢູ່ທີ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ການສຶກສາໄດ້ຖືກປະຕິບັດ ໂດຍບໍລິສັດ ນິປອນໂກຍ ຈຳກັດ ຮ່ວມກັບບໍລິສັດ ເກອາອາຍ ອິນເຕີເນຊັ່ນແນນ ໃນໄລຍະ 12 –ເດືອນ ຈາກເດືອນພະຈິກ 2000 –ເຖິງເດືອນຕຸລາ 2001 ປະຕິບັດຕາມສັນຍານຳອົງການໄຈກາ. ຈຸດປະສົງຂອງການສຶກສາ ແມ່ນເພື່ອສ້າງແຜນປະຕິບັດງານໄລຍະຍາວ ສຳລັບການພັດທະນາກະສິກຳໃນ ສປປລາວ ເຖິງປີ 2020. ດັ່ງນັ້ນ ການສຶກສາໄດ້ກວມເອົາທຸກໆຂະແໜງການຍ່ອຍດ້ານກະສິກຳ ແລະ ທຸກພາກສ່ວນ ທີ່ປະກອບໃນລະບົບກະສິກຳໃນ ສປປລາວ. ການສຶກສາສາມາດສຳເລັດສ້າງແຜນປະຕິບັດງານ ທີ່ໄດ້ກຳນົດແຜນງານ ແລະ ໂຄງການທີ່ຕ້ອງການຕາມຄວາມເປັນໄປໄດ້ທີ່ມີຢູ່ປະຈຸບັນ. –ໃນຂະບວນການຂອງການສຶກສາ, ພວກເຮົາໄດ້ສຶກສາເຫັນສະພາບ ດ້ສກະສິກຳເຖິງລະດັບທ້ອງຖິ່ນ ໂດຍການວິເຄາະຂໍ້ມູນສະຖິຕິ –ແລະ ຂໍ້ມູນຂ່າວສານດ້ານພູມສາດ ( GIS ) ພ້ອມທັງນຳໃຊ້ຂໍ້ມູນ ເສດຖະກິດສັງຄົມທີ່ມີຢູ່. ພ້ອມກັນນັ້ນ, ຜົນຮັບຂອງການວິເຄາະສະພາບການ ໄດ້ສະເໜີສະພາບຄວາມເປັນຈິງ ແລະ ໄດ້ມີການປັບປຸງແຜນປະຕິບັດງານ ໂດຍມີການທວນຄືນ ແລະ ການຢັ້ງຢືນຢ່າງໜັກແໜ້ນຈາກຜູ້ຕາງໜ້າອົງການຈັດຕັ້ງສາກົນໃນ ສປປລາວ ກໍຄືຈາກກະຊວງກະສິກຳ ແລະ ປ່າໄມ້ –ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ຜ່ານກອງປະຊຸມສຳມະນາລະດັບສູນກາງ ແລະ ລະດັບທ້ອງຖິ່ນ.

ວັດຖຸປະສົງອັນນຶ່ງຂອງການສຶກສາ ແມ່ນຢາກສະເໜີບົດລາຍງານທີ່ສາມາດຖືກນຳໃຊ້ໂດຍທົ່ວໄປ ໂດຍອົງການຈັດຕັ້ງສາກົນລວມທັງລັດຖະບານປະເທດຍີ່ປຸ່ນ. ພວກຂ້າພະເຈົ້າມີຄວາມຫວັງວ່າ ລັດຖະບານ ສປປລາວ ຈະປະຕິບັດ ແຜນງານ ແລະ ໂຄງການທີ່ສະເໜີໃນແຜນແມ່ບົດຢ່າງສະເໜີຕາມບັນດາບຸລິມະສິດ ແລະ ເງື່ອນໄຂທີ່ໄດ້ສະເໜີໃນບົດລາຍງານສະບັບນີ້ເປັນທິດທາງລວມ.

ສຸດທ້າຍນີ້, ພວກຂ້າພະເຈົ້າຂໍສະແດງຄວາມເພິ່ງພໍໃຈຢ່າງສູງ ແລະ ຄວາມຮູ້ບຸນຄຸນອັນໜັກແໜ້ນຕໍ່ພະນັກງານທີ່ກ່ຽວຂ້ອງ ຂອງອົງການຈັດຕັ້ງພວກທ່ານ, ສະຖານທູດຍີ່ປຸ່ນຢູ່ ສປປລາວ,

ອົງການໃຈກາຢູ່ລາວ, ກະຊວງກະສິກຳ -ແລະ ປ່າໄມ້ ຫ້ອງການປະຈຳປະເທດຂອງບັນດາອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງໃຫ້ທຶນຕ່າງໆສຳລັບຊ່ວຍເຫຼືອ ແລະ ການຮ່ວມມືໃນຕະຫຼອດໄລຍະການສຶກສາ.

ຮຽນມາດ້ວຍຄວາມນັບຖື

ຢູຕາກະ ມູຣາຍ
ທີວໜ້າທີມງານສຶກສາຂອງ
ແຜນແມ່ບົດພັດທະນາກະສິກຳຮອບ
ດ້ານຢູ່ ສປປລາວ



CHINA
VIETNAM
MYANMAR
THAILAND
CAMBODIA
LAO
Gulf of Tongking
Phongsali
PHONGSALI
LOUANG NAMTHA
Louang Namtha
BOKEO
Houayxay
Xai
OUDOMXAI
LOUANGPHRABANG
Louangphrabang
HOUAPHAN
Xam Nua
XIANGKHOUANG
Xiangkhouang
Xaignabouri
XAIGNABOURI
XAISOMBOUN
Xaisomboun
VIENTIANE
Viangkham
VIENTIANE MUN
VIENTIANE
Pakxan
BORIKHAMXAI
KHAMMOUAN
Thakhek
Khanthabouri
SAVANNAKHET
Mekong River
SARAVAN
Saravan
XEKONG
Lamam
Pakse
Mae Nam Mun River
CHAMPASAK
Samak khixai
ATTAPU
Mekong River
HANOI
HAI PHONG
N
W
E
S
Legend
National Boundary
Provincial Boundary
Road
River
Lake
Major Town
0
100
200
300km
SCALE
ແຜນທີປະເທດລາວ




ເຂດພາກເໜືອ

| No | ຊື່ | ເນື້ອທີ່ (Km2) | ປະຊາກອນ (Thousand) |
|---|---|---|---|
| 1 | ຜົ້ງສາລີ | 15,896 | 174 |
| 2 | ຫຼວງນໍ້າທາ | 9,871 | 131 |
| 3 | ອຸດົມໄຊ | 12,121 | 240 |
| 4 | ບໍ່ແກ້ວ | 7,183 | 130 |
| 5 | ຫຼວງພະບາງ | 20,524 | 416 |
| 6 | ຫົວພັນ | 18,007 | 279 |
| 7 | ໄຊຍະບູລີ | 7,923 | 333 |
| | ລວມເຂດພາກເໜືອ | 91,525 | 1,703 |

ເຂດພາກກາງ

| No | ຊື່ | ເນື້ອທີ່ (Km2) | ປະຊາກອນ (Thousand) |
|---|---|---|---|
| 8 | ກຳແພງນະຄອນ | 3,686 | 608 |
| 9 | ຊຽງຂວາງ | 13,067 | 229 |
| 10 | ແຂວງວຽງຈັນ | 12,940 | 327 |
| 11 | ບໍລິຄຳໄຊ | 16,146 | 187 |
| 12 | ຄຳມ່ວນ | 17,187 | 311 |
| 13 | ສະຫວັນນະເຂດ | 21,992 | 766 |
| 14 | ໄຊສົມບູນ | 15,971 | 62 |
| | ລວມເຂດພາກກາງ | 100,989 | 2,490 |

ເຂດພາກກາງ

| No | ຊື່ | ເນື້ອທີ່ (Km2) | ປະຊາກອນ (Thousand) |
|---|---|---|---|
| 15 | ສາລະວັນ | 10,445 | 292 |
| 16 | ເຊກອງ | 8,629 | 73 |
| 17 | ຈຳປາສັກ | 15,396 | 572 |
| 18 | ອັດຕະປື | 9,816 | 100 |
| | ລວມເຂດພາກກາງ | 44,286 | 1,037 |

| | ເນື້ອທີ່ (Km2) | ປະຊາກອນ (Thousand) |
|---|---|---|
| ລວມ | 236,800 | 5,230 |

ຂໍ້ມູນພື້ນທີ່ບໍລິຫານ ( ເດືອນພະຈິກ 2000 )



ສຳນັກງານຂອງກະຊວງກະສິກຳ
ແລະ ປ່າໄມ້ ( ກຳແພງນະຄອນ )



ສຳນັກງານຂອງພະແນກກະສິກຳ
ແລະ ປ່າໄມ້ ( ແຂວງວຽງຈັນ )



ສຳນັກງານຫ້ອງການກະສິກຳປ່າໄມ້ເມືອງ
ໄຊທານີ ( ກຳແພງນະຄອນວຽງຈັນ )



ໂຄງການຈົດທະບຽນທີ່ດິນ
( ແຂວງຫຼວງພະບາງ )



ສູນຝຶກອົບຮົມຊົນລະປະທານ
( ກຳແພງນະຄອນວຽງຈັນ )



ສູນຜະລິດເມັດພັນ
( ແຂວງສະຫວັນນະເຂດ )



ທົ່ງນາໃນໂຄງການຊົນລະປະທານ
ຊຸມຊົນ ( CMI ) ( ແຂວງວຽງຈັນ )



ສູນຄົ້ນຄ້ວາໃໝມອນ
( ກະແພງນະຄອນວຽງຈັນ )



ການລ້ຽງສັດໃຫ່ຍ
( ແຂວງວຽງຈັນ )



ການລ້ຽງສັດປີກຂະໜາດນ້ອຍ
( ແຂວງຫຼວງພະບາງ )



ການລ້ຽງປາຂະໜາດນ້ອຍ
( ແຂວງວຽງຈັນ )



ເຂດເຮັດໄຮ່ –ແລະ ທົ່ງນາໃນເຂດ
ພູດອຍພາກເໜືອ ( ແຂວງອຸດົມໄຊ )



ຕະຫຼາດຊິນນະບົດ
( ແຂວງຄຳມ່ວນ )



ທະນາຄານສົ່ງເສີມກະສິກຳ ( ທສກ )
( ກຳແພງນະຄອນວຽງຈັນ )



ທາງຊິນນະບົດ ( ແຂວງຈຳປາສັກ )



ລະບົບນ້ຳສະອາດຊິນນະບົດ
( ແຂວງຫຼວງພະບາງ )



ການກໍ່ສ້າງຄອງເໝືອງຊິນລະປະທານ
ໂດຍຊາວນາ ( ແຂວງອຸດົມໄຊ )



ອາຄານຝາຍນ້ຳລົ້ນຂອງ
ໂຄງການຊິນລະປະທານຊຸມຊົນ ( CMI )
( ແຂວງຊຽງຂວາງ)



ລະບົບຈັກສູບນ້ຳສະໜອງໂດຍ
ໂຄງການຄຸ້ມຄອງສິ່ງແວດລ້ອມແປງ
ຊົນລະປະທານລະດັບຊາດ
( ແຂວງສະຫັວນນະເຂດ )



ຄູປ້ອງກັນນ້ຳຖ້ວມ
( ແຂວງສະຫັວນນະເຂດ )



ກອງປະຊຸມສຳມະນາສະເໜີທິດທາງ
ຢູ່ກະຊວງກະສິກຳ ແລະ ປ່າໄມ້ ( 12/12/2000 )



ກອງປະຊຸມລະດັບແຂວງຢູ່
ພະແນກກະສິກຳປ່າໄມ້ຈຳປາສັກ ( 30/1/01 )




ກອງປະຊຸມສູນກາງຄັ້ງທີ 1
ທີ່ກະຊວງກະສິກຳ ແລະ ປ່າໄມ້ ( 1/3/2001 )



ກອງປະຊຸມສູນກາງຄັ້ງທີ 2
ທີ່ກະຊວງກະສິກຳປ່າໄມ້ ( 28/8/2001 )

# ບົດສັງລວມ

## 1. ຄຳນຳ

**ຈຸດປະສົງ ແລະ ກອບຂອງການສຶກສາ**

1.1 ບົດລາຍງານສະບັບນີ້ ໄດ້ທົບທວນ, ຜົນຂອງການຄົ້ນຄວ້າ ແລະ ການສຳຫຼວດ ພາກສະໜາມບາດກ້າວ1 ແລະ ການວິເຄາະທີ່ດຳເນີນໂດຍ ທີມງານສຶກສາ "ການສຶກສາແຜນແມ່ບົດກະສິກຳຮອບດ້ານໃນ ສປປ ລາວ"(ການສຶກສາ). ການສຶກສາໃນຄັ້ງນີ້ໄດ້ດຳເນີນຕາມກອບຂອງວຽກຂອງການສຶກສາທີ່ໄດ້ຕົກລົງຮ່ວມກັນ ລະຫວ່າງອົງການຮ່ວມມືສາກົນຍີ່ປຸ່ນ (ໃຈກາ) ແລະ ກະຊວງກະສິກຳ ແລະ ປ່າໄມ້ (ກປ) ລັດຖະບານ ສປປ ລາວ ໃນວັນທີ 30 ມິຖຸນາ 2000.

1.2 ກະສິກຳ ເປັນເສດຖະກິດທີ່ພົ້ນເດັ່ນ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ທີ່ປະກອບເຖິງ 52% ໃຫ້ແກ່ ຜົນຜະລິດແຫ່ງຊາດ ( GDP )ໃນປີ 1997 ລາຍໄດ້ສະເລ່ຍຕໍ່ຫົວຄົນຄາດຄະເນເທົ່າ 400 ໂດລາຕໍ່ປີ ຂະແໜງການກະສິກຳ ກວມເອົາ 80% ຂອງແຮງງານທັງໝົດ ໃນປະເທດ ຮູບລັກສະນະກະສິກຳ ຢູ່ ສປປລາວ ປະກອບດ້ວຍລະບົບການຜະລິດກະສິກຳ 3 ຮູບແບບ: ການປູກເຂົ້າ ໂດຍການເຮັດໄຮ່ເຄື່ອນຍ້າຍຢູ່ໃນເຂດພາກເໜືອ ແລະ ເຂດພູດອຍ ຢູ່ພາກຕາເວັນອອກ; ການເຮັດນາປູກເຂົ້າຢູ່ເຂດທົ່ງພຽງ ຕາມລຳແມ່ນ້ຳຂອງ ແລະ ການປູກພືດຕ່າງໆ ໃນເຂດພູພຽງພາກໃຕ້. ປະເທດທີ່ມີຊັບພະຍາກອນ ທຳມະຊາດ ທີ່ອຸດົມຮັ່ງມີ ທີ່ສາມາດ ສະໜອງຄວາມຕ້ອງການດ້ານສະບຽງອາຫານ ໃຫ້ພົນລະເມືອງ ທັງຊາດໄດ້ ແຕ່ການສະໜອງສະບຽງອາຫານຢ່າງໝັ້ນຄົງ ຍັງມີຄວາມຫຍຸ້ງຍາກຫລາຍ ຍ້ອນການປະຕິບັດເຕັກນິກ ກະສິກຳ ທີ່ບໍ່ຖືກຕ້ອງ ແລະ ຄວາມອ່ອນແອ ຂອງລະບົບ ຈໍລະຈອນ ແລະ ການຕະຫລາດ ໂດຍທົ່ວໄປ.

1.3 ພາຍຫຼັງ ທີ່ກົນໄກເສດຖະກິດໃໝ່ (NEM) ໄດ້ຖືກນຳໃຊ້ ແຕ່ປີ1986 ສປປລາວ ແມ່ນກຳລັງຢູ່ໃນໄລຍະຂ້າມຜ່ານ ຈາກກົນໄກເສດຖະກິດ ຕາມການວາງແຜນ ເສດຖະກິດແບບລວມສູນ ໄປຫາເສດຖະກິດການຕະຫຼາດ, ເປັນຢ່າງໃດກໍ່ຕາມ ການຂະຫຍາຍຕົວຂອງເສດຖະກິດ ຍັງຢູ່ໃນລະດັບຕໍ່າ. ລັດຖະບານສປປລາວ ໄດ້ວາງແນວທາງ ນະໂຍບາຍການພັດທະນາທີ່ ເນັ້ນໜັກເຖິງ 3 ໂຄງການ ໃນແຜນການພັດທະນາ ເສດຖະກິດສັງຄົມຄັ້ງທີ 4 ສຳລັບປີ 1996-2000 ທີ່ປະກອບດ້ວຍ ໂຄງການຜະລິດສະບຽງອາຫານ, ໂຄງການຜະລິດສິນຄ້າກະສິກຳ ລວມທັງການລ້ຽງສັດ ແລະ ໂຄງການຢຸດຕິ ການຖາງປ່າເຮັດໄຮ່. ກະຊວງກະສິກຳ ແລະ ປ່າໄມ້ ໄດ້ວາງນະໂຍບາຍ ການພັດທະນາ ພື້ນຖານ

ຕາມນະໂຍບາຍອັນເປັນຫຼັກ ທີ່ກ່າວມາຂ້າງເທິງນີ້ໃນ " ວິໄສທັດ ສຳລັບ ການພັດທະນາ ກະສິກຳ ແລະ ປ່າໄມ້ຮອດປີ 2020 ("ວິໄສທັດ 2020 ") ນອກຈາກນັ້ນ ກະ ຊວງ ກະສິກຳ ປ່າໄມ້ ໄດ້ສ້າງ " ຍຸດທະສາດ ວິໄສທັດ ສຳລັບຂະແໜງກະສິກຳ " ("ຍຸດທະສາດວິໄສທັດ ") ທີ່ກຳນົດ ຍຸດທະສາດ ການພັດທະນາ ກະສິກຳ ແລະ ປ່າໄມ້ເຖິງ ປີ 2020. ບັນດາວິໄສທັດ ແລະ ຍຸດທະສາດ ທີ່ກ່າວມານັ້ນ ໄດ້ໃຫ້ທິດທາງ ແລະ ໂຄງສ້າງວຽກງານ ການພັດທະນາ ຂະແໜງກະສິກຳ ຢູ່ ສປປລາວ, ແຕ່ບໍ່ໄດ້ກຳນົດແຜນການ ພັດທະນາ ສະເພາະຢ່າງລະ ອຽດ ດັ່ງນັ້ນ, ມັນຈຶ່ງມີ ຄວາມຮຽກຮ້ອງຕ້ອງການ ເພື່ອສ້າງແຜນການ ແລະ ກຳນົດ ບັນດາ ກິດຈະກຳ ທີ່ຕ້ອງການ ເພື່ອບັນລຸ ຜົນທີ່ກຳນົດໄວ້ ໃນວິໄສທັດ ແລະ ຍຸດທະສາດດັ່ງກ່າວ ນັ້ນ.

1.4 ໂດຍອີງໃສ່ເບື້ອງຫຼັງ ທີ່ກ່າວມາຂ້າງເທິງນີ້ ແລະ ອີງຕາມການສຶກສາ ປະເມີນຜົນໂຄງການ ຂອງອົງການໃຈກາ ທີ່ໄດ້ປະຕິບັດ ໃນເດືອນມິຖຸນາ ປີ 1999 ລັດຖະບານ ສປປລາວໄດ້ ສະເໜີ ລັດຖະບານຍີ່ປຸ່ນ ໃນເດືອນພະຈິກ 1999 ໃຫ້ການຊ່ວຍເຫຼືອ ດ້ານວິຊາການ ເພື່ອ ສຶກສາ ຂຽນແຜນແມ່ບົດ ພັດທະນາກະສິກຳ ແລະ ປ່າໄມ້ຮອບດ້ານ .ຕອບສະໜອງຕໍ່ ການ ສະເໜີດັ່ງກ່າວ ໄດ້ມີ ຂໍ້ຕົກລົງໃນບົດບັນທຶກ ຊ່ວຍຈຳຂອງກອງປະຊຸມ ກຳນົດ ກອບວຽກ ງານ ສຳລັບການສຶກສາ ທີ່ສ້າງຂຶ້ນລະຫວ່າງ ອົງການໃຈກາ ແລະ ກະຊວງກະສິກຳ ແລະ ປ່າໄມ້. ໃນວັນທີ 30 /6/2000 ບັນລຸຈຸດປະສົງ ຂອງການສຶກສາດັ່ງນີ້:

(1). ສ້າງແຜນແມ່ບົດ ໃນການຈັດຕັ້ງປະຕິບັດ ທີ່ເປັນສ່ວນຊຸກຍູ້ ໃຫ້ການສົ່ງເສີມການພັດທະນາ ກະສິກຳໃຫ້ມີປະສິດທິຜົນຫຼາຍຂຶ້ນ, ບົນພື້ນຖານ ກອບຂອງຍຸດທະສາດວິໄສທັດ ເປັນຍຸດ ທະສາດ ການພັດທະນາ ສຳລັບຂະແໜງການກະສິກຳ ຂອງ ສປປ ລາວ ແລະ ວິໄສທັດ 2020 ໄດ້ເປັນພື້ນຖານ ນະໂຍບາຍຂອງການພັດທະນາ.

(2). ກຳນົດໂຄງການ ບຸລິມະສິດ ແລະ ແຜນງານ ທີ່ຈະເປັນການ ໃຫ້ການຊ່ວຍເຫຼືອຈາກຕ່າງປະ ເທດ ຮວມທັງລັດຖະບານ ຍີ່ປຸ່ນ, ດ້ວຍການກວດສອບ ແຜນການປະຕິບັດງານ ແລະ ສືບຕໍ່ ສຶກສາຮ່າງເພີ່ມເຕີມ ແລະ ປະຕິບັດແຜນງານ ດ້ວຍການເຂົ້າພົບປຶກສາຫາລື ກັບອົງການ ຈັດຕັ້ງອື່ນເພື່ອປະຕິບັດ.

(3) ຖ່າຍທອດເຕັກໂນໂລຊີ ໃຫ້ແກ່ຜູ້ຮ່ວມວຽກ ດ້ານວິທີການເກັບກຳຂໍ້ມູນ, ຂັ້ນຕອນການວາງ ແຜນ ແລະ ວິທີການສ້າງແຜນ ສຳລັບຂະແໜງທີ່ກ່ຽວຂ້ອງ ຕາມລຳດັບ.

1.5 ຂັ້ນຕອນການສຶກສາ ແລະ ລະດັບຄວາມກ້າວໜ້າ ຂອງວຽກການສຶກສາ ໄດ້ກວມເອົາເນື້ອ ທີ່ລວມ ຂອງປະເທດສປປລາວ ແລະ ໄດ້ດຳເນີນເປັນສອງ ບາດກ້າວ ໃນ ໄລຍະການປະ ຕິບັດປີງົບປະມານ ( ຍີ່ປຸ່ນ ) ສອງປີ. ໃນບາດກ້າວທີ I, ແຜນແມ່ບົດເຖິງປີ 2020 ໄດ້ຖືກ ຮ່າງຂຶ້ນສອດຄ່ອງກັບເນື້ອໃນລວມ ແລະ ໂຄງປະກອບວຽກງານ ຂອງວິໄສທັດ 2020 ແລະ

ຍຸດທະສາດວິໄສທັດຂອງຂະແໜງກະສິກຳ. ການສຶກສາ ໄດ້ສຶກສາເບິ່ງບັນດາໂຄງການພັດທະນາທີ່ປະຕິບັດ ໂດຍການຊ່ວຍເຫຼືອຈາກຕ່າງປະ ເທດ, ໄດ້ສຶກສາບັນດາຂັ້ນຕອນ ແລະ ປະສິດຕິພາບ ຂອງການບໍລິຫານແບບກະຈາຍອຳນາດ ສູ່ຮາກຖານ, ສຶກສານະໂຍບາຍການຫັນປ່ຽນໄປສູ່ເສດຖະກິດການຕະຫຼາດ, ສຶກສາສະພາບຄວາມເປັນຈິງ ການພັດທະນາຊົນນະບົດ, ສຶກສາສະພາບ ແລະ ເງື່ອນໄຂ ການຜະລິດກະສິກຳລວມທັງການເຮັດໄຮ່ແບບເຄື່ອນຍ້າຍ, ສຶກສາສະພາບໂຄງສ້າງພື້ນຖານຊົນ ນະບົດ, ສະພາບດ້ານສິ່ງແວດລ້ອມ ແລະ ສະພາບ ດ້ານສັງຄົມວັດທະນາທຳ ແລະອື່ນໆ.

1.6 ແຜນແມ່ບົດໄດ້ສ້າງຂຶ້ນບົນພື້ນຖານການວິເຄາະ ບັນດາໂຄງການນະໂຍບາຍເທິງນີ້ –ແລະ ບົນພື້ນຖານຄຳຄິດເຫັນ ຈາກຜູ້ເຂົ້າຮ່ວມກອງປະຊຸມສຳມະນາ ກ່ຽວກັບໂຄງການສຶກ ສາແຜນແມ່ບົດ ທີ່ມາຈາກຫຼາຍພາກສ່ວນ ທັງພາຍໃນ ແລະ ຕ່າງປະເທດ. ໃນບາດກ້າວ ທີ II ທີມງານໄດ້ເກັບກຳເອົາຂໍ້ມູນເພີ້ມເຕີມ ທີ່ຈຳເປັນເພື່ອປັບປຸງແຜນແມ່ບົດທີ່ໄດ້ຮ່າງໃນ ໄລຍະບາດກ້າວທີ I. ຫຼັງຈາກນັ້ນໄດ້ຮ່າງບັນດາໂຄງການທີ່ຈະປະຕິບັດເຖິງປີ 2010 ໂຄງການດັ່ງກ່າວປະກອບມີໂຄງການ ທີ່ຈະຂໍການຊ່ວຍເຫຼືອຈາກຕ່າງປະເທດ ລວມທັງໂຄງການຊ່ວຍເຫຼືອ ຈາກລັດຖະບານຍີ່ປຸ່ນ. ຜົນຂອງການສຶກສາໄດ້ສະເໜີໃນຮ່າງບົດລາຍງານສຸດທ້າຍ ແລະ ໃນກອງປະຊຸມສຳມະນາຄັ້ງທີ ສອງ. ບົດລາຍງານສຸດທ້າຍນີ້ໄດ້ຖືກຮ່າງຂຶ້ນອີງຕາມຄຳ ແນະນຳ ແລະ ຜົນຂອງກອງປະຊຸມສຳມະນາຄັ້ງທີສອງ.

## 2. ເປົ້າໝາຍການພັດທະນາແຫ່ງຊາດ ແລະ ສະພາບເສດຖະກິດໃນປັດຈຸບັນ

2.1 ສະພາບເສດຖະກິດ ການວາງແຜນ ແລະ ການຄວບຄຸມ ແບບລວມສູນ ທີ່ມີແຕ່ ມີ 1976 ຫາ 1985 ໄດ້ກະທົບເຖິງແວດລ້ອມ ການຂະຫຍາຍຕົວ ດ້ານເສດຖະກິດຢ່າງໜັກໜ່ວງ. ໃນປີ 1986 ລັດຖະບານລາວໄດ້ປ່ຽນແປງນະໂຍບາຍຢ່າງໃຫຍ່ຫຼວງກ້າວເຂົ້າສູ່ ລະບົບເສດຖະກິດຕະຫຼາດ ດ້ວຍການນຳໃຊ້ກົນໄກເສດຖະກິດໃໝ່ (NEM). ສິ່ງດັ່ງກ່າວນີ້ຕິດພັນກັບຄວາມກ້າວໜ້າໃນການປ່ຽນແປງໂຄງສ້າງ ແລະ ຄຸ້ມຄອງເສດຖະກິດມະຫາພາກ ທີ່ສ້າງພື້ນຖານສຳລັບການຊຸກຍູ້ເສດຖະກິດ. ຄວາມກ້າວໜ້າຂອງໂຄງການ ປະຕິຮູບຂ້າງເທິງໄດ້ສະທ້ອນເຖິງການເຕີບໂຕ ຂອງ ຜົນຜະລິດແຫ່ງຊາດຈາກ 6.3% ຫາ 8.1% ຕໍ່ປີ ໃນຊ່ວງ 1990-96. ໃນປີ1997 ສປປລາວ ເຂົ້າຮ່ວມສະມາຄົມປະຊາຊາດອາຊີຕາເວັນອອກສ່ຽງໃຕ້ (ASEAN) ແລະ ກຸ່ມເຂດການຄ້າເສລີ (AFTA).

2.2 ໃນກາງປີ 1997 ຕໍ່ມາ, ແລະ ຫຼັງຈາກກອງປະຊຸມໂຕະມົນຄັ້ງທີ່6 ໄດ້ເລີ່ມຕົ້ນມີວິກິດການດ້ານການເງິນ ຢູ່ອາຊີ ທີ່ໄດ້ກະທົບສ້າງວິກິດການຕໍ່ເສດຖະກິດລາວ. ເສດຖະກິດໄດ້ຖືກທຳ

ລາຍດ້ວຍການລົດລົງຂອງດ້ານລາຍຮັບ ແລະ ອັດຕາແລກປ່ຽນເງິນຕາທີ່ເປັນລາຍຮັບຂອງລັດຢ່າງໄວວາ. ເງິນຕາຂອງລາວ, ສະກຸນເງິນກີບໄດ້ຫຼຸດຄ່າລົງຢ່າງແຂງແຮງ ແລະ ເງິນເຟີ້ໄດ້ຂະຫຍາຍເຖິງ 3 ຕົວເລກ. ເຖິງແມ່ນວ່າ ອັດຕາເຕີບໂຕຂອງເສດຖະກິດແຫ່ງຊາດໄດ້ລົດລົງກໍ່ຕາມ, ການເຕີບໂຕຍັງຮັກສາ ລະດັບໝັ້ນຄົງ ລະດັບໜຶ່ງ ຍ້ອນຜົນຮັບ ແລະ ການຂະຫຍາຍຕົວ ຂອງຂະແໜງການກະສິກຳ. ແຕ່ເຖິງຢ່າງໃດກໍ່ຕາມເປົ້າໝາຍເສດຖະກິດສັງຄົມ ກ່ອນວິກິດການດັ່ງໄດ້ບັນຍາຍໃນກອງປະຊຸມໂຕະມົນຄັ້ງທີ່ 6 ບໍ່ສາມາດບັນລຸໄດ້. ກະແສການລົງທຶນຂອງຕ່າງປະເທດໂດຍກົງ ມີທ່າທີວ່າຫຼຸດຖອຍລົງໃນຊຸມປີດັ່ງກ່າວນີ້, ໂດຍສະເພາະໃນປີ 1997.

2.4 ຜົນສະທ້ອນຂອງວິກິດການເສດຖະກິດ ໄດ້ກະທົບຫລາຍສົມຄວນ ແລະ ອັດຕາການຂະຫຍາຍຕົວ ຂອງເສດຖະກິດແຫ່ງຊາດ ໃນປີ 1998 ລົດລົງເຖິງ 4.0% ຖ້າທຽບໃສ່ລະດັບອັດຕາການຂະຫຍາຍຕົວສະເລ່ຍ 7.0% ໃນສອງປີຜ່ານມາ. ເຖິງຢ່າງໃດກໍ່ຕາມ ການລົດລົງໃນອັດຕາຂະຫຍາຍຕົວ ບໍ່ໄດ້ຮ້າຍແຮງດັ່ງບັນດາປະເທດໃກ້ຄຽງ . ການຜະລິດເຂົ້າໄດ້ເພີ້ມ ຂຶ້ນຢ່າງວອງໄວໃນໄລຍະຊຸມປີ 1996 ແລະ 1998. ໃນປີ 1999 ເສດຖະກິດໄດ້ພື້ນຕົວ ຂຶ້ນໄດໂດຍທົ່ວໄປ, ສະພາບເງິນເຟີ້ ໄດ້ລຸດຜ່ອນລົງ ແລະ ສາມາດຄຸ້ມຄອງໄດ້ ແລະ ດຸ່ນດ່ຽງ ການຄ້າກໍ່ໄດ້ຖືກປັບປຸງ. ໃນກອງປະຊຸມໂຕະມົນຄັ້ງທີ 7 ທີ່ໄດ້ຈັດຂຶ້ນໃທ້າຍປີ 2000 ລັດຖະ ບານ ສປປລາວ ໄດ້ວາງຄາດໝາຍວ່າຜົນຮັບຈາກການລົງທຶນດ້ານອຸດສາຫະກຳໄຟຟ້ານ້ຳຕົກ ຈະສ້າງກະແສລາຍຮັບສຳຄັນໃນທ້າຍທົດສະຫວັດທຳອິດສະຕະຫວັດນີ້.

2.4 ການພັດທະນາຂອງລັດຖະບານ ປະກອບດ້ວຍ 3 ຈຸດປະສົງໃຫຍ່: ຫຼຸດຜ່ອນຄວາມທຸກຍາກ, ການກໍ່ສ້າງພື້ນຖານຄົງລ່າງ ແລະ ການພັດທະນາຊັບພະຍາກອນມະນຸດ. ເປົ້າໝາຍລວມຂອງ ສປປ ລາວ ແມ່ນ ເພື່ອປົດປ່ອຍປະເທດຊາດອອກຈາກກຸ່ມປະເທດດ້ອຍພັດທະນາໃນປີ 2020 ດ້ວຍການພັດທະນາແບບຍືນນານ ແລະ ມີຄວາມຍຸຕິທຳ. ຄວາມທ້າທາຍການພັດທະນາແຫ່ງຊາດນີ້ ໄດ້ສ່ອງແສງເຖິງບັນຫາຄວາມທຸກຈົນ ທີ່ຍັງແຜ່ກະຈາຍໄປທົ່ວປະເທດ, ພື້ນຖານເສດຖະກິດຍັງອ່ອນນ້ອຍ ຂາດຄວາມອາດສາມາດ. ລັດຖະບານໄດ້ປັບວິທີການສອງແງ່ເພື່ອຮັບປະກັນຄວາມທ້າທາຍດັ່ງກ່າວ, ພາຍໃນ ແລະ ພາຍນອກເຊັ່ນ: ສິ່ງທ້າທາຍພາຍໃນ ແມ່ນ ເລັ່ງລັດການຫຼຸດຜ່ອນຄວາມທຸກຈົນລົງ ແລະ ປັບປຸງມາດຕະຖານການດຳລົງຊີວິດ ໃນສະພາບການພັດທະນາເທົ່າທຽມກັນ. ສະພາບການຂາດຄວາມອາດສາມາດໃນທຸກລະດັບເປັນບັນຫາກີດຂວາງອັນໃຫຍ່ຫຼວງ.ສິ່ງທ້າທາຍພາຍໃນກໍ່ໄດ້

ເນັ້ນເຖິງດ້ານຄວາມເທົ່າທຽມເໝືອນກັນ ແລະ ໃຈກາງຂອງຈຸດປະສົງນະໂຍບາຍ, ຫຼຸດຜ່ອນຄວາມແຕກໂຕນດ້ານລາຍຮັບລະຫວ່າງເຂດຕົວເມືອງ ແລະ ຊົນນະບົດ.ສິ່ງທ້າທາຍພາຍນອກ ພື້ນຖານ ແມ່ນກ່ຽວຂ້ອງກັບການເຂົ້າຮ່ວມໃນເຂດພາກພື້ນ ເພື່ອສົ່ງເສີມດ້ານການຄ້າ ແລະ ເຂົ້າສູ່ຕະຫຼາດໃຫຍ່ອາຊຽນ. ໃນໂອກາດທີ່ລາວໄດ້ກາຍເປັນສະມາຊິກຂອງອາຊຽນແລະ ເຂດການຄ້າເສລີໃນ ປີ 1997. ຄືເມື່ອໄດ້ເປັນຂອງສະມາຊິກຂອງອາຊຽນ ສ ປປ ລາວກໍເປັນຄູ່ຕົກລົງຂອງການ ກຳນົດອັດຕາພາສີ ສິນຄ້າ ນຳເຂົ້າແບບພິເສດ(CEPT) ທີ່ໄດ້ເລີ່ມຕົ້ນໃນປີ 1999 ພ້ອມກັບການກຳໜົດວັນທີສຸດທ້າຍ ໃນປີ 2008. ນອກຈາກນັ້ນ ສິ່ງທ້າທາຍໂດຍສະເພາະ ແມ່ນ ປັບປຸງສະພາບຄວາມດຸ່ນດ່ຽງ ພາຍນອກໂດຍທົ່ວໄປ ແລະ ການດຸ່ນດ່ຽງການຄ້າ. ສິ່ງທ້າທາຍສະເພາະ ແມ່ນຮັບປະກັນການບັນຈຸ ເສດຖະກິດຂອງລາວ ເຂົ້າໃນພາກພື້ນໂດຍມີການແຂ່ງຂັນ ແລະ ຄຽງຄູ່ກັນນັ້ນກໍມີຜົນກຳໄລດ້ວຍການເພີ່ມການສົ່ງອອກ ແລະ ຫລຸດຜ່ອນການສົ່ງເຂົ້າ ຍ້ອນມີແຫຼ່ງວັດຖຸຖືກກ່ວາ.

2.5 ຍຸດທະສາດການພັດທະນາເສດຖະກິດ ສັງຄົມລາວສຳລັບປີ 2010-2020 ແລະ ທິດທາງ 2001-2005 ຈຸດປະສົງຂອງລັດ ຕົ້ນຕໍແມ່ນ ຫຼຸດຜ່ອນຄວາມທຸກຈົນ, ການເຕີບໂຕດ້ານເສດຖະກິດໃຫ້ຢູ່ໃນອັດຕາທີ່ເໝາະສົມ, ແລະ ປັບປຸງມາດຖານຊີວິດການເປັນຢູ່ຂອງປະຊາຊົນ. ເພື່ອບັນລຸໄດ້ຈຸດປະສົງເຫຼົ່ານີ້, ເປົ້າໝາຍສຳລັບແຜນການ 5 ປີ (2001-2005) ມີຄືດັ່ງນີ້: GDP ເພີ່ມຂຶ້ນ 7-7.5% ຕໍ່ປີ, ການເຕີບໂຕດ້ານກະສິກຳ 4 - 5% ຕໍ່ປີ, ການເຕີບໂຕສຳລັບອຸດສະຫະກຳ 10-11% ຕໍ່ປີ, ການເຕີບໂຕ ສຳລັບຂະແໜງການກະສິກຳ 8-9% ຕໍ່ປີ

## 3. ການກະສິກຳໃນເສດຖະກິດມະຫາພາກ

3.1 ກະສິກຳ ແມ່ນກິດຈະກຳເສດຖະກິດຕົ້ນຕໍໃນ ສປປລາວ ແລະ ກວມເອົາກິດຈະກຳລະດັບອັນກວ້າງຂວາງຈາກລະດັບຄອບຄົວຊາວນາລ້ຽງກຸ້ມຕົນເອງ ຫາ ກະສິກຳພົວພັນກັບອຸດສາຫະກຳ. ໃນປີ 1999 ກະສິກຳກວມເອົາ 53% ຂອງ GDP. ການປູກເຂົ້າ ເປັນການຜະລິດດຽວ ທີ່ສຳຄັນທີ່ສຸດຂອງກິດຈະກຳເສດຖະກິດແຫ່ງຊາດ ກວມເອົາ 20% ຂອງ GDP ແຫ່ງຊາດ ແລະ 39% ຂອງ GDP ກະສິກຳ. ການລ້ຽງສັດກໍແມ່ນສ່ວນນຶ່ງທີ່ສຳຄັນຂອງຄອບຄົວກະສິກອນເໝືອນກັນ. ປະມານ 83% ຂອງປະຊາຊົນທີ່ຢູ່ເຂດຊົນນະບົດ ແລະ 66% ຂອງຈຳນວນເຫຼົ່ານີ້ຂຶ້ນກັບກະສິກຳທີ່ລ້ຽງກຸ້ມຕົນເອງ. ຄຽງຄູ່ໄປກັບການປູກເຂົ້າ, ຄອບຄົວຊາວກະສິກອນ ບັນລຸຄວາມຈຳເປັນພື້ນຖານດ້ານອາຫານຈາກການລ້ຽງສັດ ແລະ ຈາກການເກັບກູ້ເຄື່ອງປ່າຂອງດົງ. ປະມານ 620,000 ຄອບຄົວຊາວກະສິກອນ ຂຶ້ນກັບການກະສິກຳ

ໃນນັ້ນ 492,000 ຄອບຄົວ ເພິ່ງພາກະສິກຳແບບກຸ້ມຕົນເອງ. ດັ່ງນັ້ນ ການຕິດພັນລະຫວ່າງກະສິກຳ ແລະ ເຂດຊົນນະບົດແມ່ນໃກ້ກັນຫຼາຍ. ແຕ່ວ່າເຂດຊົນນະບົດເປັນອຳນະພາດຢ່າງໜັກໜ່ວງ ຍ້ອນຂາດພື້ນຖານສິ່ງອຳນວຍຄວາມສະດວກເຊັ່ນ ການເຂົ້າຫາຕະຫຼາດສະຖານທີ່ໂຮງຮຽນ ແລະ ໂຮງໝໍ.

3.2 ກະສິກຳຍັງສຳຄັນແລະຍັງຈະສືບຕໍ່ ພົ້ນເດັ່ນໃນເສດຖະກິດລາວ ອີກຫຼາຍປີທີ່ຈະມາເຖິງ, ເຖິງແມ່ນວ່າສ່ວນແບ່ງຂອງ GDP ໄດ້ລົດລົງເທື່ອລະນ້ອຍ ແຕ່ຖ້າສົມທຽບໃສ່ປັດຈຸບັນຍັງຂ້ອນຂ້າງສູງ. ຜົນຜະລິດກະສິກຳຕໍ່ເຮັກຕາ ມີຜົນສະທ້ອນຈາກການລົງທຶນໜ້ອຍໃສ່ກະສິກຳເປັນເວລາຍາວນານ. ການເຂົ້າຫາການໄດ້ຮັບການປັບປຸງກະສິກຳ ແລະ ເຕັກໂນໂລຊີຫຼັງເກັບກ່ຽວ ມີຄວາມຈຳກັດ ແລະ ພຽງແຕ່ມໍ່ໆມານີ້ ໄດ້ມີການລົງທຶນໂດຍລັດຖະບານ ແລະ ການຊ່ວຍເຫຼືອຈາກສາກົນ ເຂົ້າໃນຊົນລະປະທານສາມາດເຮັດການຜະລິດລະດູແລ້ງໄດ້ ຈຳນວນນຶ່ງ. ມີຄວາມຕ່າງກັນຫຼາຍ ດ້ານແຫຼ່ງທຶນທີ່ມີ ແລະ ການເຕີບໂຕໃນຂະແໜງກະສິກຳ. ເຂດພາກກາງ ແລະ ພາກໃຕ້ລຽບຕາມລຳແມ່ນ້ຳຂອງ ແລະ ສາຂາແມ່ນ້ຳຕົ້ນຕໍແມ່ນສາມາດສ້າງຊົນລະປະທານໄດ້, ມີດິນອຸດົມສົມບູນ ແລະ ອາກາດມໍລະສຸມຂ້ອນຂ້າງຄົງທີ່ເກືອບໝົດປີ, ເຂດເຫຼົ່ານີ້ຜະລິດເປັນສ່ວນເກີນ. ໃນດ້ານກົງກັນຂ້າມ ເຂດພື້ນທີ່ພູດອຍ ແລະ ເນື້ອທີ່ໃນນສູງເຂດພາກເໜືອ ເປັນພື້ນທີ່ມີຄວາມຈຳກັດ ດ້ານການສ້າງຊົນລະປະທານ, ດິນບໍ່ດີ ແລະ ອາກາດຊຸ່ມຊື້ນ ຈຶ່ງມີສະພາບຂາດເຂົ້າກິນເຮື້ອຮັງ ແລະ ໄດ້ຮັບການສະໜອງເຂົ້າກິນຈາກຈີນ ແລະ ໄທ. ຄວາມແຕກຕ່າງທາງດ້ານພູມສາດເຫຼົ່ານີ້ນຳສ້າງໃຫ້ເກີດມີ ລະບົບກະສິກຳທີ່ແຕກຕ່າງກັນ ແລະ ມີຈຸດປະສົງພັດທະນາລວມທັງໝົດ ຄືການປັບປຸງການປູກເຂົ້າ ກໍຄືພືດສິນຄ້າ, ການລ້ຽງສັດ ແລະ ການປະມົງ, ແຕກຕ່າງກັບແຜນປະຕິບັດການກໍໄດ້ຄຳນຶງເຖິງຄວາມແຕກຕ່າງເຫຼົ່ານີ້ ພ້ອມທັງຄຳນຶງເຖິງ ຄວາມຕ້ອງການຂອງທ້ອງຖິ່ນທີ່ແຕກຕ່າງກັນ.

3.3 ໃນເວລາດຽວກັນນັ້ນ ການພັດທະນາກະສິກຳ ແມ່ນກົມກຽວກັນ ຢ່າງຊະນິດແໜ້ນ ກັບການພັດທະນາຊົນນະບົດ ແລະ ຈະບໍ່ເປັນໄປໄດ້ ທີ່ເປົ້າໝາຍການພັດທະນາກະສະກຳ ຈະປາສະຈາກບາງສິ່ງຈຳເປັນພື້ນຖານ ດ້ານການພັດທະນາຊົນນະບົດ. ຍັງມີຫຼາຍສິ່ງຫຼາຍຢ່າງທີ່ກີດຂວາງທາງການພັດທະນາ ແລະ ການຂະຫຍາຍກະສິກຳ ເພື່ອສົ່ງອອກ ເຊັ່ນ: ຂາດທາງເຂົ້າສູ່ຕະຫຼາດ ແລະ ບໍ່ມີການສ້າງຕັ້ງຕາໜ່າງການແຈກຢາຍ. ຍ້ອນແນວນັ້ນແຜນປະຕິບັດການພັດທະນາຊົນນະບົດມີຄວາມຈຳເປັນໃຫ້ກົມກຽວກັນກັບແຜນປະຕິບັດການກະສິກຳພ້ອມນັ້ນ ແຜນການເພື່ອລົບລ້າງຂໍ້ຈຳກັດເຊັ່ນ: ການຂາດໂຄງລ່າງພື້ນຖານ, ຄວາມຈຳກັດດ້ານຂີດອາດສາມາດ ຂອງຊັບພະຍາກອນມະນຸດ, ການຂາດເຂີນສິ່ງຊຸກຍູ້ການກະສິກຳ

ແລະ ການບໍລິການດ້ານການຂົນສົ່ງ, ການເຂົ້າຫາແຫລ່ງສິນຄ້າຂາເຂົ້າ ແລະ ຕະຫຼາດແບບງ່າຍດາຍ ແລະ ການຂາດສິນເຊື່ອໄລຍະກາງ ແລະ ໄລຍະສັ້ນ.

## 4. ກະສິກຳໃນ ສປປລາວ

**ຊັບພະຍາກອນແຫຼ່ງນ້ຳ ແລະ ສິ່ງແວດລ້ອມ**

4.1 ແຫຼ່ງນ້ຳໃນ ສປປລາວ ແມ່ນຫຼໍ່ລ້ຽງ ບໍ່ພຽງແຕ່ ສປປລາວ ເທົ່ານັ້ນ ແຕ່ຍັງແມ່ນແຫຼ່ງນ້ຳສຳຄັນທົ່ວຂົງເຂດພາກພື້ນອີກດ້ວຍ. ລະດັບນ້ຳໄຫຼທັງໝົດປະຈຳປີໃນ ສປປລາວ ຄາດຄະເນເທົ່າ 229,000 ລ້ານແມັດກ້ອນ ທີ່ກວມປະມານ 93% ຂອງນ້ຳໄຫຼລົງສູ່ແມ່ນ້ຳຂອງ. ເນື້ອທີ່ປົກຫຸ້ມປ່າໄມ້ ໄດ້ລົດລົງໃນຊ່ວງ 20 ປີຜ່ານມາ ແລະ ມີການເສຍຫາຍປະມານ 1 ລ້ານເຮັກຕາ ຫຼື 8% ນັບແຕ່ປີ 1982. ເນື້ອທີ່ດິນກະສິກຳຄົງທີ່ ແລະ ແບບເຄື່ອນຍ້າຍ ທີ່ນຳໃຊ້ໃນປີ 2000 ໄດ້ປະເມີນແບບຄ່າວໆ ມີປະມານ 1,130,000 ເຮັກຕາ ແລະ 680,000 ເຮັກຕາຕາມລຳດັບ. ປ່າໄມ້ ແລະ ທ່າແຮງດ້ານປ່າໄມ້ທັງໝົດ (ລວມທັງປ່າຊຸດໂຊມ/ປ່າຟື້ນຟູໄດ້) ປະກອບມີເນື້ອທີ່ທົ່ງຫຍ້າ ທີ່ສຳຄັນ ສຳລັບການລ້ຽງງົວ ຄວາຍ, ແກະ ແລະ ອາຫານສຳລັບໝູ, ໂດຍສະເພາະຫຼັງຈາກ ປະຕິບັດຈາກ ການປູກຝັງແບບເຄື່ອນຍ້າຍ ໝົດໄປ. ປ່າໄມ້ເຫຼົ່ານີ້ ກໍໃຫ້ອາຫານເໝືອນກັນ ແລະ ເຄື່ອງປ່າຂອງດົງອື່ນໆ ແກ່ຄອບຄົວຊາວກະສິກອນ. ປ່າໄມ້ທຳມະຊາດ ມີບົດບາດສຳຄັນພາກສ່ວນນຶ່ງໃນຊີວິດເສດຖະກິດ ແລະ ການດຳລົງຊີວິດການເປັນຢູ່ຂອງຄອບຄົວຊາວກະສິກອນ.ຄາດຄະເນວ່າເກີນກ່ວາເຄິ່ງນຶ່ງຂອງອາຫານ ແລະ ລາຍຮັບຊາວກະສິກອນ ໄດ້ມາຈາກປ່າໄມ້.

4.2 ສປປ ລາວຍັງຮັ່ງມີ ທາງດ້ານຊັບພະຍາກອນ ປ່າໄມ້ຫຼາຍຊະນິດ. ປ່າໄມ້ເຫຼົ່ານີ້ກວມເອົາປະມານ 10.7 ລ້ານເຮັກຕາ ຫຼື 45% ຂອງເນື້ອທີ່ດິນ. ນອກຈາກນັ້ນຍັງມີ 10 ລ້ານເຮັກຕາຂອງປ່າຊຸດໂຊມ, ເນື້ອທີ່ປ່າໄມ້ປ້ອງ ແລະ ອື່ນໆ. ເປັນປະເທດໜຶ່ງ ໃນພື້ນທີ່ອາຊີຕາເວັນອອກທີ່ຍັງມີປ່າ ປ່າໄມ້ເປັນຈຳນວນຫຼວງຫຼາຍ. ລັດຖະບານໄດ້ສ້າງ ແລະ ປົວແປງປ່າສະຫງວນແຫ່ງຊາດ 20 ແຫ່ງ (NBCA) ກວມເນື້ອທີ່ທັງໝົດ 3.3 ລ້ານເຮັກຕາ.

4.3 ສປປ ລາວ ໄດ້ສ້າງກົດໝາຍປ້ອງກັນສິ່ງແວດລ້ອມ ຕາມດ້ວຍແຜນປະຕິບັດການດ້ານ ສິ່ງແວດລ້ອມ ແລະ ຂໍ້ກຳນົດພົນກະທົບຕໍ່ສິ່ງແວດລ້ອມ. ກົດໝາຍສິ່ງແວດລ້ອມມອບຢູ່ໃນຫຼັກການ, ກົດລະບຽບ ແລະ ມາດຕະການສຳລັບການຄຸ້ມຄອງ, ການຕິດຕາມ, ການຟື້ນຟູ ແລະ ປ້ອງກັນສິ່ງແວດລ້ອມ ຕາມຄວາມຮຽກຮ້ອງຕ້ອງການ ເພື່ອປ້ອງກັນຊັບພະຍາກອນ

ທຳມະຊາດ ແລະ ຄວາມຫຼາກຫຼາຍດ້ານຊີວະນາໆພັນ ແລະ ຮັບປະກັນການພັດທະນາເສດຖະກິດສັງຄົມແບບຍືນນານ. ແຜນປະຕິບັດການດ້ານສິ່ງແວດລ້ອມ ນອນຢູ່ໃນກອບຂອງນິຕິໃນ ແລະ ສະຖາບັນການຈັດຕັ້ງສຳລັບການຄຸ້ມຄອງສິ່ງແວດລ້ອມ ແລະ ຂັ້ນຕອນຂອງການປະເມີນຜົນກະທົບສິ່ງແວດລ້ອມ (EIA).

**ສະຖາບັນການຈັດຕັ້ງ**

4.4 ກະຊວງກະສິກຳ ແລະ ປ່າໄມ້ ແມ່ນອົງການຕົ້ນຕໍ ທີ່ຮັບຜິດຊອບການກະສິກຳ, ລ້ຽງສັດ, ປ່າໄມ້ ແລະ ການປະມົງ. ກະຊວງກະສິກຳ ແລະ ປ່າໄມ້ຮັບຜິດຊອບຕໍ່ຍຸດທະສາດ ແລະ ແຜນສຳລັບການຜະລິດກະສິກຳ ກົດໝາຍ ແລະ ຂໍ້ກຳນົດ ແລະ ການຄົ້ນຄວ້າດ້ານເຕັກນິກ ແລະ ວິທະຍາສາດກະສິກຳ. ນອກຈາກນັ້ນກໍ່ຍັງມີອົງການອື່ນໆທີ່ມີບົດບາດເຊັ່ນ :ຄະນະກຳມະການແຜນການ ແລະ ຮ່ວມມື, ຄະນະກຳມະການຮ່ວມມືລົງທຶນ, ກະຊວງການເງິນ, ກະຊວງການຄ້າ, ກະຊວງອຸດສາຫະກຳ ແລະ ຫັດຖະກຳ. ສະຫະພັນແມ່ຍິງລາວ ແມ່ນອົງການຈັດຕັ້ງມະຫາຊົນປະຕິບັດໂຄງການພັດທະນາຢູ່ລະດັບພາກສະໜາມສ່ວນໃຫຍ່ແມ່ນກິດຈະກຳຂອງແມ່ຍິງ ແລະ ການເງິນຂະໜາດນ້ອຍ.

4.4 ຢູ່ລະດັບທ້ອງຖິ່ນ,ແຂວງແມ່ນຫົວໜ່ວຍຫຼັກແຫຼ່ງໃນການປະຕິບັດກິດຈະກຳພັດທະນາຕ່າງໆ ທີ່ແມ່ນເຈົ້າແຂວງເປັນຜູ້ນຳພາ. ພະແນກ ແລະ ໜ່ວຍງານຕ່າງໆ ຕາມສາຍຂອງບັນດາກະຊວງໄດ້ໃຫ້ການຊ່ວຍເຫຼືອແກ່ເຈົ້າແຂວງ. ພະແນກກະສິກຳປ່າໄມ້ແຂວງຮັບຜິດຊອບໃນການວາງແຜນ ແລະ ບໍລິຫານກິດຈະກຳຕ່າງໆພາຍໃນແຂວງ. ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງຮັບຜິດຊອບໂດຍລັດຖະມົນຕີວ່າການກະຊວງກະສິກຳປ່າໄມ້ ແລະ ເຈົ້າແຂວງ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງແມ່ນຕິດຕາມການປູກຝັງ, ການສັກຢາປ້ອງກັນສັດ, ການກວດກາຊີ້ນ, ເກັບກຳສະຖິຕິ, ການກໍ່ສ້າງຊົນລະປະທານ. ໃນຂະແໜງຍ່ອຍດ້ານປ່າໄມ້, ພະນັກງານຮັບຜິດຊອບການກວດກາໂຮງງານປຸງແຕ່ງໄມ້, ຕິດຕາມຜົນຜະລິດດ້ານປ່າໄມ້ ແລະ ກວດກາ ແລະ ປ້ອງກັນປ່າໄມ້.ອຳນາດການປົກຄອງທ້ອງຖິ່ນບ້ານແນະນຳເຜີຍແຜ່ ແກ່ຊາວບ້ານພົວພັນເຖິງໂຄງການ ໃນການກະສິກຳ ແລະ ປ່າໄມ້. ການປົກຄອງບ້ານມີໜ້າທີ່ເກັບພາສີອາກອນພາຍໃຕ້ການດຳເນີນການແບ່ງຂັ້ນຮັບຜິດຊອບ (ກະຈາຍອຳນາດລົງສູ່ທ້ອງຖິ່ນ), ງົບປະມານການປົກຄອງບ້ານ ແລະ ຂັ້ນຕອນໃນການວາງແຜນອະນຸຍາດໃຫ້ບ້ານສ້າງແຜນຂອງຕົນເອງ ແລະ ງົບປະມານພາຍໃຕ້ ການກວດກາຂອງເຈົ້າໜ້າທີ່ ທ້ອງຖິ່ນຂອງເມືອງ. ອຳນາດປົກຄອງບ້ານ ມີໜ້າທີ່ກຳສະຖິຕິເໝືອນກັນ ໂດຍໄດ້ລາຍຮັບສະຖິຕິເປັນລາຍອາທິດ,ລາຍເດືອນ ແລະ ໄຕມາດ ໃຫ້ແກ່ເຈົ້າໜ້າທີ່ຂອງເມືອງ.

4.6 ຂັ້ນຕອນການແບ່ງຂັ້ນຄຸ້ມຄອງໄປສູ່ຮາກຖານທີ່ໄດ້ເລີ່ມຕົ້ນດ້ວຍດຳລັດຂອງນາຍົກລັດຖະມົນຕີປີ 2000 ມີຄວາມກ້າວໜ້າຢ່າງໄວວາ, ທ້ອງຖິ່ນ ໄດ້ຮັບອະນຸຍາດໃຫ້ຄວບຄຸມສັດສ່ວນການລົງທຶນຂອງລັດຫຼາຍຂຶ້ນ. ແຂວງໄດ້ຮັບພຽງແຕ່ 30% ຂອງສັດສ່ວນດັ່ງກ່າວ ໃນປີ 1998 ແຕ່ໃນປັດຈຸບັນເພີ່ມຂຶ້ນເຖິງ 70% ສຳລັບປີ 2001-02 ຂອງການເງິນປະຈຳປີ. ເປັນຢ່າງໃດກໍ່ຕາມຄວາມຮູ້ສາ ມາດຂອງພະນັກງານ ໃນການຄຸມຄອງງົບປະມານຢູ່ລະດັບທ້ອງຖິ່ນ ແມ່ນຍັງຈຳກັດຫຼາຍ.

**ການຄຸ້ມຄອງນຳໃຊ້ທີ່ດິນ.**

4.7 ເນື້ອທີ່ດິນທັງໝົດ ທົ່ວປະເທດຂອງ ສປປລາວ ເປັນຂອງລັດ ແຕ່ວ່າ ນັບແຕ່ທ້າຍຊຸມປີ 1980 ລັດຖະບານໄດ້ສ້າງບາດກ້າວດ້ານນິຕິໃນ ເພື່ອສ້າງສິດນຳໃຊ້ດິນ ຢ່າງກ້ວາງຂວາງ ແລະ ບຸກຄົນໄດ້ຮັບການຮັບປະກັນນຳໃຊ້ດິນ. ພາຍໃຕ້ກົດໝາຍປ່າໄມ້ຂອງປີ (1996) ແລະ ກົດໝາຍທີ່ດິນຂອງປີ (1999). ສິດນຳໃຊ້ທີ່ດິນສາມາດສືບທອດ, ມອບໂອນ, ຂາຍ ຫຼື ໃຫ້ເຊົ່າ ແລະ ຖືກຕ້ອງຕາມກົດໝາຍ ໂດຍລັດໄດ້ທຳການບັນທຶກມອບໂອນ ແລະ ຈ່າຍພາສີທີ່ດິນ. ຕາມຄວາມຮຽກຮ້ອງຕ້ອງການ ເພື່ອເຮັດໃຫ້ນຳໃຊ້ທີ່ດິນຢ່າງຍືນນານ, ສິດນຳໃຊ້ທີ່ດິນ ທາງການໄດ້ແບ່ງທີ່ດິນໃຫ້ແກ່ບຸກຄົນ ດ້ວຍຜ່ານຂັ້ນຕອນການແບ່ງທີ່ດິນ, ທີ່ໄດ້ປະຕິບັດມາຕັ້ງແຕ່ປີ 1994. ລັດຖະບານໄດ້ແຕ່ງຕັ້ງຄະນະຮັບຜິດຊອບຄຸ້ມຄອງທີ່ດິນລວມທັງການແບ່ງທີ່ດິນ ແກ່ກະຊວງທີ່ກ່ຽວຂ້ອງ ເຊັ່ນ ກະຊວງກະສິກຳ ແລະ ປ່າໄມ້ ແລະ ອຳນາດການປົກຄອງເມືອງ, ອົງການເຫຼົ່ານີ້ ຮັບຜິດຊອບ ຕໍ່ການອອກໃບຢັ້ງຢືນ ນຳໃຊ້ທີ່ດິນຊົ່ວຄາວ. ໃບຢັ້ງຢືນນຳໃຊ້ທີ່ດິນຊົ່ວຄາວ ຕິດພັນກັບການໃຫ້ສິດ ນຳໃຊ້ທີ່ດິນກະສິກຳ ຫຼື ປ່າໄມ້ ສຳລັບຊ່ວງໄລຍະ 3 ປີ. ໃນໄລຍະສຸດທ້າຍຂອງປີທີ 3, ຖ້າຫາກວ່າດິນໄດ້ຖືກນຳໃຊ້ຕົວຈິງ, ບຸກຄົນສາມາດສະເໜີຂໍໃບຕາດິນ ທີ່ເປັນຫຼັກຖານຕົ້ນຕໍ ສຳລັບສິດນຳໃຊ້ທີ່ດິນ ຖາວອນ.

4.8 ການເກັບພາສີທີ່ດິນກະສິກຳຢູ່ໃນ ອັດຕາລະດັບແຕ່ 3000 ກີບ/ເຮັກຕາ ສະເພາະທົ່ງຫຍ້າແປນ ທີ່ໄດ້ຮັບການບຸກເບີກເຖິງ 20,000 ກີບ/ເຮັກຕາ ຕໍ່ເນື້ອທີ່ທົ່ງນາທີ່ປະເປັນເຮື້ອ ໃນເຂດທົ່ງພຽງ. ຄະນະທີ່ຂະບວນການແບ່ງດິນດຳເນີນໄປຢ່າງຊ້າງ, ເນື້ອທີ່ປູກຝັງ ໄດ້ຮັບລາຍງານຢ່າງບໍ່ເຕັມຈຳນວນ ຍ້ອນຊາວກະສິກອນຫຼີກລ່ຽງການຈ່າຍຄ່າພາສີ. ປະສິດທິຜົນຂອງຕະຫຼາດທີ່ດິນ ແລະ ການຮັບປະກັນ ການຄອບຄອງທີ່ດິນເປັນອົງປະກອບ ສຳລັບຜົນຜະລິດໄລຍະຍາວ ແລະ ຄວາມຍືນນານຂອງພື້ນຖານຊັບພະຍາກອນດິນ. ໃນປະຈຸບັນ ໄດ້

ມີໂຄງການທົດລອງອອກໃບຕາດິນ ແລະ ສ້າງຕັ້ງການຈົດທະບຽນທີ່ດິນ ຢູ່ລະດັບແຂວງ ດ້ວຍ ໃນທີ່ສຸດ ກໍຈະເຮັດລະບົບການຈົດທະບຽນທີ່ດິນຂຶ້ນໃນທົ່ວປະເທດ.

4.9 ການຍົກຍ້າຍຕັ້ງຖິ່ນຖານໃໝ່ ກໍສັງເກດເຫັນທົ່ວທຸກກຸ່ມຂອງຊົນເຜົ່າໃນ ສປປລາວ. ພາຍໃຕ້ໂຄງການຍຸດຕິ ການເຮັດໄຮ່ແບບເລື່ອນຍ້າຍ, ເປົ້າໝາຍຂອງການຍົກຍ້າຍ ຕັ້ງຖິ່ນຖານໃໝ່ແມ່ນ ເພື່ອປ້ອງກັນປ່າໄມ້ ແລະ ພື້ນຖານຊັບພະຍາກອນທຳມະຊາດ ໂດຍຈັດໃຫ້ຍົກຍ້າຍໄປຕັ້ງຖິ່ນຖານຄົງທີ່ ແລະ ບ້ານໃໝ່ ສຳລັບບຸກຄົນທີ່ຖາງ ແລະ ຈູດປ່າ. ນັບແຕ່ປີ 1994, ລັດຖະບານກໍໄດ້ກຳນົດນະໂຍບາຍ ໃນການພັດທະນາເຂດຈຸດສຸມ ສຳລັບການພັດທະນາຊົນນະບົດ. ການພັດທະນາເຂດຈຸດສຸມ ບາງບ້ານກໍໄດ້ຍົກຍ້າຍໄປບ່ອນໃໝ່ ແລະ ໄດ້ປະກອບ ທີ່ດິນທຳກິນ ຫລາຍປະເພດໃຫ້ເກືອບທັງໝົດ.ໄດ້ມີການ ອາສາສະໝັກຍົກຍ້າຍ,ບ່ອນທີ່ມີດິນເຮັດນາ ໄດ້ເປັນສິ່ງຈູງໃຈຕົ້ນຕໍສຳລັບການຍົກຍ້າຍ. ໃນປັດຈຸບັນບໍ່ທັນມີນະໂຍບາຍຕໍ່ການຍົກຍ້າຍຕັ້ງຖິ່ນຖານໃໝ່ ແລະ ມີຄວາມຕ້ອງການສ້າງໂຄງປະກອບທາງດ້ານນິຕິໃນຂັ້ນ ແລະ ຮ່າງຂໍ້ແນະນຳຂອງລັດ ສຳລັບການຍົກຍ້າຍໂດຍສະເພາະໃນການອາສາສະໝັກການຍົກຍ້າຍຕັ້ງຖິ່ນຖານໃໝ່.

**ການພັດທະນາຊັບພະຍາກອນມະນຸດ.**

4.10 ແຜນງານຊັບພະຍາກອນມະນຸດ ຂອງກະຊວງກະສິກຳ ແລະ ປ່າໄມ້ໄດ້ສຸມໃສ່ການຝຶກອົບຮົມ ໃຫ້ມີພະນັກງານເຕັກນິກ ວິຊາການທີ່ມີຄວາມສາມາດ ແລະ ມີຄວາມຊ່ຽວຊານ ເພື່ອຊ່ວຍຄອບຄົວຊາວກະສິກອນ. ຍຸດທະສາດ ແມ່ນເພື່ອມີພະນັກງານວິຊາການຮອບດ້ານລະບົບກະສິກຳເມືອງ ຢູ່ລະດັບພື້ນຖານ ເພື່ອເຮັດການຄົ້ນຄ້ວານຳໃຊ້ ບົນພື້ນຖານການບໍລິການການສົ່ງເສີມ ແລະ ການຝຶກອົບຮົມແກ່ຊາວໄຮ່ ຊາວນາ ໃນດ້ານເຕັກໂນໂລຊີປັບເຂົ້າສະພາບ ຢ່າງຍືນນານ. ລະດັບການສຶກສາພາຍໃນປະເທດທັງໝົດ ແມ່ນຢູ່ໃນລະດັບຕ່ຳເຖິງ 60% ແລະ ມີຄວາມຕ້ອງການ ເພື່ອຍົກລະດັບການສຶກສາຂອງປະຊາຊົນໂດຍທົ່ວໄປ ແລະ ຊຸມຊົນກະສິກອນ ໂດຍສະເພາະ, ຖ້າວ່າເຕັກໂນໂລຊີກະສິກຳ ແລະ ວິທີການເຮັດຟາມແບບປັບປຸງ ໄດ້ຖືກນຳມາເຜີຍແຜ່ແກ່ຊາວກະສິກອນ.

4.11 ຂໍ້ຈຳກັດຕົ້ນຕໍ ແກ່ການພັດທະນາກະສິກຳ ໃນລາວ ແມ່ນຄວາມຮູ້ຄວາມສາມາດຂອງ ພະນັກງານຢູ່ພາຍໃນກະຊວງ ຢູ່ລະດັບແຂວງ ແລະ ລະດັບເມືອງຍັງຢູ່ໃນລະດັບຕ່ຳ, ໂດຍສະເພາະຢູ່ລະດັບທ້ອງຖິ່ນ. ການປະກອບພະນັກງານໃຫ້ແກ່ທ້ອງຖິ່ນ ແລະ ຂະແໜງການ ກໍບໍ່ສະໝ່ຳສະເໝີໃນແງ່ຂອງຈຳນວນ ແລະ ລະດັບການສຶກສາ. ບັນດາເມືອງພູດອຍມີພະນັກ

ງານໜ້ອຍທີ່ສຸດ ແລະ ມີພະນັກງານທີ່ມີການສຶກສາໜ້ອຍທີ່ສຸດ. ມີປະກົດການທີ່ພະນັກງານສ່ວນນຶ່ງ ບໍ່ຢາກໄປຢູ່ເຂດຫ່າງໄກ. ມີຫຼາຍຕົວເມືອງມີພະນັກງານບໍ່ເກີນ 10 ຄົນ ເພື່ອຮັບຜິດຊອບວຽກງານ ກະສິກຳ ແລະ ປ່າໄມ້ຮ່ວມທັງວຽກງານບໍລິຫານ ແລະ ພະນັກງານບັນຊີ. ການວິເຄາະການສະໜອງ ແລະ ຄວາມຕ້ອງການຂອງພະນັກງານກະຊວງກະສິກຳ ແລະ ປ່າໄມ້ໄດ້ດຳເນີນໃນປີ 1996 ໂດຍມີການເນັ້ນໜັກ ດ້ານການກະຈາຍ ພະນັກງານສົ່ງເສີມລະບົບການກະສິກຳ(FSEW) ແລະ ຊ່ຽວຊານສະເພາະດ້ານ(SMS) ພົບວ່າ ພະນັກງານລະດັບເມືອງບໍ່ພຽງພໍ 713 ຄົນ ແລະ ມີພະນັກງານສ່ວນເກີນ ຢູ່ລະດັບແຂວງ 227 ຄົນ. ສະພາບ ປີ2001 ສະແດງໃຫ້ເຫັນວ່າບໍ່ມີຫຍັງປ່ຽນແປງ. ນອກຈາກນັ້ນ ໂຄງການຝຶກອົບຮົມພະນັກງານ ທີ່ໄດ້ຮັບການຊ່ວຍເຫລືອຈາກສາກົນ ໄດ້ຮັບໃຊ້ຜົນປະໂຫຍດໃຫ້ແກ່ພະນັກງານຢູ່ສູນກາງ ຫລາຍກວ່າ ພະນັກງານຢູ່ ແຂວງ ແລະ ຢູ່ເມືອງ.

4.12 ສະຖາບັນຝຶກອົບຮົມທີ່ມີປັດຈຸບັນມີ ປະມານ 29 ແຫ່ງສ່ວນຫລາຍຢູ່ພາຍໃຕ້ ຄວາມຮັບຜິດຊອບຂອງສະຖາບັນຄົ້ນຄວ້າ ກະສິກຳປ່າໄມ້ (NAFRI). ເຖິງຢ່າງໃດກໍຕາມຍ້ອນບໍ່ມີລະບົບການປະສົມປະສານການສົ່ງເສີມ ແລະ ການຝຶກອົບຮົມ, ສະຖານທີ່ເຫຼົ່ານີ້ຍັງບໍ່ທັນໄດ້ນຳໃຊ້ຢ່າງເຕັມສ່ວນ. ໂຮງຮຽນກະສິກຳແລະ ປ່າໄມ້ຊັ້ນກາງ ສາມແຫ່ງທີ່ມີຢູ່ ຄາດວ່າຈະເປັນບ່ອນຝຶກອົບຮົມ ແລະ ໃຫ້ຄວາມຮູ້ແກ່ພະນັກງານສົ່ງເສີມ. ເຖິງຢ່າງໃດກໍຕາມຫຼັກສູດຂອງໂຮງຮຽນກະສິກຳ ແລະ ປ່າໄມ້ ສາມແຫ່ງນີ້ບໍ່ໄດ້ປະສານກັນເພື່ອຝຶກອົບຮົມແກ່ພະນັກງານສົ່ງເສີມ ນອກນັ້ນ ຍັງມີການເນັ້ນ ດ້ານທິດສະດີ ຫລາຍກວ່າພາກປະຕິບັດຕົວຈິງ. ໂຮງຮຽນຍັງຂາດນາຍຄູທີ່ມີຄຸນວຸດທິ, ຂາດຫ້ອງທົດລອງ ແລະ ເນື້ອທີ່ສຳລັບເຮັດພາກປະຕິບັດ. ບັນດາໂຮງຮຽນ ກໍພົບບັນຫາດ້ານງົບປະມານ ແລະ ໂຄງສ້າງພື້ນຖານພ້ອມສະຖານທີ່ບໍ່ພຽງພໍ.

ການປູກຝັງ

4.13 ສປປ ລາວ ໄດ້ຈັດເຂດອາກາດການກະເສດເປັນ 6 ເຂດອາກາດ-ນິເວດການກະເສດ(AEZ) . ດິນເກືອບທັງໝົດໃນສປປ ລາວເປັນດິນກົດ ຂາດແຮ່ທາດ ແລະ ອິນຊີວັດຖຸ. ເນື້ອທີ່ທັງໝົດທີ່ນຳໃຊ້ເຂົ້າໃນການກະສິກຳ ມີປະມານ 1.0 ລ້ານເຮັກຕາຮວມທັງດິນເຮື້ອ ອີງຕາມສະຖິຕິກະຊວງກະສິກຳ ແລະ ປ່າໄມ້.ເຖິງຢ່າງໃດກໍຕາມປະກົດວ່າມີຄວາມແຕກຕ່າງກັນຂອງຂໍ້ມູນ ສົມທຽບຮູບຖ່າຍທາງດາວທຽມ ທີ່ຄາດຄະເນວ່າເນື້ອທີ່ດິນກະສິກຳ, ຮວມທັງທົ່ງຫຍ້າເປັນ 1.8 ລ້ານເຮັກຕາ. ເຂົ້າເປັນພືດທີ່ພົ້ນເດັ່ນ ແລະ ກວມເອົາປະມານ 68% ຂອງເນື້ອທີ່ທຳການປູກຝັງ. ພືດລົ້ມລຸກ ແລະ ພືດຢືນຕົ້ນອື່ນໆກວມເອົາພຽງແຕ່ 9 %

ແລະ 8% ຕາມລຳດັບ ບົດບາດການພົ້ນເດັ່ນຂອງເຂົ້າ ໄດ້ຊີ້ໃຫ້ເຫັນວ່າ ກະສິກຳຍັງຢູ່ໃນລະດັບ ພໍລ້ຽງກຸ້ມຕົນເອງໃນເສດຖະກິດກະສິກຳ ຂອງສປປ ລາວ.

4.14 ລະບົບກະສິກຳຕົ້ນຕໍຂອງ ສປປ ລາວປະກອບມີ: (i) ລະບົບທົ່ງພຽງສະໜອງດ້ວຍນ້ຳຝົນ; (ii) ລະບົບທົ່ງພຽງມີລະບົບຊົນລະປະທານ; (iii) ລະບົບເນີນສູງ ແລະ ພູດອຍ; ແລະ (iv) ພູພຽງ. ໃນທົ່ງພຽງ, ເນື້ອທີ່ປູກຝັງທັງໝົດ ສຳລັບປູກເຂົ້າໃນລະດູຝົນ ແລະ ສຳລັບເປັນທົ່ງຫຍ້າລ້ຽງສັດໃນລະດູແລ້ງ. ລະບົບກະສິກຳໃນເຂດເນີນສູງ ແລະ ພູດອຍພົ້ນເດັ່ນດ້ວຍການຜະລິດພືດລະດູຝົນແຕ່ຢ່າງດຽວ ແລະ ເຂົ້າ ເປັນພືດທີ່ສຳຄັນທີ່ສຸດສ່ວນໃຫຍ່ແມ່ນເຮັດໄຮ່. ໃນລະບົບກະສິກຳຢູ່ພູພຽງໄດ້ປູກພືດເປັນສິນຄ້າ ແລະ ການເຮັດໄຮ່ມີທ່າອ່ຽງຫຼຸດລົງ. ພືດສິນຄ້າຕົ້ນຕໍ ແມ່ນ ກາເຟ, ຊາ, ໝາກໄມ້ໃຫ້ໝາກ ແລະ ຜັກ.

4.15 ການຜະລິດເຂົ້າສະເລ່ຍປະມານ 1.8 ລ້ານໂຕນຕໍ່ປີໃນໄລຍະປີ 1996 ເຖິງປີ 2000. ການຜະລິດເຂົ້າໄດ້ເພີ່ມຂຶ້ນຢ່າງແຂງແຮງໃນ 4 ປີ ຜ່ານມາ ສ່ວນໃຫຍ່ຍ້ອນການເພີ່ມຜະລິດຕະພາບ ແລະ ດ້ວຍການເຮັດນາແຊງເຊັ່ນດຽວ. ຜົນຜະລິດເຂົ້າໄຮ່ໄດ້ຫຼຸດຜ່ອນ ຍ້ອນການຫຼຸດລົງຂອງການເຮັດໄຮ່. ການຜະລິດຜັກໄດ້ເພີ່ມຂຶ້ນ ຢ່າງໄວວາໃນຊຸມປີຜ່ານມານີ້ ຕາມດ້ວຍອ້ອຍ, ກາເຟ,ສາລີ, ແລະ ຖົ່ວດິນ ຍ້ອນການຂະຫຍາຍເນື້ອທີ່ປູກຝັງ ແລະ ເພີ່ມຜະລິດຕະພາບຂອງການຜະລິດ ລັກສະນະການປູກຝັງຍັງເປັນ ແບບພື້ນເມືອງ ຄອບຄົວຊາວກະສິກອນ ເກືອບທັງໝົດນຳໃຊ້ແນວພັນພື້ນເມືອງ ແລະ ນຳໃຊ້ວິທີການປູກແບບພື້ນເມືອງ ທີ່ມີຜະລິດຕະພາບຕ່ຳ. ປະຊາຊົນເກືອບທັງໝົດໄດ້ເກັບແນວພັນຈາກການເກັບກ່ຽວຄັ້ງຜ່ານມາໄວ້ເອງ ແລະ ພຽງແຕ່ 30% ຂອງຊາວນານຳໃຊ້ແນວພັນປັບປຸງ. ການສະໜອງແນວພັນເຂົ້າປັບປຸງແຕ່ລະປີຈາກລະບົບຂະຫຍາຍແນວພັນເຂົ້າຂອງລັດ ປະມານ 500 ໂຕນ ຊຶ່ງພໍແຕ່ເນື້ອທີ່ປູກ 32,500 ເຮັກຕາ ຫຼື ປະມານ 7% ຂອງເນື້ອທີ່ນາລະດູຝົນ. ສຳລັບພືດອື່ນໆການສະໜອງແນວພັນປັບປຸງແມ່ນ ຈຳກັດ, ນອກຈາກການນຳເຂົ້າແນວພັນຜັກ. ການເຮັດການກະສິກຳສ່ວນໃຫຍ່ແມ່ນ ແຮງງານຂອງຊາວກະສິກອນ ແລະ ສັດລາກແກ່ ໃຊ້ຝຸ່ນເຄມີ ແລະ ສານເຄມີແມ່ນຂ້ອນຂ້າງຈຳກັດ.

4.16 ສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ແຫ່ງຊາດ (NAFRI) ຮັບຜິດຊອບການຄົ້ນຄ້ວາດ້ານກະສິກຳປ່າໄມ້ທັງໝົດ. ມາເຖິງປັດຈຸບັນການຄົ້ນຄ້ວາສຸມໃສ່ ເຂົ້າ ແລະ ປ່າໄມ້ ດ້ວຍການຊ່ວຍເຫຼືອຈາກສາກົນ (ໂຄງການລາວ-ອີຣີ ແລະ ໂຄງການປ່າໄມ້ ລາວ-ຊູແອດ). ການຄົ້ນຄ້ວາດ້ານພືດສິນຄ້າ, ການລ້ຽງສັດ ແລະ ການປະມົງ ແມ່ນຈຳກັດຫຼາຍ. ສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ແຫ່ງຊາດມີພະນັກງານ 336 ຄົນ. ມີຄວາມຕ້ອງການອັນຈຳເປັນ

ເພື່ອ ຍົກລະດັບຄວາມສາມາດ ຂອງພະນັກງານຄົ້ນຄ້ວາ ແລະ ການຂະຫຍາຍກິດຈະກຳການຄົ້ນຄ້ວາໄປທຸກພື້ນທີ່. ກອງສົ່ງເສີມກະສິກຳໄດ້ສ້າງຂຶ້ນໃນປີ 2000 ແລະ ຮັບຜິດຊອບສົ່ງເສີມລະບົບກະສິກຳ. ກອງສົ່ງເສີມກະສິກຳຈະຕ້ອງ ຊຸກຍູ້ຊ່ຽວຊານສະເພາະດ້ານ ຢູ່ລະດັບແຂວງ ແລະ ພະນັກງານສົ່ງເສີມຮອບດ້ານຢູ່ລະດັບເມືອງ. ກອງສົ່ງເສີມກະສິກຳຂາດເຂີນເຄື່ອງມືອຸປະກອນສົ່ງເສີມຄົບຊຸດ ເພື່ອດຳເນີນວຽກງານສົ່ງເສີມ ດ້ານປ່າໄມ້, ລ້ຽງສັດ ແລະ ການປະມົງ ພ້ອມນັ້ນຍັງຂາດພະນັກງານທີ່ໄດ້ຮັບການຝຶກອົບຮົມ. ມີຄວາມຕ້ອງການຝຶກອົບຮົມພະນັກງານສົ່ງເສີມ ດ້ານການວາງແຜນແບບມີສ່ວນຮ່ວມ, ການຝຶກອົບຮົມກຸ່ມ ແລະ ການເຮັດສາທິດພາກສະໜາມ ຊຶ່ງໃນປັດຈຸບັນເຂົາເຈົ້າສ່ວນໃຫຍ່ໄດ້ເຮັດວຽກຄຸ້ມຄອງບໍລິຫານຫລາຍກ່ວາສົ່ງເສີມ. ນອກຈາກນັ້ນ, ທຶນອຸປະກອນສຳລັບປະຕິບັດການກໍ່ຂາດແຄນເໝືອນກັນ. ອົງການສົ່ງເສີມກະສິກຳ ແລະ ປ່າໄມ້ (NAFEA ) –ໄດ້ສ້າງຕັ້ງຂຶ້ນໃນເດືອນສິງຫາ 2001 ທີ່ເປັນການຈັດຕັ້ງໃໝ່ ທີ່ກວມເອົາວຽກງານສົ່ງເສີມຂອງທຸກໆຂະແໜງການຍ່ອຍຖ້າຫຼຸບໃສ່ກອງສົ່ເສີມກະສະກຳເດີມ ( AEA ).

4.17 ຂໍ້ຈຳກັດຕົ້ນຕໍ ເພື່ອຜະລິດພືດ ແມ່ນການຂາດແນວພັນປັບປຸງ ແລະ ອຸປະກອນການປູກ, ຂາດຄວາມຮູ້ດ້ານເຕັກໂນໂລຊີ ເພື່ອການປັບປຸງການການຜະລິດ; ຂາດການເຂົ້າເຖິງສິນເຊື່ອ, ການເຂົ້າເຖິງຕະຫຼາດ ແລະ ຂາດວິທີການເກັບມ້ຽນແລະ ປຸງແຕ່ງຫຼັງເກັບກ່ຽວ. ເຖິງຢ່າງໃດກໍ່ຕາມ, ຍັງມີພືດທີ່ມີທ່າແຮງສຳລັບສົ່ງອອກ ແລະ /ຫຼື ສາມາດທົດແທນການນຳເຂົ້າດັ່ງໄດ້ມີການວິເຄາະ ສມຫຼຸບຜົນໄດ້ຮັບມີດັ່ງລຸ່ມນີ້:

| | |
|---|---|
| ພືດສວນ | :ສາລີ, ຖົ່ວ, ຖົ່ວເຫຼືອງ, ໝາກງາ, ດອກຕາເວັນ, ເຂົ້າຜ້າງ ແລະ ດອກຕາເວັນນ້ອຍ |
| ໄມ້ໃຫ້ໝາກ | :ໝາກກ້ຽງໃຫຍ່, ໝາກກ້ຽງນ້ອຍ, ໝາກກ້ຽງມັງດາລິນ, ໝາກກ້ຽງ, ໝາກເງາະ,ໝາກມ່ວງຫິມມະພານ, ໝາກລຳໄຍ ແລະ ໝາກຂາມ |
| ພືດອຸດສາຫະກຳ | :ກາເຟ, ອ້ອຍ, ຝ້າຍ ແລະ ລ້ຽງມ້ອນ. |

**ການລ້ຽງສັດ ແລະ ການປະມົງ**

4.18 ຂະແໜງລ້ຽງສັດມີບົດບາດສຳຄັນ ໃນການດຳລົງຊີວິດຂອງຊາວກະສິກອນ. ມັນສ້າງລາຍຮັບເກືອບເຄິ່ງນຶ່ງຂອງລາຍຮັບສະເລ່ຍຊາວກະສິກອນ ແລະ ເປັນແຫຼ່ງຂອງຄວາມຮັ່ງມີ ແລະ ການສະສົມທຶນຮອນ. ການລ້ຽງສັດຕົ້ນຕໍແມ່ນສ່ວນນຶ່ງຂອງລະບົບກະສິກຳປະສົມປະ

ສານຂອງຄອບຄົວໄດ້ພິຈາລະນາເຫັນວ່າມີທ່າແຮງໃນການເພີ່ມການລ້ຽງສັດ ແລະ ການສ້າງມູນຄ່າເພີ່ມ ດ້ວຍການສົ່ງອອກຕ່າງປະເທດ, ແຕ່ການຂະຫຍາຍການລ້ຽງສັດ ຕ້ອງການໃຫ້ມີໂຄງການຮ່ວມມື ແລະ ປະສານສົມທົບເພື່ອການປັບປຸງສຸກຂະພາບສັດ, ທາດອາຫານສັດ ແລະ ແນວພັນສັດ. ຊາວກະສິກອນປັດຈຸບັນປະເຊີນກັບຄວາມສູນເສຍຢ່າງໃຫຍ່ຫຼວງຍ້ອນພະຍາດສັດລະບາດ. ແຜນພັດທະນາການລ້ຽງສັດຂອງຊາວກະສິກອນ ມີເປົ້າໝາຍແນ່ໃສ່ຂະຫຍາຍຜົນຜະລິດ 300% ຮອດປີ 2020. ເຖິງແມ່ນວ່າ ການລ້ຽງສັດ ໄດ້ຂະຫຍາຍຕົວແບບຄົງທີ່ ແລະ ໄດ້ມີການຜະລິດຂະຫຍາຍຕົວແຕ່ລະປີ, ຍັງມີຫຼາຍຂໍ້ຈຳກັດ ເພື່ອສືບຕໍ່ພັດທະນາ. ຂໍ້ຈຳກັດເຫຼົ່ານີ້ພົວພັນເຖິງການຂາດຄວາມຮູ້ດ້ານການລະບາດ ຂອງພະຍາດສັດ, ການຂາດອາຫານໃນສັດລະດູແລ້ງ, ການຂາດເຂີນແນວພັນ, ການຂາດເຂີນການຊຸກຍູ້ການບໍລິຫານການຕະຫຼາດ ແລະ ລະບົບຂ່າວສານຕະຫຼາດ, ການສົ່ງເສີມການລ້ຽງສັດ ແລະ ການບໍລິການການປະສົມພັນທຽມ. ເຖິງຈະມີຂໍ້ຈຳກັດເຫຼົ່ານີ້ ສປປລາວ ຍັງມີເງື່ອນໄຂອັນດີ ໂດຍສະເພາະໃນການສົ່ງອອກ ໄປທີ່ຮຽກຮ້ອງຕ້ອງການ ໃຫ້ມີການປັບປຸງການຈັດລະດັບ ແລະ ລະບົບການຈັດເກຣດ, ຂໍ້ມູນຂ່າວສານດີຂື້ນ, ການຄວບຄຸມພະຍາດສັດດີຂື້ນ ແລະ ການບໍລິການຄວບຄຸມພະຍາດລະບາດ ແລະ ປັບປຸງລະບົບການຮັບປະກັນສຸກຂະພາບສັດ.

4.19 ປາແມ່ນແຫຼ່ງໂປຣຕີນ ສຳຄັນ ສຳລັບປະຊາຊົນລາວ ກວມເອົາປະມານ 40% ຂອງການບໍລິໂພກໂປຣຕີນໂດຍທົ່ວໄປ.. ຟາມລ້ຽງປາໄດ້ຈັດເປັນ (I) ຟາມລ້ຽງປາແບບທຳມະຊາດດ້ວຍຄວາມໜາແໜ້ນຕ່ຳປາສະຈາກການເກືອອາຫານ; (ii) ຟາມເຄິ່ງທຳມະຊາດດ້ວຍການເກືອອາຫານໜ້ອຍນຶ່ງ; ແລະ (iii) ຟາມລ້ຽງປາແບບກະເສດສຸມດ້ວຍຄວາມໜາແໜ້ນສູງດ້ວຍການເກືອອາຫານ. ສ່ວນໃຫຍ່ການລ້ຽງປາໃນລາວນອນຢູ່ໃນປະເພດທີ່ (I) ຫຼື (ii).ລັດຖະບານໄດ້ຊ່ວຍເຫຼືອຟາມລ້ຽງປາດ້ວຍການເຮັດສະຖານນີເບາະລູກປາ. ສະຖານີດັ່ງກ່າວນີ້ໄດ້ຈັດຕັ້ງປະຕິບັດຢູ່ 7 ແຂວງ. ເຖິງຢ່າງໃດກໍຕາມອັດຕາການຕາຍຂອງປາລ້ຽງຍັງສູງຫຼາຍ ພ້ອມນັ້ນ ເຕັກໂນໂລຊີທີ່ມີ ແລະ ມາດຖານການຂະຫຍາຍພັນຍັງຂາດແຄນ. ໂດຍສະເພາະໃນໄລຍະອະນຸບານ ເພື່ອຈັດສົ່ງລູກປາໃຫ້ແກ່ຜູ້ຜະລິດ. ລັດຖະບານໄດ້ມີແຜນການຂະຫຍາຍ ການລ້ຽງປາທີ່ໃຫຍ່ຫລວງ ທີ່ຕ້ອງການໃຫ້ມີວຄາມບຸກບືນຫລາຍ ເພາະເປົ້າໝາຍຕັ້ງໄວ້ແມ່ນໃຫ້ເພີ່ມຂຶ້ນ 3.6ເທື່ອ ຂອງຜົນຜະລິດຈາກລັບປັດຈຸບັນຮອດປີ 2020 ເຖິງຢ່າງໃດກໍຕາມ, ກະຊວງກະສິກຳ ແລະ ປ່າໄມ້ກໍຍັງຂາດຄວາມອາດສາມາດດ້ານເຕັກນິກ ເພື່ອສ້າງໂຄງການຊຸກຍູ້ການລ້ຽງປາ; ສປປລາວ ຍັງມີເງື່ອນໄຂແລະທ່າແຮງໃນ ການພັດທະນາ ລ້ຽງປາເພື່ອສົ່ງອອກ.

**ການເຮັດໄຮ່ແບບເຄື່ອນຍ້າຍ**

4.20 ການເຮັດໄຮ່ເຄື່ອນຍ້າຍ, ຕາມລະບົບການປູກພືດເນີນສູງແບບພື້ນເມືອງ ແມ່ນໄດ້ດຳເນີນຢູ່ 3 ຮູບແບບ: (i) ລະບົບເຮັດໄຮ່ພື້ນເມືອງແບບໝູນວຽນ; (ii) ລະບົບຖາງເຫຼົ່າອ່ອນ; ແລະ (iii) ລະບົບໝູນວຽນໄລຍະສັ້ນ. ເນື້ອທີ່ໄຮ່ ສ່ວນໃຫຍ່ຢູ່ບັນດາແຂວງທາງພາກເໜືອ ແລະ ພາກຕາເວັນອອກຂອງແຂວງພາກໃຕ້. ເນື້ອທີ່ພາຍໃຕ້ການເຮັດໄຮ່ເຄື່ອນນຍ້າຍທຳລາຍປ່າ ມີປະມານ 680,000ເຮັກຕາ ແລະ ເນື້ອທີ່ ທີ່ໃຊ້ສຳລັບທຸກຮູບແບບຂອງການເຮັດໄຮ່ມີປະມານ 3.2ລ້ານເຮັກຕາຫຼື13% ຂອງເນື້ອທີ່ດິນ. ຈຳນວນຄອບຄົວທີ່ເຮັດໄຮ່ໃນປີ2000 ມີຢູ່ປະມານ340,000 ຫຼື ຖ້າທຽບໃສ່ປະຊາກອນປະມານມີ 2.06ລ້ານຄົນ (39%ຂອງພົນລະເມືອງທັງໝົດ).

4.21 ໂຄງການໄລຍະຜ່ານມາ ແລະ ກຳລັງດຳເນີນໃນປັດຈຸບັນໄດ້ອອກແບບ ແລະ ຈັດຕັ້ງປະຕິບັດເພື່ອອຳນວຍຄວາມສະດວກ ໃຫ້ແກ່ການຢຸດຕິການຖາງປ່າເຮັດໄຮ່ ດ້ວຍການພັດທະນາລະບົບນຳໃຊ້ທີ່ດິນຍືນນານ ຄຽງຄູ່ກັບການອະນຸລັກ ແລະ ລະບົບກະເສດ-ປ່າໄມ້ປະສົມປະສານ. ເປົ້າໝາຍ ແມ່ນເພື່ອປ່ຽນຈາກການເຮັດໄຮ່ ສູ່ ລະບົບການເຮັດກະສິກຳ ແລະ ການດຳລົງຊີວິດຄົງທີ່. ໂຄງການທີ່ຊ່ວຍຊຸກຍູ້ສະໜັບສະໜູນກອມເອົາການແບ່ງດິນແບ່ງປ່າ, ແລະ ການແນະນຳ ນຳໃຊ້ດິນ ໃນລະບົບກະເສດ-ປ່າໄມ້ປະສົມປະສານ, ລະບົບການຄຸ້ມຄອງເຄື່ອງປ່າຂອງດົງ, ແລະ ພັດທະນາການທັດສະກຳຊາວບ້ານເຕັກນິກການກະເສດ-ປ່າໄມ້ປະສົມປະສານໄດ້ເອົາມານຳໃຊ້ໃນ ສປປລາວ ຜ່ານໂຄງການເຫຼົ່ານີ້. ນອກຈາກນັ້ນ, ລະດັບຄວາມ ຫຼາກ ຫຼາຍອຸດົມສົມບູນຂອງເຄື່ອງປ່າຂອງດົງ, ທີ່ລວມມີປໍສາ, ໝາກແໜ່ງ, ນ້ຳມັນຍາງ, ຫວາຍ ແລະ ໄມ້ປ້ອງ ໄດ້ຖືກເກັບກູ້ ແລະ ນຳໃຊ້ສາລະພັດຢ່າງສຳລັບຕາມຄວາມຕ້ອງການຂອງຄອບຄົວ ແລະ ນອກນັ້ນຍັງມີ ສິ່ງອອກອີກດ້ວຍ. ຕົ້ນໄມ້ ແລະ ປ່າໄມ້ເປັນອົງປະກອບທີ່ສຳຄັນຂອງລະບົບການເຮັດຟາມ ແລະ ເປັນແກ່ນສານສຳລັບການດຳລົງຊີວິດໃນເຂດພື້ນທີ່ເຮັດໄຮ່. ເປັນໂຄງການທີ່ມີທ່າແຮງສ້າງລາຍຮັບໃຫ້ແກ່ຄອບຄົວຊາວກະສິກອນ

**ການຕະຫຼາດ ແລະ ການປຸງແຕ່ງ**

4.22 ລະບົບການຕະຫຼາດສ່ວນໃຫຍ່ຍັງບໍ່ທັນພັດທະນາ ແລະ ຍັງຕາມຄອງເດີມເປັນສ່ວນໃຫຍ່ ຍ້ອນອົງປະກອບການເຮັດຟາມຍັງມີລັກສະນະກຸ້ມຕົນເອງນຳເອົາບາງສ່ວນເກີນ ທີ່ເຂົາເຈົ້າຜະລິດສູ່ຕະຫຼາດທ້ອງຖິ່ນ ໃນຂະນະທີ່ຊາວກະສິກອນລະດັບກາງ ແລະ ລະດັບໃຫຍ່ຂາຍໃຫ້ແກ່ພໍ່ຄ້າທີ່ລົງເຖິງບ້ານໃນຊ່ວງໄລຍະການເກັບກ່ຽວ. ການແຈກຢາຍພາຍໃນພື້ນທີ່

ແມ່ນຈຳກັດນອກຈາກບາງປະເພດໝາກໄມ້ ແລະ ປາ. ລາຄາໃນຕະຫຼາດພາຍໃນແຕ່ລະເຂດ ມີການປ່ຽນແປງໃຫ້ເຫັນຢ່າງຈະແຈ້ງ ແລະ ເປັນຜົນສະທ້ອນ ມາຈາກຄວາມຂາດເຂີນດ້ານຂ່າວສານຂໍ້ມູນຕະຫຼາດ, ຂາດຄວາມສະດວກໃນການຂົນສົ່ງ, ເສັ້ນທາງເຂົ້າສູ່ຕະຫຼາດບໍ່ສະດວກ ແລະ ພາສີໃນເຂດ.ລະບົບການຕະຫຼາດແມ່ນ ຂອດນຶ່ງທີ່ກ້າວໜ້າຂຶ້ນໜ້ອຍນຶ່ງຕໍ່ກັບການເປີດເສລີ ແລະ ການກ້າວເຂົ້າສູ່ເສດຖະກິດຕະຫຼາດ. ບໍລິສັດສະບຽງອາຫານຍັງມີສ່ວນແບ່ງຂອງຕະຫຼາດເຂົ້າເປືອກ ແລະ ປະກອບມີສາງເກັບມ້ຽນ ແລະ ໂຮງສີເຂົ້າ. ພໍ່ຄ້າເອກະຊົນ/ ມີການມີພຽງແຕ່ 30% ຂອງສ່ວນແບ່ງຂອງຕະຫລາດ ແລະ ແຂ່ງຂັນກັບບໍລິສັດສະບຽງ.

4.23 ຄວາຍເປັນ, ງົວເປັນ,ໝູເປັນ ແມ່ນຖືກເກັບຊື້ຈາກຊາວກະສິກອນໂດຍ ບໍລິສັດສະບຽງ ຫຼື ມີການ ແລະ ສົ່ງໄປໂຮງຂ້າສັດ ທີ່ເປັນຜູ້ຂາຍຊີ້ນໃນຮ້ານອາຫານ, ຕະຫຼາດຂາຍຍ່ອຍ, ໂຮງແຮມ, ໂຮງ ໝໍ ໆລໆ..., ງົວ, ຄວາຍ, ໝູເປັນ ຖືກສົ່ງອອກໄປປະເທດໄທເຖິງແມ່ນວ່າບໍ່ເປັນການຄ້າທາງການ ແຕ່ຫຼາຍສົມຄວນ. ໄກ່ຖືກຂ້າໂດຍກົງຈາກແມ່ຄ້າ ແລະ ຊາວກະສິກອນ ແລະ ຂາຍໃນຕະຫຼາດທ້ອງຖິ່ນ. ປັດຈຸບັນມີຕະຫຼາດຂາຍຍ່ອຍຢູ່ 444 ແຫ່ງໃນສປປລາວ. ໃນນີ້ 110 ແຫ່ງຄຸ້ມຄອງໂດຍລັດ, 73 ແຫ່ງຄຸ້ມຄອງໂດຍແຂວງ ແລະ ເມືອງ ແລະສ່ວນເຫຼືອຄຸ້ມຄອງໂດຍບ້ານ. ຫ້ອງເຢັນ ແລະ ຕູ້ເຢັນສຳລັບຜົນຜະລິດທີ່ເນົ່າເປື່ອຍໄວ ຍັງບໍ່ທັນໄດ້ນຳມາໃຊ້ ແຕ່ກໍຍັງນຳໃຊ້ນ້ຳກ້ອນເຕັ່ງເຊັ່ງປາໃນຕະຫຼາດໃຫຍ່.

4.24 ຍັງບໍ່ທັນໄດ້ມີ ການບໍລິການຂ່າວສານຂໍ້ມູນຕະຫຼາດໃນສປປລາວ ທັງຍັງບໍ່ທັນມີຂ່າວຂໍ້ມູນອອກໂທລະພາບ ຫຼື ລາຍການວິທະຍຸ ຫຼື ໜັງສືພິມສືມວນຊົນ. ແຫຼ່ງຂໍ້ມູນການຂາຍຢູ່ຕະຫຼາດ ແມ່ນມາຈາກພໍ່ຄ້າແມ່ຄ້າ ແລະ ບໍລິສັດສະບຽງ ຍ້ອນການຜະລິດຜັກ ແລະ ໝາກໄມ້ໄດ້ມີຄວາມເຕີບໂຕຂຶ້ນ, ການເປີດກ້ວາງຕະຫຼາດ, ຜັກ ແລະ ໝາກໄມ້, ຈຶ່ງມີຄວາມຈຳເປັນໃນການປັບປຸງຕະຫຼາດ. ຕໍ່ກັບບັນຫາດັ່ງກ່າວນີ້ຈຶ່ງມີຄວາມຈຳເປັນສ້າງລະບົບຂ່າວສານຂໍ້ມູນເພື່ອລາຍງານຢ່າງເປັນປົກກະຕິດ້ານລາຄາ ແລະ ຂໍ້ມູນ ມູນຄ່າ ແລະ ກະແສບໍລິມາດຂອງສິນຄ້າ. ລະບົບຂອງຕະຫຼາດໃນເມືອງໃຫຍ່ແມ່ນບໍ່ມີ ແລະ ພໍ່ຄ້າແມ່ຄ້າໄດ້ເຮັດໃນເງື່ອນໄຂແບບບໍ່ມີສຸຂະອານາໄມ ແບບເປີດແປນຂ້າງນອກ ດ້ວຍລະບົບລະບາຍນ້ຳເປື້ອນອັນບໍ່ເໝາະສົມ. ລັກຊະນະດັ່ງກ່າວນີ້ໄດ້ຜັກດັນໃຫ້ສ້າງຕະຫຼາດຂາຍຍົກໃນຕົວເມືອງໃຫຍ່, ແລະ ລົບລ້າງ.ຂໍ້ກຳນົດກົດລະບຽບ ແລະ ໄມ້ກ້ານຕ່າງໆສູ່ວິທີການແຂ່ງຂັນຂອງຕະຫຼາດຢ່າງເສລີ

ການເງີນຊົນນະບົດ.

4.25 ແຫຼ່ງພື້ນຖານຂອງສິນເຊື່ອ ໃຫ້ແກ່ຄອບຄົວຊົນນະບົດແມ່ນຮັບຈາກພາຍໃນຄອບຄົວເອງ, ເພື່ອນຝູງ ແລະ ຄອບຄົວຍາດຕິພີ່ນ້ອງຢູ່ໄກ້. ສະຖາບັນການເງິນທີ່ບໍ່ເປັນທາງການກວມເອົາພຽງແຕ່ 15% ຂອງການໃຫ້ຢືມດ້ວຍດອກເບ້ຍໃນລະດັບຈາກ 42 - 73% ຕໍ່ປີ. ສະຖາບັນການເງິນດັ່ງກ່າວນີ້ກວມທັງທຶນໝູນວຽນຂອງບ້ານ (VRFs) ແລະ ເງິນຫວຍສັບປ່ຽນກັນ. VRF ແມ່ນສະຖາບັນການເງິນຂອງທ້ອງຖິ່ນ ແລະ ເງິນກູ້ປະເພດໜຶ່ງ VRF ກວມປະມານ 15% ຂອງໝູ່ບ້ານໃນ ສປປລາວ ທັງໝົດ. ປະຈຸບັນມີ VRF ຈຳນວນ 1640 ອັນ ໂດຍທົ່ວໄປແລ້ວຮັບທຶນຈາກ ຫຼື ການຊ່ວຍເຫຼືອສາກົນ ອົງການບໍ່ແມ່ນລັດຖະບານ NGO ແລະ ກວມລວມທັງທະນາຄານເຂົ້າກ່ວາ 1000 ແຫ່ງ ທີ່ມີຢູ່ເຖິງແມ່ນວ່າທຶນໝູນວຽນດັ່ງກ່າວໄດ້ຊ່ວຍການພັດທະນາຊຸມຊົນ, ທຶນໝູນວຽນບໍ່ໄດ້ມີໜ້າຕໍ່ເນື່ອງ ແລະ ຈະໝົດເວລາທີ່ກຳນົດອາຍຸຂອງໂຄງການໄດ້ໝົດໄປ. ການເສື່ອມລົງຂອງຖານະການເງິນ ທຶນໝູນວຽນສືບເນື່ອງມາຈາກຊັບສົມບັດຂອງເຂົາເຈົ້າໝົດໄປເປັນບາງສ່ວນ ເພາະວ່າອັດຕາດອກເບ້ຍຕ່ຳກ່ວາອັດຕາເງິນເຟີ້ ແລະ ບໍ່ໄດ້ກວມເອົາທັງໝົດທຸກຄ່າຂອງການລົງທຶນ ແລະ ເພາະວ່າເງິນກູ້ສ່ວນຫຼວງຫຼາຍບໍ່ໄດ້ຊຳລະຄືນ ເຖິງແນວໃດກໍ່ຕາມຍັງມີ ທຶນໝູນວຽນ ຈຳນວນ ນຶ່ງທີ່ສາມາດເຖິງມືຂອງຜູ້ກູ້ຢືມຂະໜາດນ້ອຍ ເພາະວ່າສະຖານທີ່ຕັ້ງຊົນນະບົດຂອງເຂົາເຈົ້າ, ແລະ ໄດ້ສ້າງ ການເປັນເຈົ້າຂອງທ້ອງຖິ່ນ ແລະ ສ້າງຄວາມສິ້ນເຄີຍ ຕໍ່ການກູ້ຢືມໃຫ້ຊາວບ້ານ.

4.26. ລະບົບການເງິນເປັນທາງການ ປະກອບດ້ວຍທະນາຄານ ແຫ່ງສປປລາວ; ທະນາຄານທຸລະກິດຂອງລັດສາມແຫ່ງ, ທະນາຄານສົ່ງເສີມກະສິກຳລັດຄຸ້ມຄອງສະເພາະ (ທກສ); ທະນາຄານຮ່ວມມື 2 ແຫ່ງ; ແລະ ສາຂາຂອງທະນາຄານຂອງຕ່າງປະເທດຈຳນວນນຶ່ງ. ສະຖາບັນສິນເຊື່ອໃນ ສປປລາວ ຫາກໍ່ມີປະຫວັດມ່ຽງມານີ້ ແລະ ຢູ່ໃນຊ່ວງຕົ້ນຂອງການພັດທະນາ. ທະນາຄານທຸລະກິດຂອງລັດ ມີຖານະດ້ານການເງິນອ່ອນແອພ້ອມທັງມີຜູ້ຊ່ຽວຊານ ແລະ ພະນັກງານຈຳກັດ. ທສກ ໄດ້ຕັ້ງຂຶ້ນໃນເດືອນມິຖຸນາ 1993 ແລະ ປັດຈຸບັນເປັນສະຖາບັນຕົ້ນຕໍ ທີ່ໃຫ້ການເງິນຊົນນະບົດ. ທສກ ແມ່ນທະນາຄານລັດຖະບານຄຸ້ມຄອງໂດຍຕົງ, ແລະ ສາມາດບໍລິການໝູ່ບ້ານໄດ້ 15% (ປະມານ 3000 ບ້ານ) ມີຄອບຄົວ 14% ຂອງຄອບຄົວທັງໝົດ. ທສກ ໄດ້ເລີ່ມຕົ້ນໃຫ້ກູ້ຢືມໃນປີ 1994 ໂດຍນຳໃຊ້ວິທີການຕັ້ງກຸ່ມສິນເຊື່ອທີ່ມີກຸ່ມເປັນຫລັກຄ້ຳປະກັນເປັນສິ່ງຄ້ຳປະກັນ. ຍ້ອນມີຕາໜ່າງສາຂາ ແລະ ໜ່ວຍບໍລິການຈຳກັດ,. ຖານະຂອງທະນາຄານ ແມ່ນຂ້ອນຂ້າງຕ່ຳ ແລະ ສ່ວນຫຼາຍແຫຼ່ງທຶນແມ່ນທະນາຄານກາງສະໜອງໃຫ້ປະຈຳປີ ແລະ ຈຳນວນໜ້ອຍນຶ່ງ ແມ່ນມາຈາກການຊ່ວຍເຫຼືອຈາກສາກົນເປັນສິນເຊື່ອສອງສົ້ນ. ທສກ ປັດຈຸບັນໄດ້ປ່ອຍເງິນກູ້ເປັນໄລຍະຍາວ ແລະ ໄລຍະກາງລະດັບ 7%-8% ແລະ ເງິນກູ້ໄລຍະສັ້ນ 8% ຊຶ່ງຕ່ຳກ່ວາອັດຕາ

ດອກເບ້ຍໃນຕະຫຼາດທີ່ຢູ່ໃນລະດັບ 16 - 20%. ການອຸດໜູນອັດຕາດອກເບ້ຍເຮັດໃຫ້ເງິນກູ້ຈາກທະນາຄານອື່ນ ບໍ່ໄດ້ດຶງດູດແກ່ຜູ້ຢືມ ແລະ ເປັນຜົນກະທົບແບບໄລຍະຍາວໃຫ້ແກ່ການເງິນຊົນນະບົດ ແລະ ຂະແໜງກະສິກຳ. ໃນປັດຈຸບັນການສຶກສາ ສະພາບທຸລະກິດ ແລະ ການເງິນຂອງ ທສກ ກຳລັງປະຕິບັດກັນຢູ່ ແລະ ການແນະນຳ ການປັບປຸງທຸກແງ່ມູມຂອງການເຄື່ອນໄຫວຂອງ ທສກ ຈະສຳເລັດໃນທ້າຍປີ 2001. ໃນເວລາດຽວກັນນັ້ນ ໄດ້ມີການຊ່ວຍເຫຼືອດ້ານວິຊາການຈາກສາກົນ ເພື່ອໃຫ້ຄຳເຫັນສຳລັບປັບປຸງການເຄື່ອນໄຫວຂອງການຂອງທະນາຄານການທຸລະກິດ ຄຽງຄູ່ກັບແນວຄິດລິເລີ່ມເຫຼົ່ານີ້, ຍັງມີໂຄງການດ້ານການເງິນຂະໜາດນ້ອຍ ກຳລັງປະຕິບັດຢູ່ 3 ແຂວງ. ໂຄງການມີເປົ້າໝາຍສ້າງແຫຼ່ງທຶນ ສິນເຊື່ອທາງການຂອງການເງິນຂະໜານ້ອຍ ແລະ ຊຸກຍູ້ການຝຶກອົບຮົມຂອງພະນັກງານ ສະຖາບັນບໍລິການການເງິນຂະໜາດນ້ອຍ ແລະ ໃຫ້ການຊ່ວຍເຫຼືອທຶນ ສຳລັບສະຖາບັນການເງິນຂະໜາດນ້ອຍແຫ່ງໃໝ່.

**ພັດທະນາຊົນນະບົດ**

4.27. ນັບແຕ່ປີ 1994 ລັດຖະບານ ສປປລາວ ໄດ້ຈັດຕັ້ງໃຫ້ປະຕິບັດແຜນງານ ພັດທະນາຊົນນະບົດ ຕາມແນວຄວາມຄິດພັດທະນາ ເຂດຈຸດສຸມ ໂດຍມີນິຍາມ ເຂດຈຸດສຸມເປັນ "ໃຈກາງການປ່ຽນແປງໃໝ່ ແລະ ການຮຽນຮູ້" ຂອງການພັດທະນາ ຊົນນະບົດ. ເປົ້າໝາຍຕົ້ນຕໍ ຂອງການພັດທະນາຊົນນະບົດ ແມ່ນການລຶບລ້າງຄວາມທຸກຍາກ ໃນເຂດຫ່າງໄກສອກຫລີກ ໂດຍການວາງແຜນການ ແຕ່ຖານຂຶ້ນເທິງ. ໃນປີ 1994 ຄະນະກຳມະການຊີ້ນຳພັດທະນາຊົນນະບົດ ໄດ້ຖືກສ້າງຂຶ້ນ ພາຍໃຕ້ອົງການຈັດຕັ້ງ ຂອງຫ້ອງການ ນາຍົກລັດຖະມົນຕີ ພ້ອມນັ້ນ ຍັງໄດ້ຈັດຕັ້ງຄະນະຊີ້ນຳ ພັດທະນາຊົນນະບົດ ລະດັບແຂວງເພື່ອປະສານງານ ວຽກງານຕ່າງໆຂອງບັນດາກະຊວງ ຖະບວງກົມ. ເຂດຈຸດສຸມການພັດທະນາໄດ້ຖືກຄັດເລືອກ ແລະນຳສະເໜີໂດຍ ອຳນາດການປົກຄອງແຂວງ ຕາມເງື່ອນໄຂ (I) ຄວາມຮີບດ່ວນ ໃນການລຶບລ້າງຄວາມທຸກຍາກ; (ii) ເຂດເນື້ອທີ່ທີ່ມີເງື່ອນໄຂ ໃນການລົງທຶນຕາມທິດຂະຫຍາຍ ເສົາຄ້ຳ ການພັດທະນາ; ແລະ (iii) ເຂດທີ່ມີຄວາມສ່ຽງໄພເຊັ່ນ: ເຂດປູກຝິ່ນ, ເຂດມີລະເບີດຍັງບໍ່ທັນແຕກ ແລະ ເຂດນ້ຳຖ້ວມເປັນປະຈຳ.

4.28. ໂຄງການພັດທະນາຊົນນະບົດ ສຳລັບປີ 1996-2000 ໄດ້ກຳນົດເຂດຈຸດສຸມ 87 ແຫ່ງ ແລະ ໄດ້ຄາດວາງ ການລົງທຶນໃສ່ເຂດດັ່ງກ່າວ 154 ຕື້ ກີບ (30.8 ຕື້ກີບ ຕໍ່ປີ ໂດຍສະເລ່ຍ). ເປັນຢ່າງໃດກໍ່ຕາມ, ການໃຊ້ຈ່າຍໃນປີ 1995/96 ແລະ 1996/97 ແມ່ນມີນ້ອຍກ່ວາ

ຄວາມຄາດຫວັງ ມີພຽງແຕ່ 1.1 -9.76 ຕື້ກີບ ເປັນອັນດັບ. ຍ້ອນຄວາມຈຳກັດດ້ານງົບປະມານເຂດຈຸດສຸມ ແຕ່ລະແຫ່ງບໍ່ໄດ້ຮັບການພັດທະນາ ເທົ່າທີ່ຄວນ ແລະ ປະກອບດ້ວຍພຽງແຕ່ 59 ແຫ່ງ ທີ່ກວມເອົາ 948 ໝູ່ບ້ານ ແລະ 321.800 ຄົນ ໃນເດືອນກຸມພາ 2001. ວຽກງານຕົ້ນຕໍ ໃນການສ້າງສາເຂດຈຸດສຸມ ປະກອບດ້ວຍການກໍ່ສ້າງ ໂຄງຮ່າງ ພື້ນຖານດ້ານເສດຖະກິດ ສັງຄົມ ທີ່ປະກອບມີລະບົບ ຊົນລະປະທານ ໂຮງຮຽນ, ສຸກສາລາ ໂຮງໝໍ, ເສັ້ນທາງ, ນ້ຳສະອາດ ແລະ ອື່ນໆ. ນອກຈາກເຂດຈຸດສຸມ 59 ແຫ່ງທີ່ມີຢູ່ນັ້ນ ຍັງມີກິດຈະກຳພັດທະນາຊົນນະບົດ ທີ່ໄດ້ປະຕິບັດ ຄ້າຍຄືກັນໃນລະດັບແຂວງ ໂດຍນຳໃຊ້ງົບປະມານຂອງແຂວງ ເອງຫລືວ່າ ຈາກສູນກາງ. ໂຄງການດັ່ງກ່າວ ໄດ້ຮັບການຊ່ວຍເຫລືອ ຈາກສາກົນ ຈຳນວນໜຶ່ງ ໂດຍສະເພາະຈາກອົງການ ບໍ່ແມ່ນລັດຖະບານ. ເປັນຢ່າງໃດກໍ່ຕາມຄວາມຄືບໜ້າ ແລະ ຜົນຮັບດ້ານການພັດທະນາ ເຂດຈຸດສຸມດັ່ງກ່າວແມ່ນບໍ່ມີຂໍ້ມູນ. ໂຄງການພັດທະນາຊົນນະບົດ ຕາມແນວຄວາມຄິດ ພັດທະນາເຂດຈຸດສຸມ ເປັນການອອກແຮງທີ່ມີຜົນຂອງ ສປປລາວ, ເຖິງຢ່າງໃດຍັງມີຫລາຍ ບັນຫາທີ່ຈະຕ້ອງໄດ້ແກ້ໄຂ ຕາມບົດຮຽນ 5 ປີຜ່ານມາເຊັ່ນ: (I ) ການຄັດເລືອກເຂດຈຸດສຸມ ຈະມີລັກສະນະການເມືອງຫລາຍກ່ວາ (ii) ພາລະບົດບາດ ຂອງຄະນະນຳກຳມະການ ຊີ້ນຳພັດທະນາຊົນນະບົດ ບໍ່ຈະແຈ້ງ; (iii) ການກວດກາຕິດຕາມ ແລະ ປະເມີນຜົນໂຄງການພັດທະນາ ຊົນນະບົດ ແມ່ນບໍ່ໄດ້ຖືກພັດທະນາຂຶ້ນເທື່ອ; ແລະ (iv) ຂີດຄວາມສາມາດ ຂອງພະນັກງານ ແລະ ອົງການຈັດຕັ້ງທ້ອງຖິ່ນ ຍັງມີຄວາມຈຳກັດຫຼາຍ.

4.29. ຖ້າຫລຽວເບິ່ງເນື້ອທີ່ຫ່າງໄກສອກຫລີກ ໃນປະເທດມີຫລາຍ, ມີຫລາຍຊຸມຊົນ ຊົນນະບົດຂາດເຂີນ ສາທາລະນະອຸປະໂພກ ສັງຄົມ ພື້ນຖານ ແລະ ຂາດຖະໜົນຫົນທາງ ສິ່ງດັ່ງກ່າວໄດ້ເປັນອົງປະກອບ ໃນແຜນງານພັດທະນາ ຂອງລັດຖະບານ. ດັ່ງນັ້ນ, ຈະຕ້ອງໄດ້ໃຫ້ບູລິມະສິດ ຕໍ່ວຽກງານນີ້. ເສັ້ນທາງຊົນນະບົດ ມີສະພາບຕ່ຳ ແລະ ບໍ່ສາມາດສັນຈອນໄດ້ໃນລະດູຝົນ. ການສະໜອງນ້ຳສະອາດ ໃນຊົນນະບົດ ເປັນປັດໃຈສຳຄັນ ອີກອັນໜຶ່ງເພື່ອຍົກລະດັບຊີວິດການເປັນຢູ່ ໃນຊົນນະບົດ. ໃນດ້ານນີ້ ໄດ້ມີຄວາມກ້າວໜ້າຫລາຍ ໃນໄລຍະທົດສະວັດ 1990, 62% ຂອງເຂດຊົນນະບົດ ມີນ້ຳສະອາດໃຊ້ ແລະ ບໍລິໂພກ. ມີຄວາມຕ້ອງການ ຂະຫຍາຍຕາໜ່າງ ໄຟຟ້າ ໄປຊົນນະບົດໃນປັດຈຸບັນ ມີພຽງ 10% ຂອງເຂດຊົນນະບົດ ທີ່ໄດ້ຮັບໄຟຟ້າຈາກຕະຄ່າຍແຫ່ງຊາດ.

**ຊົນລະປະທານ**

4.30. ເນື້ອທີ່ຮັບນ້ຳຊົນລະປະທານມີປະມານ 295,000 ເຮັກຕາ ໃນລະດູຝົນ ແລະ 197,000 ເຮັກຕາ ໃນລະດູແລ້ງ. ການພັດທະນາຊົນລະປະທານ ໄດ້ສຸມໃສ່ສາມເຂດພື້ນທີ່ - ເຂດພູດອຍພາກເໜືອ ທົ່ງພຽງວຽງຈັນຊຶ່ງມີຫຼາຍວຽກທີ່ໄດ້ດຳເນີນ ແລະ ທົ່ງພຽງໃຫຍ່ລຽບຕາມລຳແມ່ນ້ຳຂອງ ໄດ້ຮັບຜົນປະໂຫຍດອັນໃຫຍ່ຫຼວງຈາກການປູກຝັງລະດູແລ້ງນັບແຕ່ປີ 1996 ດ້ວຍການຈັດຕັ້ງປະຕິບັດໂຄງການຄຸ້ມຄອງ ແລະ ຕິດຕັ້ງຈັກສູບນ້ຳແຫ່ງຊາດ.

4.31. ໂຄງການການມອບໂອນການຄຸ້ມຄອງຊົນລະປະທານ (IMT) ປັດຈຸບັນເປັນນະໂຍບາຍຫຼັກສຳຄັນຂອງລັດ ໃນຂະແໜງຊົນລະປະທານ ຕາມດ້ວຍສອງໂຄງການທີ່ສະໜັບສະໜູນໂດຍ ທະນາຄານພັດທະນາ (ADB) ແລະ ລັດຖະບານນີເທີແລນ ໃນຊຸມປີ 1990 (ໂຄງການ SIRAP ແລະ SRIDP). IMT ແມ່ນມອບໂອນການເປັນເຈົ້າຂອງ ລະບົບຊົນລະປະທານ ດັ່ງນັ້ນຄວາມຮັບຜິດຊອບທັງໝົດສຳລັບກິດຈະກຳ ການນຳໃຊ້ ແລະ ສ້ອມແປງ ແມ່ນດຳເນີນການທັງໝົດໂດຍຊາວກະສິກອນຜູ້ໄດ້ຮັບຜົນປະໂຫຍດ. ບັນຫາທີ່ສຳຄັນໃນ IMT ແມ່ນການທົດແທນທຶນຄືນ ແລະ ສະມາຄົມຜູ້ນຳໃຊ້ນ້ຳຮັບຜິດຊອບ ສຳລັບການນຳໃຊ້ ແລະ ສ້ອມແປງ ແລະ ການເກັບຄ່ານ້ຳຈາກຜູ້ນຳໃຊ້. ຄ່ານ້ຳທີ່ເກັບມານັ້ນ ເພື່ອສຳລັບຈ່າຍຄືນຄ່າການລົງທຶນໃຫ້ແກ່ລັດຖະບານ ແລະ ຄ່າບໍລິການຊົນລະປະທານ ສຳລັບ O&M ຂອງລະບົບຊົນລະປະທານ.

5. **ການປະເມີນພື້ນຖານຊັບພະຍາກອນ ແລະ ທ່າແຮງກະສິກຳ.**

5.1 ໄດ້ມີການວິເຄາະ ຮູບລັກສະນະກະສິກຳ ຕາມຈຸດປະສົງຢາກຊອກຮູ້ສະພາບຄວາມເປັນຈິງດ້ານກະສິກຳ ຢູ່ ສປປລາວ ໂດຍໄດ້ຈັດບັນດາ 141 ເມືອງເປັນກຸ່ມຕາມທ່າແຮງ ທາງດ້ານກະສິກຳ ແລະ ເສດຖະກິດສັງຄົມ ສະເພາະຂອງແຕ່ລະເມືອງ, ການວິເຄາະດັ່ງກ່າວໄດ້ປະຕິບັດໂດຍການວິເຄາະອົງປະກອບຕົ້ນຕໍ (PC) ທີ່ໄດ້ມາຈາກຂໍ້ມູນ ສະຖິຕິພື້ນຖານເຊັ່ນ: ຂໍ້ມູນການສຳຫລວດກະສິກຳທົ່ວປະເທດ ປີ 1998/99, ຂໍ້ມູນການສຳຫລວດພົນລະເມືອງປີ 1995 ແລະ ຂໍ້ມູນລະບົບພູມສາດຈຳນວນໜຶ່ງ . ການວິເຄາະອົງປະກອບຕົ້ນຕໍໄດ້ພົບເຫັນ 5 ອົງປະກອບທີ່ສ່ອງແສງ ເຖິງຮູບລັກສະນະຂອງກະສິກຳ ໃນ ສປປລາວ. ແຕ່ລະອົງປະກອບຕົ້ນຕໍໄດ້ຖືກກຳນົດໄວ້ເປັນ PC -1: ການຫັນປ່ຽນດ້ານການຜະລິດ ກະສິກຳລະດັບຟາມ; PC -2 ການຫັນທິດຕາມຕະຫຼາດ; PC -3: ການນຳໃຊ້ຊັບພະຍາກອນແຫຼ່ງນ້ຳ; PC-4: ລະບົບກະເສດສຸມແລະ PC-5; ລະດັບການຜະລິດຫຼາຍຮູບແບບ. ອີງຕາມລັກສະນະຂອງອົງປະກອບ 5 ອັນໃນແຕ່ລະເມືອງໄດ້ຈັດ 141ເມືອງ ເປັນ 10 ກຸ່ມ.

**ການວິເຄາະທ່າແຮງກະສິກຳ.**

5.2 ວັດຖຸປະສົງໃນການວິເຄາະທ່າແຮງກະສິກຳ ແມ່ນຢາກຊອກຫາ ທ່າແຮງດ້ານກະສິກຳ ທັງໝົດໃນ ສປປລາວ ດ້ານການຜະລິດເຂົ້າ, ພືດໄຮ່, ໄມ້ຜົນ ແລະ ທົ່ງລ້ຽງສັດໃນເບື້ອງຕົ້ນ. ການວິເຄາະດັ່ງກ່າວ ໄດ້ນຳໃຊ້ຂໍ້ມູນຄອມພິວເຕີ ດ້ານພື້ນທີ່ປ່າໄມ້ ແລະ ການນຳໃຊ້ທີ່ດິນ, ສະພາບດິນຟ້າອາກາດ, ສະພາບພື້ນທີ່ ແລະ ສະພາບລະເບີດບໍ່ທັນແຕກ (UXO). ການ ຈັດເງື່ອນໄຂ ແລະ ທ່າແຮງຂອງແຕ່ລະກຸ່ມພືດແມ່ນໄດ້ ຄຳນຶງເຖິງຜົນຂອງການຄົ້ນຄ້ວາວິໃຈ ແລະ ການສຶກສາທີ່ໄດ້ປະຕິບັດຜ່ານມາ ພາຍໃຕ້ການຮ່ວມມືຂອງສະຖາບັນຄົ້ນຄ້ວາ ກະສິກຳ ແລະ ປ່າໄມ້. ການວິເຄາະທ່າແຮງກະສິກຳຄັ້ງນີ້ ໄດ້ໃຫ້ເຫັນວ່າ ເຂດເນື້ອທີ່ທີ່ມີທ່າແຮງປູກພືດ ກະສິກຳຕະຫຼອດປີ ຫຼືຕາມລະດູການມີເຖິງ 3, 1 ລ້ານເຮັກຕາ ຖ້າທຽບໃສ່ຕົວເລກດິນກະສິກຳ 1,0 ລ້ານເຮັກຕາ ທີ່ມີຢູ່ ແລະ ໄດ້ລະບຸໄວ້ໃນສະຖິຕິ ກະສິກຳ 1975-2000. ພວກເຮົາສາມາດຕັດສິນໄດ້ວ່າ ຈະສາມາດຂະຫຍາຍເນື້ອທີ່ການຜະລິດ ພືດ ຕະຫຼອດປີ ແລ ະ ຕາມລະດູການໃນຕໍ່ໜ້າ ເຖິງ 2.1 ລ້ານເຮັກຕາ

## 6 ນະໂຍບາຍກະສິກຳ ແລະ ຍຸດທະສາດການພັດທະນາ

**ເປົ້າໝາຍການພັດທະນາ ແຫ່ງຊາດໄລຍະຍາວ.**

6.1 ເປົ້າໝາຍສູງສຸດຂອງລັດຖະບານ ສປປລາວ ໃນການພັດທະນາທຸກຂະແໜງການ ແມ່ນ ການຫລຸດພົ້ນ ອອກຈາກກຸ່ມປະເທດ ດ້ອຍພັດທະນາເທື່ອລະໜ້ອຍຈົນເຖິງປີ 2020. ການ ກຳນົດຂໍ້ກຸນແຈສຳຄັນ ແມ່ນບັນລຸ GDP ຕໍ່ຫົວຄົນ 885 ໂດລາຕາມມູນຄ່າຄົງທີ່ 2000 ໃນ ປີ 2020 ດັ່ງໄດ້ກຳນົດໄວ້ໃນ DAC. ຂະແໜງການກະສິກຳ, ເປັນຂະແໜງການທີ່ປະກອບ ສ່ວນຕົ້ນຕໍແກ່ຜົນຜະລິດແຫ່ງຊາດ ໂດຍກວມເອົາປະມານ 53%. ແລະ ຍັງຈະສືບຕໍ່ຫຼິ້ນບົດ ບາດອັນສຳຄັນໃນການພັດທະນາເສດຖະກິດຂອງ ສປປລາວ ເຖິງແມ່ນວ່າສ່ວນແບ່ງຈະ ຫຼຸດລົງ ຍ້ອນຂະແໜງການທີ່ເສດຖະກິດເຕີບໂຕໄວ. ການປະຕິບັດການພັດທະນາຂອງກະ ສິກຳ ແມ່ນຂໍກຸນແຈສຳຄັນແກ່ການບັນລຸເປົ້າໝາຍການພັດທະນາແຫ່ງຊາດ. ລັດຖະບານ ມີ 3 ເປົ້າໝາຍຈະແຈ້ງ ສຳລັບການກະສິກຳຮອດປີ 2020: (I) ຮັບປະກັນດ້ານສະບຽງອາ ຫານ ແລະ ກຸ້ມຕົນເອງດ້ານອາຫານ; (ii) ສົ່ງເສີມການຜະລິດເປັນສິນຄ້າ, ໂດຍສະເພາະ ສຳລັບສົ່ງອອກ; ແລະ (iii) ຍຸດຕິການຖາງປ່າເຮັດໄຮ່. ຈຸດປະສົງດັ່ງກ່າວນີ້ໄດ້ຮວບຮວມຢູ່ ຍຸດທະສາດວິໄສທັດ ຂອງລັດຖະບານສຳລັບຂະແໜງການກະສິກຳ. ຍຸດທະສາດວິໄສທັດ

ສະເໜີສອງແນວຄິດການພັດທະນາແຕກຕ່າງກັນ; ອັນນຶ່ງແມ່ນຢູ່ທົ່ງພຽງລຽບແຄມແມ່ນ້ຳຂອງ ແລະ ອັນອື່ນສຳລັບເນື້ອທີ່ດິນຄ້ອຍຊັນ.

**ໂຄງປະກອບຂອງປະຊາກອນ ແລະ ເສດຖະກິດມະຫາພາກ.**

6.2 ສູນສະຖິຕິແຫ່ງຊາດ ໄດ້ຄາດຄະເນປະຊາກອນ ຮອດປີ 2020 ເປັນ 3 ພາບໃນສາມພາບນັ້ນ ພາບທີ 3 ໄດ້ສົມມຸດວ່າອັດການເຕີບໂຕ ຂອງພົນລະເມືອງ ຈາກປັດຈຸບັນໄດ້ລົດລົງຈາກ 2.6% ເປັນ 2.35 ໃນປີ 2010 ແລະ 2.05% ໃນປີ 2020 ມີຜົນເຮັດໃຫ້ພົນລະເມືອງເທົ່າ8.205 ລ້ານຄົນ ໃນປີ 2020 ຕົວເລກດັ່ງກ່າວນີ້ ຄິດວ່າ ແມ່ນຕົວເລກທີ່ແທດເໝາະກວ່າໝູ່. ໄດ້ຄາດຄະເນ ວ່າປະຊາຊົນໃນຊົນນະບົດ ຈະກວມປະມານ 80%ຂອງພົນລະເມືອງໃນປີ 2020. ໄດ້ມີການຄາດຄະເນ ລະດັບການຂະຫຍາຍຕົວ ທີ່ຕ້ອງການເພື່ອ ບັນລຸຕົວເລກ ຄາດໝາຍໃຫ້ລາຍຮັບ ຕໍ່ຫົວຄົນເທົ່າ 885 ໂດລາ ໃນປີ 2020 ໂດຍມີການຄາດຄະເນປະຊາກອນເທົ່າ 8,205 ລ້ານຄົນ ໃນປີ 2020. ລັກສະນະນີ້ ສະແດງໃຫ້ເຫັນວ່າ ເສດຖະກິດແຫ່ງຊາດຈະຕ້ອງໄດ້ຂະຫຍາຍຕົວເຖິງ 8,9% ເຖິງປີ 2020, ອັດຕາຂະຫຍາຍຕົວນີ້ແມ່ນສູງຫຼາຍ ແລະ ເກືອບຈະເທົ່າກັບ ສອງເທົ່າ ຂອງອັດຕາຂະຫຍາຍຕົວທີ່ມີຈິງໃນໄລຍະ 5 ປີຜ່ານມາ. ສະພາບດັ່ງກ່າວ ຈະບັງຄັບໃຫ້ຂະແໜງກະສິກຳ ໄດ້ຂະຫຍາຍຕົວ ໄວກ່ວາອັດຕາສ່ວນ ຂະຫຍາຍລະດັບຊາດ 8,9% ຫຼືວ່າຈະຕ້ອງໃຫ້ຂະແໜງການເສດຖະກິດອື່ນໆທີ່ເຫຼືອນັ້ນ ໄດ້ຂະຫຍາຍຕົວໂດຍໄວວາເຊັ່ນດຽວກັນ.

**ຊັບພະຍາກອນທີ່ມີ ສຳລັບການປະຕິບັດແຜນປະຕິບັດການ**

6.3 ໄດ້ຄາດຄະເນ ການລົງທຶນແຫ່ງລັດ ຫຼື ຊັບພະຍາກອນແຫ່ງຊາດ ທີ່ຕ້ອງການ ເພື່ອປະຕິບັດແຜນປະຕິບັດງານ ທີ່ສະເໜີ ໃນແຜນແມ່ບົດນີ້. ບັນດາໂຄງການລົງທຶນແຫ່ງລັດ (PIP) ໃຫ້ແກ່ຂະແໜງກະສິກຳ ໄດ້ຖືກຄາດຄະເນ ຕາມອັດຕາຂະຫຍາຍຕົວຂອງຜົນຜະລິດແຫ່ງຊາດ ແລະ ບັນດາທິດທາງເພື່ອບັນລຸເປົ້າໝາຍການ ຍົກຕົວເລກລາຍຮັບຕໍ່ຫົວຄົນເທົ່າ 885 ໂດລາ ຍົກເວັ້ນຂະແໜງປ່າໄມ້ໄດ້ຖືກຄາດຄະເນ ພົນພື້ນຖານລາຄາຄົງທີ່ 231 ລ້ານກີບ ໃນປີ 2000 ໄປເຖິງ 1,269 ລ້ານກີບໃນປີ 2020.

**7. ແຜນຄວາມຄິດ ແລະ ວິທີການຂອງແຜນປະຕິບັດການ**

**ເສດຖະກິດຕະຫຼາດ**

7.1 ໂຄງສ້າງທາງດ້ານແນວຄວາມຄິດ ນອນຢູ່ໃນແຜນປະຕິບັດການ ແມ່ນໄປຕາມນະໂຍບາຍຂອງລັດ ແຕ່ປີ 1988 ວ່າດ້ວຍການກ້າວສູ່ເສດຖະກິດຕະຫຼາດ. ເສດຖະກິດການຕະຫຼາດ

ໝາຍຄວາມວ່າສັນຍານຂອງຕະຫຼາດ ກາຍເປັນສັນຍາທີ່ສຳຄັນກ່ວາໃນການຊັກນຳການລົງທຶນ, ຕັດສິນໃຈຜະລິດ ແລະ ບໍລິໂພກ. ເສດຖະກິດຕະຫຼາດ ໝາຍຄວາມວ່າ ລັດຖະບານສ້າງຄວາມອາດສາມາດ ສະພາບແວດລ້ອມໃຫ້ແກ່ພາກສ່ວນເອກະຊົນ ແລະ ຄວາມກ້າວໜ້າໃນການລົບລ້າງຂໍ້ກຳນົດ ແລະ ການຄວບຄຸມ ຄືອະນຸຍາດໃຫ້ແຮງຕະຫຼາດ ຫຼັ້ນບົດບາດໄດ້ເສລີໃນການຜະລິດ ແລະ ບໍລິໂພກສິນຄ້າ ແລະ ການບໍລິການ. ລັດຖະບານເຮັດບົດບາດອຳນວຍຄວາມສະດວກ ໃນເມື່ອຜູ້ຜະລິດ (ຊາວກະສິກອນ), ຜູ້ປຸງແຕ່ງກະສິກຳ, ນັກການຕະຫຼາດ ແລະ ຜູ້ບໍລິໂພກ ຕັດສິນໃຈການຜະລິດ, ການລົງທຶນ ແລະ ການບໍລິໂພກ. ນອກຈາກນັ້ນ, ລັດຖະບານດັດສົມຕະຫຼາດ ໃນສະພາບບ່ອນທີ່ມີຜົນປະໂຫຍດຂອງຂອງປະຊາຊົນທົ່ວໄປ.

7.2 ເສດຖະກິດຕະຫຼາດ, ຍັງມີບາງສະພາບການ ທີ່ຕະຫຼາດໄດ້ເຄື່ອນໄຫວແບບບໍ່ມີປະສິດທິຜົນ ຍ້ອນຕະຫຼາດລົ້ມລະລາຍ ຫຼື ໄດ້ຮັບຜົນກະທົບ ຈາກພາຍນອກ. ໃນສະພາບເຊັ່ນນີ້, ລັດຖະບານຕ້ອງເຂົ້າແຊກແຊງດ້ວຍນະໂຍບາຍເຄື່ອງມືອັນເໝາະສົມ ເພື່ອຊ່ວຍຜູ້ຜະລິດ ແລະ ຜູ້ບໍລິໂພກ. ໃນກໍລະນີ ທີ່ຊາວນາຍັງລັງເລງ ໃນການປັບເຂົ້າການນຳໃຊ້ເຕັກໂນໂລຊີໃໝ່ ຫຼື ໃນການປະຕິບັດການຜະລິດກະສິກຳ, ລັດຖະບານຄວນແຊກແຊງ ເພື່ອຮັບປະກັນການຮັບເອົາເຕັກໂນໂລຊີໃໝ່ໄດ້ຢ່າງກ້ວາງຂວາງ. ແຜນປະຕິບັດການ ໄດ້ໃຫ້ແນວຄິດລິເລີ່ມໃນຂົງເຂດຂອງການຜະລິດແນວພັນປັບປຸງ ແລະ ລູກປາ. ເສດຖະກິດຕະຫຼາດ ຈະບໍ່ເຮັດໜ້າທີ່ຂອງມັນເໝືອນກັນ ໃນເມື່ອການແຂ່ງຂັນຕະຫຼາດ ເອກະຊົນມີລັກສະນະທຳການສະໜອງບໍ່ໄດ້ ແລະ ບໍ່ຈັດຫາໃຫ້ໄດ້ຢ່າງພຽງພໍ ເຊັ່ນໃນກໍລະນີເຂດຫ່າງໄກບ່ອນທີ່ຜູ້ຄ້າເອກະຊົນ ບໍ່ອາດຂາຍຂາເຂົ້າກະສິກຳໃນປະລິມານພຽງພໍ ຫຼື ບໍ່ຖືກຕາມເວລາ ຍ້ອນຂາດການກະຕຸກຊຸກຍູ້ທາງກຳໄລ ຫຼື ສະພາບຂະໜາດຂອງຕະຫຼາດທ້ອງຖິ່ນ. ອັນນີ້ເກີດຂື້ນເລື້ອຍໆ ຍ້ອນຂະໜາດການບໍ່ເສດຖະກິດຂອງ ວັດຖຸປັດໃຈ ທີ່ ຊາວບ້ານຕ້ອງການ ຫຼື ຄ່າຂົນສົ່ງ. ຍັງມີກໍລະນີເຊັ່ນ ສຸຂະພາບສັດ ຫຼື ການຮັກສາໃນເມື່ອການກະທຳຂອງຊາວນາຄົນນຶ່ງ ບໍ່ໄດ້ໃຊ້ມາດຕະການເບິ່ງແຍງ ວິທີປ້ອງກັນ ສາມາດມີຜົນກະທົບເສັຍຫາຍ ຕໍ່ຊາວກະສິກອນຄົນອື່ນ ເຮັດໃຫ້ເກີດກໍລະນີ ສຳລັບລັດຖະບານເຂົ້າແຊກແຊງຕະຫຼາດ.

7.3 ໃນເສດຖະກິດຕະຫຼາດ, ການຄວບຄຸມ ແລະ ອຸດໜູນລາຄາຕໍ່ວັດຖຸປັດໃຈການຜະລິດ ແລະ ຜົນຜະລິດ ແມ່ນຄ່ອຍໆລົບລ້າງໄປ ທັງຄວບຄຸມທັງດັດສົມລາຄາ ແມ່ນໃຫ້ສັນຍານໃນທາງຜິດແກ່ຜູ້ຜະລິດ ແລະ ຜູ້ບໍລິໂພກ ນຳໄປສູ່ການຜະລິດເຫຼືອ ຫຼື ຜະລິດບໍ່ພໍ. ພາກສ່ວນເອກະຊົນ ຈະຕ້ອງສະໜອງ ດ້ານການບໍລິການ ວັດຖຸປັດໃຈກະສິກຳທັງໝົດ ກໍຄືການຜະລິດ, ຕະ

ຫຼາດປຸງແຕ່ງຜົນຜະລິດຈາກຟາມທັງໝົດ ກໍຄືການບໍລິການກະສິກຳອື່ນໆ; ກິດຈະກຳຫຼັງເກັບກ່ຽວ ແລະ ການປຸງແຕ່ງກະສິກຳທັງໝົດແມ່ນ ກິດຈະກຳພາກສ່ວນເອກະຊົນ. ໃນດ້ານການຄ້າ, ໝາຍຄວາມວ່າກ້າວໄປສູ່ການຄ້າເສລີ ນອກເຂດຊາຍແດນຂອງປະເທດ. ການເຂົ້າ ໃນກຸ່ມປະເທດການຄ້າເສລີ ອາຊຽນ (AFTA) ແລະ ແນວຄິດລິເລີ່ມຂອງລັດໃນໄລຍະມານີ້ ໃນດ້ານຫຼຸດຜ່ອນພາສີ ແມ່ນເປັນການກະທຳໃນທາງນອກ.

7.4 ໂດຍທົ່ວໄປ, ຈາກການພິຈາລະນາ ຢ່າງຖີ່ຖ້ວນ ຈຶ່ງໄດ້ເຮັດໃຫ້ປັດໃຈທັງໝົດ ເຫຼົ່ານີ້ເປັນພື້ນຖານ ສຳລັບ ການຮ່າງແຜນປະຕິບັດການ. ໂດຍສະເພາະການເນັ້ນໜັກ ແມ່ນສຸມໃສ່ສິ່ງອຳນວຍຄວາມສະດວກ. ແຜນງານໄດ້ຮວມເອົາການຮັບປະກັນຢ່າງພຽງພໍດ້ານຂໍ້ກຳນົດກົດລະບຽບເຊັ່ນ ການກວດກາຊີ້ນ, ຂໍ້ມູນຕະຫຼາດ ແລະ ລະບົບການຈັດປະເພດ ແລະ ຈັດໝວດ. ໄດ້ເນັ້ນໜັກເໝືອນກັນດ້ານພື້ນຖານໂຄງລ່າງ ແລະ ການຊຸກຍູ້ການບໍລິການ. ແຜນປະຕິບັດງານ ກໍໄດ້ພິຈາລະນາຄວາມຕ້ອງການ ພັດທະນາເຕັກນິກການປູກຝັງໃໝ່, ເຊັ່ນແນວພັນປັບປຸງ ຫຼື ລູກປາ, ການປ້ອງກັນ ການລົ້ມລະລາຍຂອງຕະຫຼາດ ແລະ ຜົນກະທົບຕໍ່ພາຍນອກເປັນຕົ້ນ ໂຄງການຍຸດຕິການເຮັດໄຮ່, ໂຄງການ ກະເສດ - ປ່າໄມ້ປະສົມປະສານ ແລະ ໂຄງການຄຸ້ມຄອງອ່າງຮັບນ້ຳ.

**ໂຄງປະກອບນະໂຍບາຍ**

7.5 ການຫັນຈາກກົນໄກຄຸ້ມຄອງ ຕາມແຜນການໄປສູ່ ກົນໄກຄຸ້ມຄອງ ຕາມເສດຖະກິດການຕະຫຼາດມີຄວາມກ້າວໜ້າຫຼາຍຂຶ້ນ ນັບຕັ້ງແຕ່ປີ 1986. ເຖິງຢ່າງໃດກໍຕາມ, ສະພາບແວດລ້ອມ ແລະ ສິ່ງອຳນວຍໃຫ້ ແກ່ການພັດທະນາກະສິກຳ ແມ່ນຕ້ອງສືບຕໍ່ປະຕິຮູບ ແລະ ໂຄງປະກອບນະໂຍບາຍ ຕ້ອງສືບຕໍ່ແກ້ໄຂ ເພື່ອຊຸກຍູ້ໂຄງສ້າງການກະຕຸ້ນ ໃຫ້ສາມາດອອກຈາກ ເສດຖະກິດ ທຳມະຊາດ ແບບກຸ້ມຕົນເອງ ເຂົ້າສູ່ເສດຖະກິດຕະຫຼາດ. ມີຫຼາຍຂົງເຂດທີ່ຍັງຫຼໍ່ແຫຼມເຊັ່ນ: ການເຂົ້າແຊກແຊງ ຕະຫຼາດຈໍລະຈອນ ແລະ ຈຳໜ່າຍຜະລິດຕະພັນ ຊຸກຍູ້ຊ່ວຍເຫຼືອດ້ານກະສິກຳ; ນະໂຍບາຍ ທີ່ດິນບໍ່ຈະແຈ້ງ; ການຜູກຂາດຂອງທຸລະກິດແຫ່ງລັດ; ການບິດເບືອນຕະຫຼາດ ໂດຍການສະໜອງສິນເຊື່ອ ຊົນນະບົດ ແບບຖົມຊຸມຢ່າງໜັກໜ່ວງ; ນະໂຍບາຍກຸ້ມຕົນເອງດ້ານເຂົ້າກິນທີ່ຕ້ອງໄດ້ລົງທຶນຫຼາຍ; ນະໂຍບາຍຄຸ້ມຄອງທີ່ດິນ ທີ່ສະກັດກັ້ນ ການລົງທຶນເອກະຊົນ ໃນຊົນນະບົດ; ແລະ ການຂາດການປະສານສົມທົບ ຂອງໂຄງການຊວຍເຫຼືອ ຈາກອົງການຈັດຕັ້ງສາກົນ ໃນການສ້າງ ແລະ ປະຕິບັດໂຄງການ.

**ແນວຄວາມຄິດຂອງແຜນປະຕິບັດງານ**

7.6 ພາຍໃຕ້ໂຄງປະກອບຂອງວຽກງານ ການຫັນກົນໄກ ໄປຕາມເສດຖະກິດການຕະຫຼາດ ໄດ້ຕິດຕາມ ແນວຄວາມຄິດ ແລະ ທິດທາງພື້ນຖານບາງອັນໃນຊ່ວງໄລຍະ ຮ່າງໂຄງການເຊັ່ນດຽວກັນ ກັບໃນເວລາວາງ ຂັ້ນຕອນແລະ ຈັດບຸລິມະສິດ ໃຫ້ແກ່ໂຄງການ ແລະ ແຜນງານຂອງແຜນແມ່ບົດຄືດັ່ງຕໍ່ໄປນີ້:

(1). <u>ບາດກ້າວຂອງການລົງທຶນ</u>: ໃນແຕ່ລະອົງປະກອບຂອງໂຄງການໄດ້ຮຽກຮ້ອງໃຫ້ພິຈາລະນາ ເຖິງຖານຊັບພະຍາກອນມະນຸດ, ຄວາມພຽບພ້ອມຂອງພະນັກງານ ທີ່ມີຄວາມສຳນານ, ກຳນົດເວລາ ແລະ ປະເພດອົງການສາກົນທີ່ໃຫ້ທຶນ, ກຳນົດເວລາຕໍ່ຜົນຮັບດ້ານການລົງທຶນຂອງໂຄງການ, ໄລຍະຂອງການກະກຽມໃນການກໍ່ສ້າງໂຄງການ,ຄວາມສົມດູນ ແລະ ການຄວບຄຸມຂອງບັນດາໂຄງການ ທີ່ມີການກ່ຽວຂ້ອງເຊື່ອງກັນ ແລະ ກັນ ແລະ ຂອງຊັບພະຍາກອນທີ່ມີຢູ່.

(2). <u>ໂຄງປະກອບດ້ານນະໂຍບາຍ:</u> ຈະຕ້ອງໄດ້ອຳນວຍ ໃຫ້ມີແວດລ້ອມທີ່ດີ ເພື່ອການພັດທະນາ ເຮັດແນວໃດ ໃຫ້ການຂະຫຍາຍຕົວດ້ານ ກະສິກຳ ໄດ້ຖືກປະຕິບັດ ພາຍໃນ

2.1. ແວດ ລ້ອມການຕະຫຼາດ.

(3). <u>ຄວາມບໍ່ດຸ່ນດ່ຽງ ດ້ານງົບປະມານແຫ່ງລັດ ແລະ ໂຄງການລົງທຶນແຫ່ງລັດ</u>: ຈະຕ້ອງໄດ້ຖືກຟື້ນຟູ ເພື່ອຮັບປະກັນໃຫ້ມີທຶນ ເຄື່ອນໄຫວວຽກງານ ແລະ ສ້ອມແປງບູລະນະພຽງພໍ.

(4). <u>ຮູບການອະນຸມັດ ງົບປະມານໃຫ້ແຕ່ລະຂະແໜງການຍ່ອຍ</u> ຈະຕ້ອງໄດ້ຖືກຈຳແນກ ແລະ ຖ້າເປັນໄປໄດ້ ລະບຸໄວ້ໃນແຜນປະຕິບັດງານ.

(5). <u>ກິດຈະກຳທີ່ມີຜົນຮັບສູງ ແລະ ໄວ:</u> ເຊັ່ນການສະໜອງລູກປາໃຫ້ແກ່ຊາວນາ ຫຼືວ່າການສະໜອງເມັດພັນເຂົ້າປັບປຸງ ໃຫ້ແກ່ຊາວນາ ຈິ່ງໄດ້ຈັດເປັນບູລິມະສິດ.

(6). <u>ຄວາມສາມາດໃນການປະຕິບັດໂຄງການ</u>: ພາຍໃຕ້ນະໂຍບາຍການຫັນລົງສູ່ຮາກຖານ ລະດັບແຂວງ, ລະດັບເມືອງ ຈະຕ້ອງໄດ້ຖືກພິຈາລະນາ ຢ່າງລະອຽດສະເພາະແມ່ນແຕ່ລະໂຄງການ.

(7). <u>ການຈັດວາງແບ່ງປັນລາຍຮັບ ລະຫວ່າງສູນກາງ ແລະ ແຂວງ:</u> ຈະໄດ້ຖືກກວດສອບຄືນໃໝ່ແນວໃດໃຫ້ອົງກອນທ້ອງຖິ່ນ ທີ່ກ່ຽວຂ້ອງມີຄວາມສາມາດປະກອບທຶນສົມທົບ ໃນການໃຊ້ຈ່າຍປະຕິບັດ ໂຄງການໂດຍສະເພາະ ໂຄງການທີ່ ໄດ້ຮັບການຊ່ວຍເຫຼືອຈາກສາກົນ ໃນລະບົບທ້ອງຖິ່ນ.

(8). <u>ຄວາມສາມາດດ້ານການຈັດຕັ້ງແລະບໍລິຫານຂອງກະຊວງກະສິກຳປ່າໄມ້</u>:ຈະໄດ້ຖືກເລີ່ມສ້າງໃຫ້ເຂັ້ມແຂງ ເພື່ອສາມາດຈັດຕັ້ງປະຕິບັດ ບັນດາໂຄງການຍ່ອຍ ແລະ ໂຄງການໃຫຍ່ໂດຍສະເພາະ ໃນການປະສານສົມທົບການຊ່ວຍເຫຼືອ ຈາກຕ່າງປະເທດຢ່າງເໝາະສົມ.

(9). <u>ການບໍລິການສົ່ງເສີມ</u>: ຈະຕ້ອງໄດ້ຖືກຍົກຂຶ້ນເປັນບູລິມະສິດສູງສຸດ, ເພາະຈະສາມາດສ້າງຜົນຮັບສູງ ຕໍ່ການລົງທຶນຂອງເສດຖະກິດແຫ່ງຊາດ ດັ່ງທີ່ໄດ້ຢັ້ງຢືນຈາກ ການສຶກສາໃນຫຼາຍປະເທດໃນອາຊີມາແລ້ວ.

(10). <u>ການປັບປຸງໂຄງລ່າງພື້ນຖານ:</u> ໂດຍສະເພາະໃນການສ້າງຕາໜ່າງ ເສັ້ນທາງຊົນນະບົດເປັນບູລິມະສິດສູງ ຍ້ອນມີຜົນຮັບສູງ ທາງດ້ານເສດຖະກິດ ດັ່ງໄດ້ລະບຸໄວ້ໃນບົດສຶກສາທະວີບອາຊີຫຼາຍສະບັບ.

(11). <u>ຈຸດສຸມໃນການຄຸ້ມຄອງຊົນລະປະທານ</u> ໃນການປັບປຸງ ປະສິດທິພາບຂອງລະບົບ ຊົນ ລະປະທານ ແຕ່ລະແຫ່ງ ໂດຍການຟື້ນຟູບູລະນະ ໂຄງການຊົນລະປະທານ ທີ່ມີຢູ່, ຈັດຕັ້ງແລະຝຶກອົບຮົມ ອົງການຊາວນາ, ຄວາມຕ້ອງການໃນການສ້າງຊົນລະປະທານໃໝ່ ຈະໄດ້ສຶກສາຄືນໃໝ່ພາຍຫຼັງປີ2005.

(12). <u>ການເງິນ ແລະ ສິນເຊື່ອ ຊົນນະບົດ</u>: ຈະຕ້ອງໄດ້ຮັບການປັບປຸງໂດຍການເສີມສ້າງຄວາມເຂັ້ມແຂງ ໃຫ້ແກ່ທະນາຄານສົ່ງເສີມກະສິກຳ ແລະ ບັນດາທະນາຄານທຸລະກິດແຫ່ງລັດ ໃນການທັນທຸລະກິດການຄ້າຂອງເຂົາເຈົ້າ.

(13). <u>ພືດເສດຖະກິດ</u> : ຈະໄດ້ຖືກສົ່ງເສີມພາຍໃຕ້ນະໂຍບາຍຍຸດທະສາດ ຂອງລັດທະບານແຫ່ງ ສປປລາວ ໃນການຜັນຂະຫຍາຍກະເສດສຸມ ແລະ ການປູກພືດຫຼາຍຊະນິດ ພາຍໃຕ້ໂຄງການຄົ້ນຄ້ວາທົດລອງ ແລະ ສົ່ງເສີມທີ່ນຳໜ້າ.

(14). <u>ຄວາມຕ້ອງການ ໃນການເປີດກ້ວາງການຄ້າແບບເສລີ</u>: ຈະໄດ້ຖືກທົບທວນເປັນປະຈຳ ໂດຍສະເພາະ ໃນການປະຕິບັດມາດຕະການຄຽງຄູ່ກັນ ກັບປະເທດຄູ່ຄ້າ ໂດຍການຫລຸດຜ່ອນອັດຕາພາສີ ຜະລິດຕະພັນກະສິກຳ ແລະ ເພີ່ມຊະນິດສິນຄ້າ ໃນບັນຊີສິນຄ້າ ແລກປ່ຽນຫຼຸດຜ່ອນພາສີລະຫວ່າງຊາດ (CEPT).

<u>(15) ການຄ້ຳປະກັນດ້ານສະບຽງອາຫານ ແລະ ຜົນຮັບຂອງການຜະລິດເຂົ້າ</u> ຈະຕ້ອງໄດ້ໃຫ້ຍືນນານ ໂດຍການເພີ້ມສະມັດຕະພາບການຜະລິດດ້ວຍການສະໜອງເມັດພັນປັບປຸງ, ການປັບປຸງເຕັກໂນໂລຢີການປູກຝັງແລະນຳໃຊ້ລະບົບຊົນລະປະທານທີ່ມີຢູ່ໃຫ້ມີປະສິດຕິຜົນສູງ

<u>(16) ການແກ້ໄຂຄວາມທຸຍາກ</u> ຈະຕ້ອງລົມເຫດລົມຜົນ ແລະ ຖືກແກ້ໄຂແບບຍືນນານ ໂດຍການປະຕິບັດແຜນປະຕິບັດງານທີ່ໄດສະເໜີນັ້ນໄປພ້ອມກັນກັບບັນດາກິດຈະກຳຂອງຂະແໜງການເສດຖະກິດ ແລະ ສັງຄົມ.

7.7 ພັດທະນາກະສິກຳ ແລະ ຊົນນະບົດຕາມພື້ນທີ່ ອີງຕາມຜົນຂອງການວິເຄາະ ພື້ນຖານຊັບພະຍາກອນ ແລະ ທ່າແຮງກະສິກຳ ໄດ້ວາງທິດທາງ ການພັດທະນາກະສິກຳ ແລະ ຊົນນະບົດ ທົ່ວປະເທດ ໂດຍແບ່ງເປັນ 4 ເຂດ. ລັກສະນະການແບ່ງ ເຂດມີດັ່ງຕາຕະລາງຕໍ່ໄປນີ້:

| ເຂດ | ເຂດ-ຍ່ອຍ | ທິດທາງການພັດທະນາ |
|---|---|---|
| 1. ເຂດພື້ນເນີນສູງ ແລະ ພູສູງຢູ່ພາກເໜືອ | ເຂດເນື້ອທີ່ລວມ | ຍຸດຕິການຖາງປ່າເຮັດໄຮ່<br>ພັດທະນາລະບົບການຜະລິດຫຼາຍຮູບແບບເສັ້ນ ທາງ ຊົນນະບົດ, ປັບປຸງເສດຖະກິດ ລະດັບຟາມ ແລະ ພັດທະນາຊົນນະບົດ ໃນເຂດຈຸດສຸມ ພົນລະເມືອງຫຼາຍ. |
| | ເຂດພື້ນທີ່ຮາບພຽງປູກເຂົ້າ | ສະໜອງເມັດພັນເຂົ້າປັບປຸງ<br>ປັບປຸງເຕັກນິກການປູກຝັງ<br>ຟື້ນຟູບູລະນະ ລະບົບຊົນລະປະທານທີ່ມີຢູ່ ແລະ ລ້ຽງປາ. |
| | ເຂດປະຊາກອນໜ້ອຍ ແລະ ຫ່າງໄກ | ພັດທະນາຊົນນະບົດ ຕາມແນວຄວາມຄິດພັດທະນາເຂດຈຸດສຸມ. |
| | ເຂດຕິດກັບຊາຍແດນ | ຜະລິດພືດເສດຖະກິດ ເພື່ອສົ່ງອອກ, ລະດົມການລົງທຶນຂອງພາກເອກະຊົນໃນການປຸງແຕ່ງກະສິກຳ |
| 2. ກຳແພງນະຄອນວຽງຈັນ ແລະ ເຂດອ້ອມແອ້ມຕົວເມືອງ | | ຜະລິດຜັກ, ເພີ່ມການຜະລິດເຂົ້າ<br>ປ້ອງກັນນ້ຳຖ້ວມ |
| 3. ເຂດພາກກາງ ແລະ ພາກໃຕ້ | ເຂດພື້ນທີ່ຮາບພຽງ ຢູ່ພາກກາງ ແລະ ພາກໃຕ້ | ເພີ່ມຜົນຜະລິດເຂົ້າ, ປ ູກພືດການຜະລິດ ເພື່ອຕະຫຼາດປ້ອງກັນນ້ຳຖ້ວມ. |
| | ເຂດເນີນສູງ ແລະ ພູສູງຢູ່ພາກກາງ ແລະ ພາກໃຕ້ | ທິດທາງການພັດທະນາ ຄ້າຍຄືເຂດພູສູງ ແລະ ເນີນສູງ ຢູ່ພາກເໜືອເປັນຢ່າງໃດກໍ່ຕາມມີເງື່ອນໄຂພັດທະນານ້ອຍກວ່າເຂດດັ່ງກ່າວ. |
| 4. ເຂດພູພຽງພາກໃຕ້ | | ຍົກຄຸນນະພາບ ຂອງພືດທີ່ເປັນສິນຄ້າປູກພືດຫຼາຍຊະນິດ ແລະ ພັດທະນາຊົນລະປະທານຂະໜາດນ້ອຍ |

## 8. ຂະແໜງການຍ່ອຍພື້ນຖານການພັດທະນາກະສິກຳ.

### ການຄຸ້ມຄອງຊັບພະຍາກອນດິນ ແລະ ນ້ຳ.

8.1. ຊັບພະຍາກອນປ່າໄມ້ ແລະ ແຫຼ່ງນ້ຳ ແມ່ນມີຄວາມສຳຄັນຕໍ່ປະເທດຊາດ, ໂດຍສະເພາະເພື່ອກະສິກຳຢູ່ທົ່ງພຽງ ແລະ ເພື່ອການຫາປາ. ຄິດວ່າມີຄວາມກົດດັນ ຕໍ່ຊັບພະຍາກອນເຫຼົ່ານີ້ ຍ້ອນການເພີ່ມຂຶ້ນຂອງພົນລະເມືອງ. ຈຸດປະສົງໃນແຜນປະຕິບັດງານ ສຳລັບຂະແໜງການຍ່ອຍແມ່ນ ເພື່ອການພັດທະນາແບບຍືນນານ ສະພາບແວດລ້ອມແບບເພື່ອນມິດດ້ວຍການຄຸ້ມຄອງຢ່າງເໝາະສົມຂອງທັງແຫຼ່ງຊັບພະຍາກອນທີ່ຟື້ນຄືນ ແລະ ບໍ່ຟື້ນຄືນໄດ້. ຊົງເຂດຕົ້ນຕໍທີ່ໄດ້ມາພິຈາລະນາໃນການຮ່າງຍຸດທະສາດ ແມ່ນໄດ້ເນັ້ນໃສ່ການນຳໃຊ້ດິນຢ່າງເໝາະສົມ, ເອົາໃຈໃສ່ຕໍ່ຄວາມອາດສາມາດຂອງດິນ, ການປ້ອງກັນອ່າງຮັບນ້ຳ ແລະ ແຄມຝັ່ງແມ່ນ້ຳ ແລະ ນຳໃຊ້ດິນທີ່ເໝາະສົມແກ່ການປູກຝັງ, ທົ່ງຫຍ້າ/ປ່າໄມ້ໃນທຸກເຂດພື້ນທີ່ ໃນສະພາບແວດລ້ອມແບບສັນມິດ.

8.2. ການຈັດທະບຽນທີ່ດິນ ເປັນບຸລິມະສິດ ພື້ນຖານສຳລັບຊາວກະສິກອນ ເນື້ອທີ່ທຳການປູກຝັງແບບຍືນນານ ແລະ ໂດຍສະເພາະສິ່ງສຳຄັນແມ່ນການຍຸດຕິການເຮັດໄຮ່. ຄຽງຄູ່ໄປກັບການຈັດທະບຽນທີ່ດິນ ແມ່ນການອອກໃບຕາດິນ ແລະ ເປັນໂຄງການທີ່ກຳລັງດຳເນີນຢູ່ໃນບາງແຂວງໃນປັດຈຸບັນ. ການອອກໃບຕາດິນ ແມ່ນຈຳເປັນໃນທຸກຂົງເຂດກະສິກຳ ເພື່ອເຮັດໃຫ້ມາດຕະການຂອງການຮັບປະກັນ ຄວາມປອດໄພ ແລະ ຄວາມເປັນເຈົ້າຂອງ ດັ່ງນັ້ນແລ້ວຊາວນາຈຶ່ງສາມາດ ດຳເນີນການລົງທຶນປັບປຸງໃສ່ທີ່ດິນ ແລະ ລົງທຶນເຂົ້າຊື້ ປັດໃຈການ ຜະລິດ ເພື່ອທຳການຜະລິດ. ການແບ່ງເຂດກະສິກຳ ແລະ ການວາງແຜນນຳໃຊ້ດິນແມ່ນບຸລິມະສິດເປັນແກ່ນສານຂອງເນື້ອທີ່ກະສິກຳ ສາມາດກຳນົດໄດ້ ແລະ ເປັນເຄື່ອງມືໃນການວາງແຜນສືບຕໍ່ໂຄງການ ແລະ ລະບົບການພັດທະນາດິນ ແລະ ນ້ຳ. ການຄຸ້ມຄອງອ່າງຮັບນ້ຳ ກໍແມ່ນສຳຄັນເໝືອນກັນຊຶ່ງເປັນໂຄງການບຸລິມະສິດ, ຊຶ່ງການເຊາະເຈື່ອນເກີນຂະໜາດ ສາມາດເຮັດໃຫ້ເກີດຜົນເສຍຫາຍຕໍ່ເຂື່ອນກັ້ນນ້ຳ ດ້ວຍການທັບຖົມຂອງດິນ, ໂດຍສະເພາະຕໍ່ເຂື່ອນ ຂະໜາດນ້ອຍ ທີ່ມີຕໍ່ການດຳລົງຊີວິດຂອງຊາວກະສິກອນ.

**ສະຖາບັນ ແລະ ການຈັດຕັ້ງ.**

8.3. ກະຊວງກະສິກຳ ແລະ ປ່າໄມ້ ເປັນອົງປະກອບຕົ້ນຕໍ ໃນແຜນປະຕິບັດງານ ທີ່ໄດ້ສະເໜີໃນແຜນແມ່ບົດນີ້ ດ້ວຍການເພີ່ມບົດບາດສຳຄັນ ໃຫ້ແກ່ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ. ຈຸດປະສົງແມ່ນເພື່ອສ້າງຄວາມເຂັ້ມແຂງແກ່ການຈັດຕັ້ງເຫຼົ່ານີ້ ແລະ ທັນກິດຈະກຳຂອງເຂົາເຈົ້າ ໃຫ້ເອົາໃຈໃສ່ ຕໍ່ຊາວກະສິກອນ ດ້ວຍການໃຫ້ການຊຸກຍູ້ການບໍລິການ, ໂດຍສະເພາະການສົ່ງເສີມ ການແນະນຳ ແລະ ຖ່າຍທອດເຕັກໂນໂລຊີ ທີ່ໄດ້ປັບປຸງແລ້ວແກ່ຊາວນາ. ໃນເມື່ອພິຈາລະນາ ວິເຄາະຄວາມສຳຄັນແລ້ວອຽກນີ້, ຄວາມຈິງແລ້ວການປ່ຽນແປງນີ້ສາມາດຢູ່ລະດັບດີທີ່ສຸດ, ຈະບັນລຸຜົນທີ່ລະເລັກລະນ້ອຍເທົ່ານັ້ນ. ວິທີການດຳເນີນ ແມ່ນເລີ່ມຕົ້ນ ສຸມໃສ່ພື້ນຖານການລົງທຶນເຊັ່ນ: ຝຶກອົບຮົມຄູຝຶກ ແລະ ພະນັກງານຄົ້ນຄ້ວາຕົ້ນຕໍ ໃນຂົງເຂດທີ່ຂາດແຄນເຊັ່ນ, ການຂະຫຍາຍແນວພັນພືດ ຫຼື ສູນຜະລິດແນວພັນປາ ບ່ອນທີ່ສືບຕໍ່ຝຶກອົບຮົມ ແລະ ທັງຮຽນທັງເຮັດ ແລະ ສາມາດຕິດຕາມຢູ່ພາຍໃນຊ່ວງໄລຍະເວລາອັນສັ້ນ.ໄດ້ຕົກລົງຄັດເລືອກເອົາເຂົ້າໃນແຜນງານ ແລະ ໂຄງການໃນແງ່ຄວາມຄິດ ຂອງຜົນກະທົບ ແລະ ຜົນໄດ້ຮັບ. ລະບົບທົດລອງສຳລັບປັບປຸງການຈັດຕັ້ງ ແລະ ໃນໂຄງສ້າງຄືນໃໝ່ ຈະໄດ້ເລີ່ມໃຊ້ໃນແຂວງ ແລະ ເມືອງເພື່ອຊ່ວຍເຫຼືອການປ່ຽນແປງ ຂະບວນການ ການແບ່ງຂັ້ນຄຸ້ມຄອງ (ກະຈາຍອຳນາດ) . ພ້ອມດຽວກັນນັ້ນ, ວິທີການທີ່ຈະຕ້ອງໃຫ້ດີທີ່ສຸດ ເປັນແຕ່ລະບາດກ້າວ

ເພື່ອບໍ່ໃຫ້ລົບກວນຢ່າງໜັກໜ່ວງຕໍ່ຄົນທີ່ມີໃນປັດຈຸບັນ. ໂຄງການລວມທັງໝົດ ສຳລັບສ້າງຄວາມເຂັ້ມແຂງ ແກ່ສະຖານບັນການຈັດຕັ້ງເອີ້ນວ່າ ສ້າງຄວາມເຂັ້ມແຂງໃຫ້ແກ່ກົມແຜນການ ແລະ ການຈັດຕັ້ງ, ພະແນກກະສິກຳ ແລະ ກົມຈັດຕັ້ງ, ພະແນກບໍລິຫານ ແລະ ກົມວິຊາການຂອງກະຊວງກະສິກຳ ແລະ ປ່າໄມ້; ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ຫ້ອງການການກະສິກຳ ແລະ ປ່າໄມ້ເມືອງ ກໍໄດ້ເນັ້ນໜັກເໝືອນກັນກັບໂຄງການສ້າງຄວາມເຂັ້ມແຂງດ້ວຍການບັນຈຸພະນັກງານເຂົ້າໃໝ່ ແລະ ຝຶກອົບຮົມພະນັກງານ.

**ການພັດທະນາຊັບພະຍະກອນມະນຸດ**

8.4. ຈຸດປະສົງໄລຍະຍາວແມ່ນເຮັດໃຫ້ ແມ່ນເພື່ອເຮັດໃຫ້ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການສາຍຕັ້ງ ໃຫ້ມີພະນັກງານບໍລິຫານ ແລະ ວິຊາການທີ່ມີຄຸນວຸດທິ ທີ່ຈະສາມາດໃຫ້ການຊຸກຍູ້ການບໍລິການ ດ້ານອາຊີບດ້ວຍການເຮັດສາທິດ ແລະ ແນະນຳແກ່ຊຸມຊົນ ຊາວກະສິກອນ. ເພື່ອເຮັດໃຫ້ບັນລຸວ ງກງານດັ່ງກ່າວນີ້, ແຜນການຄຽງຄູ່ໄປກັບການປະຕິຮູບຕົ້ນຕໍ ແລະ ສະຖາບັນ ແລະ ການຈັດຕັ້ງ, ຕົ້ນຕໍໄລຍະຍາວຈະຕ້ອງໄດ້ພະຍາຍາມ ຍົກລະດັບຄວາມສາມາດຂອງພະນັກງານໃນທຸກລະດັບ ແຜນງານແມ່ນສ້າງໂຄງລ່າງ ການຈັດຕັ້ງສຳລັບພັດທະນາຊັບພະຍາກອນມະນຸດຢູ່ລະດັບສູນກາງ ແລະ ເນັ້ນນັກເພີ່ມໃຫ້ລະດັບແຂວງ. ໜ່ວຍຝຶກອົບຮົມສົ່ງເສີມ ແລະ ປະສານຄວາມຕ້ອງການການຝຶກອົບຮົມ. ແນວຄິດກໍຈະສົ່ງລົງຝຶກອົບຮົມ ໃຫ້ເມືອງເໝືອນກັນ. ນອກຈາກນັ້ນ, ໂຄງການ ການບໍລິການຝຶກອົບຮົມພາຍໃນ ສຳລັບພະນັກງານຫ້ອງການການກະສິກຳ ແລະ ປ່າໄມ້ເມືອງ ກໍຄືການຝຶກອົບຮົມແກ່ຊາວກະສິກອນ ດ້ານກະສິກຳ ແລະ ປ່າໄມ້ຈະເປັນພາກສ່ວນນຶ່ງຂອງໂຄງການ ດ້ວຍການສ້າງຕັ້ງໂຮງຮຽນຝຶກອົບຮົມວິຊາຊີບຊາວນາ. ໂຮງຮຽນວິຊາການກະສິກຳປ່າໄມ້, ໂຮງຮຽນຊົນລະປະທານ, ການສຶກສາຢູ່ມະຫາວິທະຍາໄລດ້ານກະສິກຳ ແລະ ປ່າໄມ້ ແລະ ການຂະຫຍາຍການສຶກສາກະສິກຳ ແລະ ປ່າໄມ້ຢູ່ໂຮງຮຽນປະຖົມ ແລະ ມັດທະຍົມຈະເປັນອົງປະກອບ ຂອງໂຄງການພັດທະນາ ບຸກຄະລາກອນ ໄດ້ສະເໜີໄວ້ວ່າການຈັດຕັ້ງປະຕິບັດໂຄງການ ຄວນເຮັດແບບໃດ ແຕ່ລະບາດກ້າວດ້ວຍການໃຫ້ບຸລິມະສິດແກ່ການຝຶກອົບຮົມໃຫ້ແກ່ພະນັກງານຂັ້ນເມືອງ. ນອກຈາກນັ້ນ ຈຶ່ງແນະນຳວ່າການຊ່ວຍເຫຼືອຄວນຈະເລັ່ງໃສ່ຂົງເຂດທີ່ຂາດເຂີນແທ້ ໂດຍສະເພາະບ່ອນທີ່ເປັນພື້ນຖານເຊັ່ນ ຝຶກອົບຮົມໃຫ້ຄູຝຶກ.

**ການປູກຝັງ**

8.5. ການປູກຝັງ ເປັນອົງປະກອບ ສຳຄັນທີ່ສຸດ ຂອງແຜນປະຕິບັດງານ ທີ່ພົວພັນກັບການຜະລິດເຂົ້າ ຊຶ່ງກວມເອົາເກີນກ່ວາເຄິ່ງນຶ່ງ ຂອງມູນຄ່າຜະລິດຕະພັນ ເພີ່ມຂອງການປູກຝັງທັງ

ໝົດ. ຈຸດປະສົງແມ່ນ ປະຕິບັດຍຸດທະສາດ ແຕກຕ່າງກັນສໍາລັບທົ່ງພຽງ ແລະ ເຂດດ ິ ສ້ອຍ ຊັນ ດັ່ງທີ່ໄດ້ອະທິບາຍແລ້ວໃນຍຸດທະສາດວິໄສທັດ. ສໍາລັບທົ່ງພຽງ, ການເນັ້ນໜັກແມ່ນ ເລັ່ງຂະບວນການຫັນໄປສູ່ການຜະລິດເພື່ອຕະຫຼາດ ໃນລະດັບບ້ານ ດ້ວຍການຂະຫຍາຍ ການປູກພືດສິນຄ້າ, ການລ້ຽງສັດ ແລະ ການປະມົງ ແລະ ດ້ວຍການເພີ່ມຜະລິດຕະພາບ ຂອງພືດ.

8.6. ສໍາລັບທົ່ງພຽງບໍ່ຕ້ອງການ ເພີ່ມເນື້ອທີ່ປູກເຂົ້າໃໝ່ອີກ ເປົ້າໝາຍ ການຜະລິດຈະສາມາດ ບັນລຸໄດ້ດ້ວຍ ການເພີ່ມຜະລິດຕະພາບການະຜະລິດ. ການເພີ່ມຜົນຜະລິດຕະພາບດ້ວຍ ການນໍາໃຊ້ແນວພັນປັບປຸງ ສ້າງຄວາມເຂັ້ມແຂງການບໍລິການສົ່ງເສີມ ແລະ ຊຸກຍູ້ການບໍລິ ການ ສະໜອງວັດຖຸປັດໃຈການຜະລິດ ດີກ່ວາເກົ່າ. ເພື່ອຊຸກຍູ້ໂຄງການຜະລິດແບບປະສົມ ປະສານ, ແມ່ນມີຄວາມຕ້ອງການໃຫ້ມີການຄົ້ນຄ້ວາ ແລະ ໂຄງການ ການຄົ້ນຄ້ວານໍາໃຊ້ ຄວນເລັ່ງໃສ່ການຄົ້ນຄ້ວາທົດລອງພືດຜັກ, ໄມ້ໃຫ້ໝາກ ແລະ ພືດເນີນສູງ. ສະນັ້ນຈຶ່ງຕ້ອງ ໄດ້ສ້າງແຜນສໍາລັບການຄົ້ນຄ້ວານໍາໃຊ້ ແລະ ຊຸກຍູ້ການຜະລິດພືດສິນຄ້າ, ພືດປະສົມປະ ສານ, ພືດສວນ, ໄມ້ໃຫ້ໝາກ ແລະ ປູກອ້ອຍແບບຍືນນານ. ນອກຈາກນັ້ນກໍຕ້ອງໄດ້ຊຸກຍູ້ ການລ້ຽງມ້ອນເໝືອນກັນ ສ່ວນໃຫຍ່ແມ່ນເພື່ອຈຸດປະສົງ ສ້າງລາຍຮັບເພີ່ມເຕີມ ສໍາລັບ ຄອບຄົວຊາວກະສິກອນ.

8.7. ສໍາລັບເຂດຄ້ອຍຊັນ, ການເພີ່ມຜະລິດຕະພາບເຂົ້າ ເປັນສິ່ງສໍາຄັນທີ່ສຸດ ໃນພື້ນທີ່ທີ່ຂາດ ເຂົ້າກິນ ແລະ ມາດຕະການການເກັບຮັກສາເຂົ້າເພື່ອແຮໄວ້ ໃນຍາມສຸກເສີນ ກໍເປັນສິ່ງສໍາ ຄັນເໝືອນກັນ ໂດຍສະເພາະໃນພື້ນທີ່ ທີ່ຖືກກະທົບຈາກການອຶດເຂົ້າ ຢ່າງຮ້າຍແຮງ. ຍ້ອນ ວ່າມີການເຮັດໄຮ່ ເຄື່ອນຍ້າຍໃນເຂດດັ່ງກ່າວຈະໄດ້ ເນັ້ນໜັກໃສ່ດ້ານຄົ້ນຄ້ວາ ແລະ ກິດ ຈະກໍາການສົ່ງເສີມ ເພື່ອຫັນປ່ຽນເຂດເຮັດໄຮ່ ແບບເຄື່ອນຍ້າຍ ກາຍເປັນຟາມ ກະເສດທີ່ທໍາການຜະລິດ ແບບຄົງທີ່ ດ້ວຍການປັບປຸງ ປ່ຽນແປງ ຮູບການປູກພືດ ແລະ ເຕັກໂນໂລຊີ ການປູກພືດທີ່ສາມາດ ນໍາໃຊ້ໄດ້ໃນ ເຂດເຮັດໄຮ່ແບບເຄື່ອນຍ້າຍ.

**ການລ້ຽງສັດ ແລະ ການປະມົງ.**

8.8. ຜູ້ລ້ຽງສັດຂະໜາດນ້ອຍກວມເອົາ 90% ຂອງອັດຕາສ່ວນຜູ້ລ້ຽງສັດທັງໝົດ ແລະ ຍັງຈະ ເປັນພາກສ່ວນຕົ້ນຕໍຢູ່ ສປປ ລາວ.ເຖິງຢ່າງໃດກໍຕາມການຜະລິດກະສິກໍາແມ່ນ ແບບພື້ນ ບ້ານ. ຍຸດທະສາດແມ່ນ ເພີ່ມຜົນຜະລິດດ້ວຍການປັບປຸງສຸຂະພາບສັດ ແລະ ຄວບຄຸມການ ແຜ່ລະບາດຂອງພະຍາດ, ປັບປຸງແຫຼ່ງອາຫານສັດແບບພື້ນເມືອງ ແລະ ລະບົບຄຸ້ມຄອງ,ນໍາ

ໃຊ້ໃຫ້ມີປະສິດທິຜົນ, ປັບປຸງພືດອາຫານສັດ ແລະ ຄຸ້ມຄອງທົ່ງຫຍ້າທຳມະຊາດ ແລະ ການປັບປຸງແນວພັນ. ໂຄງສ້າງຄວາມເຂັ້ມແຂງຂອງສຸຂະພາບສັດ ເປັນບຸລິມະສິດ, ຮວມທັງການຈັດຕັ້ງ ແລະ ປະຕິບັດກົດໝາຍ ແລະຂໍ້ກຳນົດດ້ານສຸຂະພາບສັດ, ການກວດກາຊີ້ນ ແລະ ການກວດກາພະຍາດສັດ, ສ້າງຕັ້ງສິ່ງອຳນວຍຄວາມສະດວກດ້ານຫ້ອງທົດລອງບົ່ງມະຕິ, ສ້າງຄວາມເຂັ້ມແຂງ ສິ່ງອຳນວຍຄວາມສະດວກການຮັບປະກັນສັດ. ພື້ນຖານການຄົ້ນຄ້ວາຄວາມຕ້ອງການ ດ້ານສຸພາບສັດຈະຕ້ອງໄດ້ສ້າງຄວາມເຂັ້ມແຂງດ້ວຍການປັບປຸງສູນລ້ຽງສັດແຫ່ງຊາດ ດ້ວຍການສ້າງຕັ້ງຫ້ອງທົດລອງ ທົດສອບຄຸນນະພາບຢາວັກແຊງ ແລະ ຫ້ອງທົດລອງເຊື້ອພະຍາດ. ດ້ວນການເຂົ້າຮ່ວມກຸ່ມ ອາຊ່ຽນ ແລະ ກຸ່ມປະເພດການຄ້າເສລີ ອາຊ່ຽນ (AFTA), ຈຶ່ງເພີ່ມທ່າແຮງທາງອອກຂອງລັດ ແລະ ຜະລິດຕະພັນສັດທີ່ ສປປລາວມີທ່າໄດ້ປຽບ. ເປັນທີ່ຮູ້ຈັກແລ້ວວ່າ ການຄ້າສັດໃຫຍ່ ຕາມຊາຍແດນ ທີ່ບໍ່ມີຂໍ້ມູນຕົວເລກມີຫຼາຍ. ຄວາມຕ້ອງການໃນການຂຸດຄົ້ນ ທ່າແຮງການສົ່ງອອກນີ້ຈຶ່ງເປັນ ເຫດຜົນ ຮຽກຮ້ອງໃຫ້ມາດຕະການທີ່ກ່າວມາຂ້າງເທິງນີ້ ໂດຍທັນທີ.

8.9. ຈຳນວນທີ່ປາ ທີ່ຫາໄດ້ຕາມລຳແມ່ລຳແມ່ນ້ຳຂອງ ແມ່ນຫລຸດລົງ ແລະ ການລ້ຽງສັດນ້ຳເປັນແຫຼ່ງສະໜອງອາຫານອີກດ້ານໜຶ່ງ. ປາໃຫ້ໂປຼຕີນສັດແກ່ປະຊາຊົນໃນຊົນນະບົດ, ເປັນໂອກາດສ້າງລາຍຮັບໃຫ້ແກ່ຊາວກະສິກອນ ແລະ ມີທ່າແຮງສຳລັບມາດຕະການການເພີ່ມຜະລິດ,ເປັນເຕັກໂນໂລຊີຂ້ອນຂ້າງງ່າຍ ເພື່ອທ່າຍທອດແກ່ຊາວກະສິກອນ. ຈຸດປະສົງຂອງໂຄງການລ້ຽງສັດ ແມ່ນ ເພື່ອສ້າງລາຍຮັບແກ່ຊາວກະສິກອນ. ມີຄວາມຕ້ອງການປັບປຸງເຕັກໂນໂລຊີ ແລະຟື້ນຟູສະຖານທີ່ລ້ຽງສັດທີ່ມີໃນປັດຈຸບັນໂດຍປັບປຸງການທົດລອງຜະລິດແນວພັນ ແລະ ເຕັກນິກການລ້ຽງສັດນ້ຳ ແລະ ຂະໜາດເຕັກໂນໂລຊີຜະລິດແນວພັນທີ່ຄັດເລືອກໄດ້. ວິທີການຕົ້ນຕໍໃນການລ້ຽງສັດນ້ຳ ບັນລຸໄດ້ດ້ວຍການ ປັບປຸງອັດຕາການລອດພົ້ນການຕາຍຂອງການຜະລິດປານ້ອຍ ແລະ ການຂົນສົ່ງ, ນຳໃຊ້ແຫຼ່ງນ້ຳທີ່ຖືກຕ້ອງ ແລະ ຄວາມໜາແໜ້ນຂອງການລ້ຽງ, ຟື້ນຟູສະລ້ຽງປາ ແລະ ໃຊ້ຄວາມເລິກຂອງນ້ຳທີ່ເໝາະສົມ ແລະ ສະໜອງອາຫານອີງຕາມມາດຖານເຕັກນິກ. ຊາວກະສິກອນຂ້ອນຂ້າງຮັບການລ້ຽງສັດນ້ຳຢ່າງງ່າຍດາຍ ແລະ ອັດຕາການເຕີບໂຕແນ່ນໄວ. ເພື່ອເນັ້ນຂໍ້ຈຳກັດດ້ານເຕັກນິກເພື່ອເພີ່ມຜົນຜະລິດ,ມີຫຼາຍໂຄງການໄດ້ຖືກນຳສະເໜີສຳລັບການປັບປຸງການລ້ຽງສັດນ້ຳ,ການຟື້ນຟູສະຖານນີການລ້ຽງປາ ແລະ ການຂະຫຍາຍການຜະລິດແນວພັນຂະໜາດນ້ອຍ, ພັດທະນາການລ້ຽງສັດນ້ຳຊົນນະບົດ ແລະ ເຕັກໂນໂລຊີໃຫ້ອາຫານປາ.

**ການຢຸດຕິການເຮັດໄຮ່ ແບບເລື່ອນຍ້າຍ**

8.10. ຈຸດປະສົງແມ່ນຢຸດຕິການເຮັດໄຮ່ ແບບເລື່ອນຍ້າຍ ໃນເຂດເນີນສູງດ້ວຍການ: (i) ພັດທະນາກິດຈະກຳການຜະລິດຄົງທີ່ແບບຍືນນານ ທີ່ບໍ່ມີຜົນກະທົບດ້ານລົບຕໍ່ສິ່ງແວດລ້ອມ;(ii) ຂະຫຍາຍລະບົບການດຳລົງຊີວິດໃນເຂດເນີນສູງ, ດ້ວຍການນຳໃຊ້ດິນທີ່ຖືກແບ່ງປັນຢ່າງຄົງທີ່ ດັ່ງໄດ້ສະເໜີ ມາກ່ອນນີ້ເພື່ອເຮັດໄຮ່ແບບໝູນວຽນ ແບບພື້ນເມືອງ; ແລະ (iii) ພັດທະນາ ແລະ ຂະຫຍາຍກິດຈະກຳສ້າງລາຍຮັບເສີມ ນອກຈາກກະສິກຳ. ມີຄວາມຕ້ອງການເພື່ອພັດທະນາ ແລະ ປັບປຸງລະບົບກະສິກຳ ແລະ ການດຳລົງຊີວິດແບບເນີນສູງຢູ່ບ້ານ / ແລະ ຊຸມຊົນ. ລະບົບດັ່ງກ່າວນີ້ຕ້ອງການ ໃຫ້ມີການວາງແຜນຢ່າງເໝາະສົມ,ພັດທະນາລະບົບຟາມຢ່າງເໝາະສົມຮວມທັງການລ້ຽງສັດ ແລະ ການປະມົງ, ພັດ ທະນາການຄຸ້ມຄອງ ແລະ ການນຳໃຊ້ເຄື່ອງປ່າຂອງດົງແບບຍືນນານ ແລະ ພັດທະນາກິດຈະກຳການສ້າງລາຍຮັບເສີມ.

8.11. ໂຄງການທີ່ໄດ້ນຳສະເໜີຂຶ້ນມາ ແມ່ນເພື່ອສືບຕໍ່ຄວາມພະຍາຍາມຢຸດຕິ ການຖາງປ່າເຮັດໄຮ່ໃນເຂດເນີນສູງ. ໂຄງການດັ່ງກ່າວແມ່ນພົວພັນກັບວິທີການພື້ນຖານເຂດພື້ນທີ່, ຄືເປັນໂຄງການລວມ ເບິ່ງຄືວ່າກວ້າງຂວາງຫຼາຍ. ນອກຈາກນັ້ນການເຮັດຜະລິດກະສິກຳ ຊຶ່ງເປັນຫຼາຍທາງເລືອກອາດຈະແຕກຕ່າງເໝືອນກັນບົນພື້ນຖານ ພື້ນທີ່ເຂດທີ່ແຕກຕ່າງກັນ. ບົດສະເໜີໂຄງການໄດ້ສ້າງຂຶ້ນເພື່ອຢຸດຕິການເຮັດໄຮ່ ຢູ່ໃນ ແລະ ນອກເຂດພື້ນທີ່ປ່າສະຫງວນແຫ່ງຊາດກໍ່ຄືໂຄງການສຳລັບການຄົ້ນຄ້ວາ/ ສົ່ງເສີມຕິດພັນກັບກະເສດປ່າໄມ້ປະສົມປະສານ, ການປູກໄມ້ ແລະ ການສຶກສາການຄຸ້ມຄອງ ແລະ ການຜະລິດເຄື່ອງປ່າຂອງດົງແບບຍືນນານ.

**ການຕະຫຼາດ ແລະ ການປຸງແຕ່ງກະສິກຳ**

8.12. ຈຸດປະສົງພື້ນຕໍ່ທັງສອງຢ່າງທັນການຕະຫຼາດ ແລະ ການປຸງແຕ່ງກະສິກຳ ແມ່ນເພື່ອເຮັດໃຫ້ມີສະພາບແວດລ້ອມ ອຳນວຍໃຫ້ແກ່ການຕະຫຼາດ ກໍ່ຄືຜູ້ຜະລິດ, ຜູ້ບໍລິໂພກ ແລະ ຊຸມຊົນທຸລະກິດກະສິກຳ ສາມາດຕັດສິນໃຈໃນໂຄງສ້າງ ເສດຖະກິດການຕະຫຼາດ. ໃນແຜນປະຕິບັດງານ ບໍ່ໄດ້ກຳນົດໃຫ້ອົງການຈັດຕັ້ງ ຂະແໜງການຂອງລັດ ໄດ້ມີບົດບາດໂດຍກົງ ຕໍ່ການຕະຫລາດ ແລະ ການປຸງແຕ່ງກະສິກຳ ນອກເໜືອຈາກການເປັນຜູ້ເອື້ອອຳນວຍ ແລະ ເປັນຜູ້ດັດສົມໃຫ້ຖືກລະບຽບ. ໃນການປຸງແຕ່ງກະສິກຳຈຸດປະສົງແມ່ນເພື່ອຊຸກຍູ້ດ້ານເຕັກນິກ ໃຫ້ຄຳແນະນຳສຳລັບການປັບປຸງຄຸນນະພາບ ແລະ ຫຼຸດຜ່ອນຄວາມເສັຍຫາຍ ໃນການອຳນວຍຄວາມສະດວກ ດ້ານການປຸງແຕ່ງ ຜະລິດຕະພັນກະສິກຳຂອງພາກສ່ວນເອກະຊົນ, ຍຸດທະສາດພື້ນຕໍ່ ເພື່ອບັນລຸຈຸດປະສົງສຳລັບການຕະຫຼາດກະສິ

ກຳຈະແມ່ນ ການເຮັດໃຫ້ການເຂົ້າສູ່ຕະຫຼາດດີຂື້ນ, ບໍລິການຂໍ້ມູນຂ່າວສານດ້ານຕະຫຼາດ,ລຶບລ້າງສິ່ງລົບກວນຕະຫຼາດ ແລະ ສ້າງສິ່ງອຳນວຍຄວາມສະດວກ ແລະ ການບໍລິການດ້ານຂໍ້ກຳໜົດກົດລະບຽບ, ໃນເມື່ອຈຳເປັນໃນຜົນປະໂຫຍດ ຂອງການຂະຫຍາຍຕະຫຼາດການຄ້າ. ໃນເຂດດິນຄ້ອຍຊັນ ມີຄວາມຈຳກັດໃນ ການເຂົ້າສູ່ຕະຫຼາດ ແລະ ຊາວກະສິກອນເກືອບທັງໝົດບໍ່ມີ ເສັ້ນທາງທີ່ເປັນພື້ນຖານ ໄປເຖິງຕະຫລາດ ໃນຊ່ວງໄລຍະສັ້ນ, ຍຸດທະສາດ ແມ່ນເພື່ອຫາທາງເຂົ້າສູ່ຕະຫຼາດ, ທັງຕະຫຼາດພາຍໃນ ແລະຕ່າງປະເທດ. ຈຸດປະສົງ ແມ່ນສ້າງລະບົບເພື່ອສະໜອງຂ່າວສານຂໍ້ມູນດ້ານຕະຫຼາດ ເປັນປົກກະຕິໃຫ້ແກ່ຜູ້ຜະລິດ, ຜູ້ຊົມໃຊ້ ແລະ ຊຸມຊົນ ທຸລະກິດກະສິກຳ ເຮັດແນວນີ້ເຂົາເຈົ້າຈິ່ງຈະໄດ້ຮັບ ຂໍ້ມູນຂ່າວສານດີຂື້ນ ແລະ ຈະຮັບຮູ້ທ່າແຮງດ້ານຕະຫຼາດໄດ້ດີຂື້ນ.

8.13. ໃນໄລຍະຍາວເປົ້າໝາຍ ແມ່ນຈະສ້າງຄວາມສະດວກ ແລະ ຂໍ້ກຳໜົດກົດລະບຽບທີ່ຈຳເປັນເພື່ອ ໄປເຖິງເສດຖະກິດ ( ທີ່ມີມາດຖານ) ດ້ວນການຈັດເກຣດ, ຈັດມາດຕະຖານ ແລະ ມາກຖານໃນການຫຸ້ມຫໍ່ ແລະ ໃຫ້ໄດ້ຕາມມາດຕະຖານສາກົນດ້ານສຸຂະອະນາໄມ ແລະ ການຂົນສົ່ງ ສະເພາະສິນຄ້າທີ່ເນົ່າເປື່ອຍໄວ ວັດຖຸປະສົງ ຕົ້ນຕໍແມ່ນປັບປຸງການປຸງແຕ່ງກະສິກຳ ແລະ ການຈັດຫາຕະຫຼາດ ວັດຖຸປັດໃຈການຜະລິດ ແລະ ຂຸດຄົ້ນທ່າແຮງເພື່ອເພີ່ມສ່ວນແບ່ງຂອງຕະຫຼາດໃນການຜະລິດສິນຄ້າ ແລະ ບໍລິການໃນຂົງເຂດແມ່ນ້ຳຂອງຕິດຕາມດ້ວຍປັບເຂົ້າກັບກົດລະບຽບຂອງ AFTA ເພື່ອໃຫ້ມີການຄ້າເສລີຂື້ນກ່ວາເກົ່າ.

8.14. ຍຸດທະສາດສຳລັບ ການປຸງແຕ່ງກະສິກຳຈະໄດ້ປະຕິບັດ ຜ່ານການຝຶກອົບຮົມເຕັກນິກ, ສິນເຊື້ອຊົນນະບົດ ເພື່ອຊື້ອຸປະກອນ ແລະ ສ້າງສິ່ງອຳນວຍຄວາມສະດວກ ແລະ ສ້າງກຸ່ມກິດຈະກຳລະດັບຊຸມຊົນ. ການບໍລິການຊຸກຍູ້ເຫຼົ່ານັ້ນ ຈະຖືກສະໜອງຜ່ານ ໂຄງການການສົ່ງເສີມການປູກພືດຫຼາຍຊະນິດ ແລະ ບັນດາໂຄງການພັດທະນານຳໜ້າຂອງບ້ານ. ນອກຈາກນັ້ນ, ການຝຶກອົບຮົມ ດ້ານການປຸງແຕ່ງກະສິກຳ ຈະໄດ້ຈັດຕັ້ງ ຢູ່ໃນໂຮງຮຽນວິຊາຊີບ ກະສິກຳຕິດກັບສູນຝຶກອົບຮົມກະສິກຳ ແລະ ປ່າໄມ້ ປະຈຳແຕ່ລະພາກ ພ້ອມທັງໃນສູນເຕັກໂນໂລຊີການປຸງແຕ່ງກະສະກຳ ຫຼັງເກັບກ່ຽວ.

**ການເງິນຊົນນະບົດ**

8.15. ຈຸດປະສົງເບື້ອງຕົ້ນຂອງໂຄງການ ການເງິນຊົນນະບົດ ແມ່ນເພື່ອເຮັດໃຫ້ສະຖາບັນການບໍລິການການ ເງິນທີ່ມີໃນປັດຈຸບັນ ໄດ້ເອົາພາກສ່ວນ ປະຊາຊົນກ້ວາງຂວາງຂື້ນ. ຈຸດປະສົງຕົ້ນຕໍ ແມ່ນ ເພື່ອເຮັດໃຫ້ສະຖາບັນການເງິນມີໃນປັດຈຸບັນ ແລະ ສະຖາບັນການເງິນໃຫມ່

ສາມາດສະໜອງໄດ້ ຕາມຄວາມຕ້ອງການຂອງປະຊາຊົນ ຊາວກະສິກອນດ້ວຍການປັບປຸງ ລະດົມກົນໄກເງິນຝາກ ແລະ ເງິນກູ້ການຜະລິດໃໝ່.ທະນາຄານທຸລະກິດຂອງລັດຢູ່ໃນທ່າອ່ອນ, ມີຜູ້ຊ່ຽວຊານ ແລະ ພະນັກງານຈຳກັດ. ສທກ ມີຖານະດ້ານການເງິນດີກ່ວາ ແລະ ເງິນກູ້ປະຈຳປີ ແມ່ນອີງໃສ່ການຖົມຊຸມ ຈາກລັດຖະບານເກືອບ 80%. ໃນໄລຍະສັ້ນມີຄວາມຈຳເປັນ ຕ້ອງປັບປຸງ ສທກ ແລະ ທະນາຄານທຸລະກິດຂອງລັດ ເປັນສະຖາບັນທີ່ໝັ້ນຄົງ ເພື່ອໃຫ້ມີຖານະ ໃນການສະໜອງສິນເຊື່ອ ຕາມຄວາມຕ້ອງການຂອງຊຸມຊົນຊາວກະສິກອນ.

8.16. ຍຸດທະສາດແມ່ນ ເພື່ອປັບປຸງປະສິດທິຜົນ ຂອງສະຖາບັນການເງິນ ທີ່ມີໃນປັດຈຸບັນດ້ວຍການປັບໂຄງສ້າງ ແລະ ຫັນເປັນທຸລະກິດ ຢ່າງແທ້ຈິງ ແລະ ໃຫ້ເຂົາ ເຈົ້າປະຕິບັດມາດຕະການ ເສດຖະກິດ ຕາມຫລັກການທະນາຄານທຸລະກິດ ເພື່ອແກ້ບັນຫາເງິນກູ້ ທີ່ເກັບຄືນບໍ່ໄດ້. ໃນໄລຍະສັ້ນຫາໄລຍະກາງຍຸດທະສາດ ແມ່ນປັບປຸງຖານະການເງິນຂອງທະນາຄານ, ປັບປຸງລະບົບການຄຸ້ມຄອງ ແລະ ລະບົບການເງິນຂັ້ນຕອນໃນການປະເມີນສິນເຊື່ອທີ່ມີຄວາມສ່ຽງ, ປະເມີນຜູ້ກູ້ຢືມ ແລະ ວິເຄາະກະແສທຶນ.ພ້ອມນັ້ນກໍຕ້ອງໄດ້ປ່ຽນແປງນະໂຍບາຍ ແລະ ວິທີເຮັດວຽກຂອງ ທກສ ຢ່າງຫຼວງຫຼາຍ ແລະ ຫຼຸດຜ່ອນການຖົມຊຸມ ຈາກລັດດ້ານສິນເຊື່ອ.ຕ້ອງໄດ້ສ້າງໂຄງການ ຝຶກອົບຮົມສຳລັບພະນັກງານ ໃນການປະຕິບັດທຸລະກິດທະນາຄານການຄ້າ ໃນໄລຍະຍາວ ຈະຕ້ອງໄດ້ຈັດຕັ້ງ ກຸ່ມຝາກປະຫຍັດ ແລະ ກຸ່ມສິນເຊື່ອດ້ວນການປະເມີນຕີລາຄາ ທຶນໝູນວຽນຂອງບ້ານທີ່ກຳລັງດຳເນີນຢູ່ເພື່ອຫັນປ່ຽນ ໃຫ້ກາຍເປັນກຸ່ມຝາກປະຫຍັດ ແລະ ກຸ່ມສິນເຊື່ອທີ່ມີປະສິດທິຜົນ ມີຄວາມຕ້ອງການສ້າງຕັ້ງ ບົບການເງິນຂະໜາດນ້ອຍ ເພື່ອບໍລິການ ຕາມຄວາມຕ້ອງການ ຂອງຄອບຄົວຊົນນະບົດ ພ້ອມທັງແຂ່ງຂັນກັບທະນາຄານອື່ນ. ໂຄງການການເງິນຂະໜາດນ້ອຍຂອງອົງການພັດທະນາສະຫະປະຊາຊາດ (UNDP) ທີ່ກຳລັງດຳເນີນຢູ່ ໃນປະຈຸບັນ ສາມາດພັດທະນາໃຫ້ເປັນຕົວແບບ ພື້ນຖານ ດ້ວຍການປັບປຸງຢ່າງເໝາະສົມ.

**ການພັດທະນາຊົນນະບົດ**

8.17 ເຖິງແມ່ນວ່າພົນລະເມືອງເກີນກ່ວາ 80% ອາໄສຢູ່ເຂດພື້ນທີ່ຊົນນະບົດ,ພື້ນຖານສິ່ງອຳນວຍຄວາມສະດວກໂຄງລ່າງ ຍັງບໍ່ທັນມີສຳລັບເຂດ ທີ່ມີພົນລະເມືອງອາໄສຢູ່. ມັນເປັນຄວາມ ກົດດັນ ເພື່ອຂະຫຍາຍໂຄງການພັດທະນາຊົນນະບົດ ຕາມແນວຄວາມຄິດ ພັດທະນາ ຈຸດສຸມ. ວິທີການແບບຈຸດສຸມ ໄດ້ສ້າງສິ່ງອຳນວຍຄວາມສະດວກດ້ານໂຄງລ່າງ ເພື່ອຫຼຸດຜ່ອນຄວາມທຸກຈົນ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ. ໃນກໍລະນີພື້ນທີ່ທ່າ

ແຮງສຳລັບພັດທະນາກະສິກຳການເນັ້ນເຖິງຄວາມແຕກຕ່າງ ແມ່ນຕ້ອງການທີ່ມີເປົ້າໝາຍສຳລັບການຊຸກຍູ້ການພັດທະນາຕະຫຼາດກະສິກຳ. ໃນວິທີການດັ່ງກ່າວນີ້, ບຸລິມະສິດຈະແມ່ນການກໍ່ສ້າງທາງຊອຍ.ສິ່ງອຳນວຍຄວາມສະດວກດ້ານໂຄງລ່າງອື່ນ ຈະແມ່ນສ້າງຄວາມຕ້ອງການພື້ນຖານເໝືອນກັນ.ສິ່ງອຳນວຍຄວາມສະດວກດ້ານໂຄງລ່າງອື່ນປະກອບມີໂຮງຮຽນ, ສະຖານທີ່ສາທາລະນະສຸກ, ການສະໜອງນ້ຳສະອາດ,ໆລໆ ໂຄງການຈະໄດ້ດຳເນີນຢູ່ໃນລະດັບແຂວງ ພາຍໃຕ້ການສ້າງແຜນການ ແລະ ຂັ້ນຕອນປະຕິບັດແຕ່ລຸ່ມຫາເທິງ ຈຸດອ່ອນຂອງວິທີການ ເຂດຈຸດສຸມທີ່ກຳລັງດຳເນີນຢູ່ໃນປັດຈຸບັນຈະໄດ້ກຳນົດ ແລະແກ້ໄຂໃນເວລາປະຕິບັດໂຄງການນີ້. ການຄັດເລືອກເຂດພື້ນທີ່ ແມ່ນບົນພື້ນຖານຂໍ້ມູນທີ່ພົວພັນກັບທີ່ດິນ, ນ້ຳ, ຊັບພະຍາກອນມະນຸດກໍ່ຄືຂໍ້ມູນອື່ນໆ ຈາກພະແນກກະສິກຳ ແລະປ່າໄມ້ແຂວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ. ໃນການປະຕິບັດໂຄງການພັດທະນາຊົນນະບົດດ້ວຍຈຸດປະສົງດັ່ງນີ້,ມີສອງໂຄງການທີ່ໄດ້ສະເໜີ ການພັດທະນາກະສິກຳຕາມແນວຄິດລິເລີ່ມຂອງບ້ານໃນເຂດຊົນນະບົດຫ່າງໄກ ແລະ ໂຄງການພັດທະນາຊົນນະບົດຮອບດ້ານຕາມເຂດແຄ້ວນ.

**ຊົນລະປະທານ**

8.18 ຈຸດປະສົງຂອງແຜນການ ທີ່ໄດ້ສະເໜີ ສຳລັບຂະແໜງການຍ່ອຍ ຊົນລະປະທານຄື: (I) ຮັບປະກັນສະບຽງອາຫານ ໂດຍການປັບປຸງຜະລິດຕະພາບ ໃນຊົນລະປະທານການກະເສດ; (II) ສ້າງລາຍຮັບດ້ວຍການຊຸກຍູ້ ແລະ ແນະນຳປູກພືດປະສົມປະສານ ໃນເຂດຊົນລະປະທານ. (III) ຊ່ວຍເຫຼືອສະມາຄົມຜູ້ນຳໃຊ້ ຜ່ານການຝຶກອົບຮົມ, ສ້າງຄວາມເຂັ້ມແຂງການຈັດຕັ້ງ ແລະ ສ້າງຕັ້ງສະຖາບັນພາຍໃຕ້ຂັ້ນຕອນ ການມອບໂອນຊົນລະປະທານ. ອີງຕາມມະຕິໃນປີ 1998 ວ່າດ້ວຍການມອບໂອນ ໂຄງການຊົນລະປະທານ ໃຫ້ແກ່ການຈັດຕັ້ງຂອງຊຸມຊົນ, ນະໂຍບາຍມອບໂອນຊົນລະປະທານ ໄດ້ປະຕິບັດໃນທົ່ວປະເທດ. ດ້ວຍການມອບໂອນໂຄງການໃຫ້ເປັນກຳມະສິດ ແມ່ນໄປພ້ອມກັບການມອບໂອນ ຄວາມຮັບຜິດຊອບດ້ານການຄຸ້ມຄອງນຳໃຊ້ ແກ່ຊາວນາ. ຄວາມກ້າວໜ້າຂອງຂັ້ນຕອນການມອບໂອນຊົນລະປະທານ ແມ່ນບໍ່ໄດ້ປາສະຈາກຜົນກະທົບ ຂອງລາຄາເຂົ້າໃນຕະຫຼາດຕົກຕ່ຳ ແລະ ການຂຸດໂຊມຂອງລະບົບຊົນລະປະທານທີ່ມີ ກໍ່ຄືການຂາດຄວາມຮັບຜິດຊອບ ຂອງຊາວນາຕໍ່ການບົວລະບັດຮັກສາ. ໂຄງການ ພື້ນຖານ ສຳລັບຊົນລະປະທານ ດ້ານຟື້ນຟູວຽກຊົນລະປະທານຂະໜາດນ້ອຍ ຄຽງຄູ່ກັບການຊຸກຍູ້ສະມາຄົມຜູ້ນຳໃຊ້ນ້ຳ ແລະ ຊຸກຍູ້ສຳລັບຂະບວນການການມອບໂອນຊົນລະປະທານ; ນຳໃຊ້ຊັບພະຍາກອນແຫຼ່ງນ້ຳ ຢ່າງມີປະສິດທິຜົນ

ໂດຍແນະນຳ ແລະ ຊຸກຍູ້ການປູກພືດທີ່ມີລາຄາສູງ ແລະ ປ້ອງກັນຊິນລະປະທານ ໃນເຂດນ້ຳຖ້ວມລຽບຕາມລຳແມ່ນ້ຳຂອງ.

## 9. ແຜນປະຕິບັດງານ

### ແຜນປະຕິບັດງານເຖິງ ປີ2020

9.1. ແຜນປະຕິບັດງານໄດ້ຖືກຮ່າງຂຶ້ນ ຕ້ານກັບສິ່ງກີດຂວາງທີ່ໄດ້ຄົ້ນພົບ ໂດຍການນຳໃຊ້ ທ່າແຮງ ແລະ ສຶກສາເບິ່ງຂໍ້ຈຳກັດ. ການຊ່ວຍເຫຼືອດ້ານວິຊາການ ຂອງຂະແໜງການຍ່ອຍແມ່ນໄດ້ດຶດ ເຂົ້າໃນການຮ່າງໂຄງການ ແລະ ແຜນງານ ເພື່ອຊ່ວຍເຫຼືອໃຫ້ການກຳນົດຄວາມຮັບຜິດຊອບຂອງອົງການລັດ ໃນການປະຕິບັດງ່າຍຂຶ້ນ. ຂະແໜງການຍ່ອຍລວມມີຄື: (I) ການພັດທະນາຊັບພະຍາກອນດິນ ແລະ ນ້ຳ; (ii) ສະຖາບັນ ແລະ ການຈັດຕັ້ງ; (iii) ການພັດທະນາຊັບພະຍາກອນມະນຸດ; (iv) ການປູກຝັງ; (v) ການລ້ຽງສັດ ແລະ ການປະມົງ; (vi) ການຢຸດຕິການເຮັດໄຮ່; (vii) ການຕະຫຼາດ ແລະ ການປຸງແຕ່ງ; (viii) ການເງິນຊົນນະບົດ; (ix) ການພັດທະນາຊົນນະບົດ; ແລະ (x) ຊົນລະປະທານ. ແຜນໄດ້ສະເໜີແຜນງານທັງໝົດ ໃນແຕ່ລະຂະແໜງການຍ່ອຍ ແລະ ພື້ນຖານລະອຽດດ້ານຄວາມຕ້ອງການທີ່ຈະລົງມື, ເປົ້າໝາຍ ແລະ ຄວາມຮັບຜິດຊອບຂອງອົງການ, ລວມທັງໝົດມີ 110 ໂຄງການທີ່ໄດ້ກຳນົດຂຶ້ນ ແລະ ໄດ້ແບ່ງອອກເປັນຂະແໜງການດັ່ງລຸ່ມນີ້

**ສັງລວມໂຄງການ ແລະ ແຜນງານທີ່ໄດ້ສະເໜີ.**

| ຂະແໜງການຍ່ອຍ | ຈຳນວນໂຄງການ ແລະ ແຜນງານ |
|---|---|
| 1. ຊັບພະຍາກອນດິນ ແລະ ນ້ຳ | 9 |
| 2. ສະຖາບັນ ແລະ ການຈັດຕັ້ງ | 13 |
| 3. ພັດທະນາຊັບພະຍາກອນມະນຸດ | 7 |
| 4. ການປູກຝັງ | 22 |
| 5. ການລ້ຽງສັດ ແລະ ການປະມົງ | 12 |
| 6. ການຢຸດຕິການເຮັດໄຮ່ | 9 |
| 7. ການຕະຫຼາດ ແລະ ການປຸງແຕ່ງ | 9 |
| 8. ການເງິນຊົນນະບົດ | 13 |
| 9. ການພັດທະນາຊົນນະບົດ | 5 |
| 10. ຊົນລະປະທານ | 11 |
| ລວມ | 108 |

**ບາດກ້າວຕໍ່ໄປສຳລັບ ການເລີ່ມຕົ້ນຂອງໂຄງການກ່ອນເຖິງປີ 2010**

9.2 ມີຫຼາຍປັດໃຈທີ່ຕ້ອງໄດ້ພິຈາລະນາ ໃນເມື່ອປະຕິບັດໂຄງການໃຫຍ່ໆ ແລະ ຍາວນານເຖິງ 20 ປີ. ນອກຈາກນັ້ນ ເບິ່ງຄືວ່າຈະມີຂໍ້ຈຳກັດດ້ານຊັບພະຍາກອນ ແລະ ຍ້ອນແນວນັ້ນ ຈຶ່ງຕ້ອງການໃຫ້ ຈັດບຸລິມະສິດ ແລະ ຈັດຂັ້ນຕອນປະຕິບັດ. ວິທີການຈັດຂັ້ນຕອນແມ່ນຂຶ້ນກັບຈຸດປະສົງພື້ນຖານຂອງແຜນປະຕິບັດງານ - ເພື່ອເພີ່ມມູນຄ່າໃຫ້ສູງສຸດ. ແຕ່ວ່າມີຂໍ້ພິຈາລະນາອື່ນເຊັ່ນ, ການກະທົບຕໍ່ການຫຼຸດຜ່ອນຄວາມທຸກຈົນ, ຜົນສະທ້ອນຕໍ່ການຈ້າງແຮງງານ, ສ້າງລາຍຮັບເພີ່ມເຕີມ, ຜົນກະທົບຕໍ່ຜູ້ໄດ້ຮັບຜົນປະໂຫຍດ ແລະ ບາດກ້າວ ການຫັນອອກຈາກການກະສິກຳພໍລ້ຽງກຸ້ມຕົນເອງ. ການພິຈາລະນາໃນດ້ານອື່ນເຊັ່ນ ຜົນກະທົບແບບທະວີຄູນ ແລະ ການຕິດພັນໃນອາດີດ ແລະ ອະນາຄົດ ແລະ ຜົນກະທົບດ້ານການຄ້າສົ່ງອອກກໍໄດ້ນຳມາພິຈາລະນາເໝືອນກັນ. ມີຄວາມຈຳເປັນທຳການກວດສອບຄວາມສາມາດຂອງອົງການຕ່າງໆ ເພື່ອດຳເນີນໂຄງການ; ລະດັບຄວາມສາມາດ ແລະ ຄວາມຮູ້ປະສົບ; ການມີທຶນສຳລັບການປະຕິບັດການ ແລະ ສ້ອມແປງ ແລະ ໂຕແປອື່ນໆ. ເມື່ອພິຈາລະນາທັງໝົດເຫຼົ່ານີ້ແລ້ວ ບັນທັດຖານດັ່ງຕໍ່ລົງໄປນີ້ໄດ້ນຳມາໃຊ້ສຳລັບຈັດລຳດັບ ຂັ້ນຕອນປະຕິບັດຂອງ 110 ໂຄງການບົນພື້ນຖານວິທີການໃຫ້ຄະແນນ:

- ໂຄງການ/ ແຜນງານທີ່ມີຜົນກະທົບໂດຍກົງຕໍ່ມູນຄ່າເພີ່ມ (GDP);
- ໂຄງການ/ ແຜນງານທີ່ປັດຈຸບັນຢູ່ແຂວງ/ ເມືອງ ມີຄວາມສາມາດປະຕິບັດ;
- ໂຄງການ/ ແຜນງານ ທີ່ມີມູນຄ່າຕ່ຳ ແລະ ຜົນໄວ;
- ໂຄງການພົວພັນລົງທຶນປູພື້ນຖານ ເຊັ່ນ ການຝຶກອົບຮົບຄູຝຶກ, ການຜະລິດແນວພັນພື້ນຖານ, ສະຖານນີຜະລິດລູກປາ ໆລໆ...
- ໂຄງການ/ ແຜນງານເພື່ອສ້າງຄວາມດຸ່ນດ່ຽງ ແລະ ເພີ່ມການຈັດແບ່ງສຳລັບລາຍຈ່າຍທີ່ເກີດຂຶ້ນ.

9.3 ບົນພື້ນຖານຂ້າງເທິງນັ້ນ, ກໍໄດ້ທຳການປະເມີນເບື້ອງຕົ້ນ ແລະ ໂຄງການທັງໝົດກໍໄດ້ຈັດເປັນ ສາມ ປະເພດໃນແງ່ຂອງປີເລີ່ມຕົ້ນໂຄງການເຊັ່ນ: ເລີ່ມກ່ອນ ປີ 2010 ແລະ ໂຄງການທີ່ເລີ່ມໃນໄລຍະປີ 2011-2020. ປະເທດທີສາມປະກອບດ້ວຍ 8ໂຄງການ ຊຶ່ງແມ່ນໂຄງການກຳລັງດຳເນີນກໍໄດ້ຮວມຢູ່ໃນລາຍການດັ່ງລຸ່ມນີ້:

**ສະເໜີໄລຍະປະຕິບັດບັນດາໂຄງການແລະແຜນງານ**

| ຂະແໜງການຍ່ອຍ | ຈຳນວນ | ກຳລັງປະຕິບັດ (S) | 2001-2010 (A) | 2011-2020 (B) |
|---|---|---|---|---|
| ຊັບພະຍາກອນດິນ ແລະ ນ້ຳ | 9 | - | 4 | 5 |
| ສະຖາບັນ ແລະ ການຈັດຕັ້ງ | 13 | - | 7 | 6 |
| ການພັດທະນາຊັບພະຍາກອນມະນຸດ | 7 | - | 5 | 2 |
| ການປູກຝັງ | 22 | 2 | 13 | 7 |
| ການລ້ຽງສັດ ແລະ ການປະມົງ | 12 | 2 | 6 | 4 |
| ການຍຸດຕິການເຮັດໄຮ່ | 9 | - | 6 | 3 |
| ການຕະຫຼາດ ແລະ ການປຸງແຕ່ງ | 9 | - | 5 | 4 |
| ການເງິນຊົນນະບົດ | 13 | 2 | 5 | 6 |
| ການພັດທະນາຊົນນະບົດ | 5 | - | 3 | 2 |
| ຊົນລະປະທານ | 11 | 2 | 4 | 5 |
| **ລວມ** | **110** | **8** | **58** | **44** |

**10. ການສຶກສາຜົນກະທົບຕໍ່ສິ່ງແວດລ້ອມເບື້ອງຕົ້ນຂອງບັນດາໂຄງການບູລິມະສິດ.**

10.1 ການສຶກສາໄດ້ສຶກສາ ຜົນກະທົບຕໍ່ສິ່ງແວດລ້ອມ ເບື້ອງຕົ້ນຂອງບັນດາ ໂຄງການທີ່ຈັດເປັນບູລິມະສິດ ເພື່ອກຳນົດໂຄງການທີ່ຕ້ອງການ ໃຫ້ມີການສຳຫລວດຜົນກະທົບຕໍ່ສິ່ງແວດລ້ອມລະອຽດ (IEE). ມີຫຼາຍໂຄງການທີ່ມີຜົນ ບວກຫຼືດຸ່ນດ່ຽງຕໍ່ຜົນຮັບ ດ້ານສິ່ງແວດລ້ອມ ທຳມະຊາດ ແລະ ສັງຄົມ. ໂຄງການດັ່ງກ່າວຈະບໍ່ຕ້ອງການໃຫ້ປະຕິບັດ IEE. ເປັນຢ່າງໃດກໍ່ຕາມ, ໂຄງການດັ່ງກ່າວ ຈະຕ້ອງໄດ້ຮັບໃບຢັ້ງຢືນ ວ່າບໍ່ກະທົບເຖິງສິ່ງແວດລ້ອມກ່ອນຈະສາມາດ ປະຕິບັດໄດ້ເປັນທາງການ ສຳລັບໂຄງການໃໝ່ດ້ານປູກຝັງ, ລ້ຽງສັດ ແລະ ກະສິກຳແບບປະສົມປະສານ ຫລືວ່າໂຄງການທີ່ອີງໃສ່ການຂຸດຄົ້ນ ເຄື່ອງປ່າຂອງດົງ ຈະຕ້ອງໄດ້ມີການສຳຫລວດ ແລະ ການວິເຄາະ ຜົນກະທົບຕໍ່ສິ່ງແວດລ້ອມ (IEE ແລະ EIA). ໂດຍສະເພາະຖ້າຫາກໂຄງການ ນອນຢູ່ໃນເຂດເນື້ອທີ່ປ່າສະຫງວນ, ສະຖານທີ່ສັກສິດ ທາງດ້ານສາດສະໜາ ແລະ ດ້ານປະຫວັດສາດ ເຂດດິນທາມ ແລະ ອື່ນໆ.

**11. ແຜນການຈັດຕັ້ງປະຕິບັດເຖິງປີ 2010.**

**ເປົ້າໝາຍການພັດທະນາ ແລະ ພື້ນຖານການຈັດບູລິມະສິດ**

11.1. ແຜນງານ / ໂຄງການຈະກະທົບໃນຫຼາຍດ້ານ ໃນແງ່ຂອງຜົນກະທົບ ສຸທິຕໍ່ມູນຄ່າເພີ່ມ (GDP). ຈຳນວນໂຄງການອາດຈະໃຫຍ່ໂພດ ໃນດ້ານທັດສະນະທຶນຮອນທີ່ມີ. ສະນັ້ນຈຶ່ງໄດ້ຕົກລົງໃຫ້ບຸລິມະສິດ ຕໍ່58 ໂຄງການ ເພື່ອດຳເນີນກ່ອນປີ 2010. ມີຫຼາຍບັນທັດຖານທີ່ສາມາດນຳໃຊ້ເຂົ້າໃນການຈັດບຸລິມະສິດ ແຕ່ການພິຈາລະນາຕົ້ນຕໍ ແມ່ນເປົ້າໝາຍທີ່ວທັງໝົດຂອງຍຸດທະສາດວິໄສທັດ ເອີ້ນວ່າຄ່ອຍໆອອກຈາກກຸ່ມປະເທດ ດ້ອຍພັດທະນາໃນປີ 2020. ໃນທັດສະນະຂອງເປົ້າໝາຍນີ້, ໂຕຊີ້ບອກພື້ນຖານ ຈະເປັນການກະທົບສຸດທິ ຂອງມູນຄ່າເພີ່ມ. ຄະນະສຶກສາ ສະຫຼຸບໄດ້ວ່າຄວາມສາມາດ ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ຕ້ອງໄດ້ຖືກພິຈາລະນາ ເພື່ອຄວາມສຳເລັດຂອງແຜນການ ປະຕິບັດການ. ເພື່ອປະເມີນບັນທັດຖານນີ້, ມາດຖານລາຍການສຳລັບກວດ ແລະ ວາງລະບົບຄະແນນໄດ້ຖືກກະກຽມ ແລະ ແຕ່ລະໂຄງການໄດ້ຖືກປະເມີນບົນພື້ນຖານດັ່ງກ່າວນີ້.

11.2. ໃນເມື່ອຜົນຕອບແທນສຸດທິ ເປັນສິ່ງສຳຄັນ ຊຶ່ງບໍ່ໄດ້ຄຳນຶງເຖິງເວລາ ການທົດແທນຄືນຍ້ອນຊ່ວງເວລາອັນແນ່ນອນ ແລະ ໄດ້ການຄຳນຶງເຖິງ ມູນຄ່າທີ່ພົວພັນໂຄງການ ແລະ ເວລາທົດແທນຄືນໄດ້ລວມ ໃນບັນທັດຖານແລ້ວ.ໃນທັດສະນະຂອງເວລາ ໄລຍະຍາວ ຂອງແຜນປະຕິບັດການ ມັນມີຄວາມຈຳເປັນ ໃນການຈັດຫາພື້ນຖານ ແຫຼ່ງທຶນດ້ານວັດຖຸ ແລະ ຄົນ ເພື່ອຮັບປະກັນວ່າຜົນກະທົບດ້ານມູນຄ່າເພີ່ມ ໄດ້ສືບຕໍ່ ຕໍ່ເນື່ອງທັງ 20 ປີ.ອັນນີ້ແມ່ນອີງຕາມການລົງທຶນກໍ່ສ້າງພື້ນຖານ. ຕົວຢ່າງກິດຈະກຳ ໂຄງການການອົບຮົມຄູຝຶກ, ແນວພັນພື້ນຖານ ແລະ ການຂະຫຍາຍແນວພັນ, ການຄວບຄຸມພະຍາດສັດ ແລະ ການຜະລິດແນວພັນປາ ແລະ ການຄົ້ນຄ້ວາ. ຈາກການທົບທວນຄືນ ຈາກການສຶກສາຜ່ານມານີ້ໄດ້ສະແດງໃຫ້ເຫັນວ່າ ມີຄວາມດຸ່ນດ່ຽງລະຫວ່າງ ຂະແໜງການໃນການລົງທຶນ ແລະ ບາງຂະແໜງການຍ່ອຍ ທີ່ມີທ່າແຮງບໍ່ໄດ້ຮັບທຶນຢ່າງພຽງພໍ. ອັນນີ້ຈຳເປັນໄດ້ເນັ້ນຄືນ ແລະ ກໍໄດ້ເອົາເຂົ້າໃນບັນທັດຖານ. ມີບາງໂຄງການ ຕ້ອງການໄດ້ຮັບປະຕິບັດ ພ້ອມພຽງກັນກັບໂຄງການອື່ນ ເພື່ອເຮັດໃຫ້ທ່າແຮງເກີດເປັນຈິ່ງເຊັ່ນ ຕົວຢ່າງ ໂຄງການສົ່ງເສີມການປູກຜັກ ຈະຕ້ອງດຳເນີນໄປຕາມໂຄງການຂໍ້ມູນຂ່າວສານດ້ານຕະຫຼາດ. ໂຄງການເປັນເອກະສານກໍໄດ້ເອົາເຂົ້າເປັນບັນທັດຖານ ແລະ ການສ້າງການຈ້າງວຽກ ແລະ ຜົນກະທົບຂອງການພັດທະນາຊົນນະບົດ.

11.3. ຄະແນນທີ່ໃຫ້ແຕ່ລະໂຄງການ ທີ່ຈະໄດ້ດຳເນີນກ່ອນປີ 2010. ລາຍລະອຽດຂອງໂຄງການໄດ້ໃຫ້ຂໍ້ມູນພື້ນຖານ ດ້ານຈຸດປະສົງຍຸດທະສາດ, ລາຍລະອຽດ, ອົງປະກອບຂອງໂຄງ

ການ ແລະ ມູນຄ່າ, ແລະ ຄາດຄະເນໝາກຜົນທີ່ຈະໄດ້ຮັບ. ການຕີລາຄາບັນທັດຖານ ແລະ ຄະແນນສໍາລັບການໃຫ້ບຸລິມະສິດດັ່ງນີ້:

**ບັນທັດຖານຂອງການຕີລາຄາ ແລະ ໃຫ້ຄະແນນເພື່ອກໍານົດບຸລິມະສິດ.**

| ບັນທັດຖານການຕີລາຄາ | ຄະແນນການຕີລາຄາ |
|---|---|
| | (ຄະແນນ 1-5) |
| 1. ກະທົບໂດຍກົງຕໍ່ມູນຄ່າເພີ່ມ ( GDP) | |
| 2. ຄວາມສາມາດຂອງການປະຕິບັດຂອງອົງການຕ່າງໆຈາກຕາຕະລາງ ຄວາມສາມາດເພື່ອປະຕິບັດ | |
| 3. ມູນຄ່າຂອງໂຄງການແລະເວລາຂອງໝົນໄດ້ຮັບ | |
| 4. ເນັ້ນໜັກຄວາມເລິກເຊິ່ງຈາກລົງທຶນເຊັ່ນຝຶກອົບຮົມຄູຝຶກ, ການສົ່ງເສີມ, ການຂະຫຍາຍຈາກແນວພັນ | |
| 5. ຄວາມບໍ່ດຸນດ່ຽງຂະແໜງການຍ່ອຍຜົນຕອບແທນສູງ (⊆ 3 ໃນ 1) | |
| 6. ໂຄງການຕໍ່ໂຄງການເອກະລາດ | |
| 7. ສ້າງການທັງວຽກ/ ພັດທະນາຊົນນະບົດ | |
| ລວມຍ່ອຍ | |
| ລວມຂະແນນທັງໝົດ (ຄະແນນ ສູງສຸດ 35) | |

11.4. ກຸ່ມທີນຶ່ງ ປະກອບດ້ວຍ ຜົນການຈັດບຸລິມະສິດ ແລະ ການຈັດວາງຂັ້ນຕອນປະຕິບັດໂຄງການ ແລະ ແຜນງານ(11) 11 ໂຄງການ ແມ່ນຢູ່ໃນຂະແໜງການຍ່ອຍ ການປະມົງ, ການລ້ຽງສັດ, ເຄື່ອງປ່າຂອງດົງ, ການຂະຫຍາຍແນວພັນ, ການປູກໄມ້ໃຫ້ໝາກ ແລະ ການເງິນຊົນນະບົດ. ພົມດາໂຄງການເຫຼົ່ານີ້ ຈັດເປັນບຸລິມະສິດສູງ ເພາະວ່າທັງໝົດເຫຼົ່ານີ້ເກືອບທັງໝົດສາມາດປະຕິບັດໄດ້ໂລດ, ມີສັນຍານກະທົບຕໍ່ມູນເພີ່ມ ແລະ ສ້າງໂອກາດມີວຽກເຮັດງານທໍາ ໃຫ້ແກ່ຄອບຄົວຊາວກະສິກອນ. ກຸ່ມຕໍ່ໄປປະກອບດ້ວຍ 5 ໂຄງການພົວພັນກັບການເພີ່ມລາຍຮັບ ຂອງຊາວກະສິກອນເໝືອນກັນ ແຕ່ວ່າຈັດຢູ່ໃນບຸລິມະສິດຕໍ່າກ່ວາເພາະວ່າການເນັ້ນໜັກດ້ວຍການຄົ້ນຄ້ວານໍາໃຊ້ ແລະ" ທັງຮຽນແລະທັງເຮັດ" ທີ່ປົກກະຕິແລ້ວໃຊ້ເວລາ. ກຸ່ມໂຄງການຕໍ່ໄປ ສ່ວນໃຫຍ່ ແມ່ນຂອງໂຄງການ ທີ່ພົວພັນກັບການປູກກາເຟ, ພືດເນີນສູງ, ປູກພືດເພື່ອສົ່ງອອກ, ໂຄງການສໍາລັບ ຕາໜ່າງຂ່າວສານຕະຫຼາດສິນຄ້າ ແລະ ໂຄງການ ຊົນລະປະທານຂຸມຊົນ ຂະໜາດນ້ອຍ. ກຸ່ມໂຄງການ 3 ກຸ່ມທີ່ກ່າວມາຂ້າງເທິງນີ້ ໄດ້ຈັດເປັນບຸລິມະສິດ ຫລາຍກ່ວາ 60% ຂອງໂຄງການທັງໝົດຕາມຂະແໜງທີ່ກໍານົດໄວ້.

[1] ໂຄງການ ແລະ ແຜນງານ 58 ອັນໄດ້ລວມເປັນກຸ່ມໂຄງການ ແລະ ຊີ້ແຈງໃນຕາຕະລາງ 9.3 ຂອງບົດລາຍງານໃຫຍ່

11.5. ກຸ່ມໂຄງການຕໍ່ໄປທີ່ໄດ້ ຈັດບຸລິມະສິດຫລຸດ 60% ແມ່ນ ໂຄງການຢຸດຕິການເຮັດໄຮ່, ໂຄງການພັດທະນາຊົນນະບົດ ທີ່ເນັ້ນໜັກດ້ານກະສິກຳ, ການຫຼຸດຜ່ອນ ຜົນເສັຍຫາຍຈາກໄພນ້ຳຖ້ວມ, ແລະສິນເຊື່ອຊົນນະບົດ. ການຈັດຕັ້ງການຄຸ້ມຄອງກະສິກຳ ຂອງການວາງແຜນ ແລະສະຖິຕິຂອງກະຊວງກະສິກຳ ແລະ ປ່າໄມ້, ການພັດທະນາຊັບພະຍາກອນມະນຸດ, ການຝຶກອົບຮົມພະນັກງານ, ການສ້າງຄວາມເຂັ້ມແຂງ ຂອງຄວາມອາດສາມາດຂອງການຄົ້ນຄ້ວາ ວິໄຈທັງໝົດ ແມ່ນຈັດຢູ່ໃນບຸລິມະສິດ, ແຕ່ອັດຕາບຸລິມະສິດ ຕ່ຳຍ້ອນຊ່ວງໄລຍະເວລາ ແລະ ລົງທຶນຂ້ອນຂ້າງສູງ. ໂຄງການ ພັດທະນາຊັບພະຍາກອນມະນຸດໄດ້ຈັດເຂົ້າໃນລະດັບດຽວກັນເຊັ່ນ: ການບໍລິການການຝຶກອົບຮົມພາຍໃນ, ຝຶກອົບຮົມພະນັກງານແຂວງແລະເມືອງ ຝຶກອົບຮົມພະນັກງານສົ່ງເສີມ ແລະ ຊາວກະສິກອນ. ບັນຊີລາຍການກຸ່ມບຸລິມະສິດ ຂອງໂຄງການ ແມ່ນຢູ່ໃນຕາຕະລາງຄັດຕິດ.

**ການສະໜັບສະໜູນດ້ານການເງິນຂອງແຜນປະຕິບັດການ:**

11.6 ໄດ້ວາງສົມມຸດຖານວ່າ ການແບ່ງປັນການລົງທຶນຂອງລັດ ໃຫ້ການກະສິກຳ ຈະເພີ່ມຂຶ້ນ 18% ຕໍ່ປີໃນມູນຄ່າປັດຈຸບັນ. ນອກຈາກໄດ້ສົມມຸດວ່າ 15% ຂອງການລົງທຶນຂອງລັດໃນຂະແໜງກະສິກຳ ສຳລັບແຕ່ລະປີ ຈະບໍ່ໄດ້ຮັບການອານຸມັດ. ເພາະອັນນີ້ ມີສ່ວນແບ່ງຂອງໂຄງການຊ່ວຍເຫຼືອ ຈາກຕ່າງປະເທດຫຼາຍ ຮວມທັງການລົງທຶນຂອງລັດ ແລະ ໂຄງການຕ່າງໆເຫຼົ່ານີ້ ສະເລ່ຍມີອາຍຸ 5 ປີ. ທັງການເພີ່ມຂຶ້ນຂອງການລົງທຶນຂອງລັດໃນແຕ່ລະປີ ແລະ ສ່ວນ ແບ່ງທີ່ບໍ່ມີຂໍ້ຜູກມັດຂອງການລົງທຶນຂອງລັດໃນມູນຄ່າຄົງທີ່ ແມ່ນສົມມຸດວ່າມີແຕ່ລະປີສຳລັບກິດຈະກຳໂຄງການ/ແຜນງານໃໝ່. ບົນພື້ນຖານດັ່ງກ່າວນີ້ ທຶນງົບປະມານທີ່ມີໃນປີສຳລັບສະໜັບສະໜູນ ກິດຈະກຳແຜນປະຕິບັດ ການສະແດງໃນຕາຕະລາງດັ່ງລຸ່ມນີ້.

ຄາດຄະເນການລົງທຶນຂະແໜງການກະສິກຳ 2002/03 ຮອດປີ 2009 - 10 (ຕື້ກີບມູນຄ່າຄົງທີ່).

| | 2002-03 | 2003-04 | 2004-05 | 2005-06 | 2006-07 | 2007-08 | 2008-09 | 2009-10 |
|---|---|---|---|---|---|---|---|---|
| 1.ການກະສິກຳ | 712 | 840 | 991 | 1169 | 1379 | 1628 | 1921 | 2267 |
| 2.ປັບເຂົ້າໃນແງ່ຄົງທີ່ | 651 | 703 | 760 | 820 | 886 | 957 | 1033 | 1116 |
| 3.ເພີ່ມຂຶ້ນປີຕໍ່ປີ | 48 | 52 | 57 | 60 | 66 | 71 | 76 | 83 |
| 4.ການລົງທຶນຂອງລັດປາສະຈາກຂໍ້ຜູກມັດສຳລັບກິດຈະກຳໃໝ່ | 98 | 105 | 114 | 123 | 133 | 144 | 155 | 167 |
| 5.ລວມ (3 ແລະ 4 ຕື້ ກີບ) | 146 | 157 | 171 | 183 | 199 | 215 | 231 | 205 |
| 6.ລ້ານໂດລາສະຫະລັດ | 17.8 | 19.1 | 20.6 | 22.3 | 24.2 | 26.2 | 28.1 | 30.4 |
| 7.ຈ່າຍທຶນ | 14.2 | 15.3 | 10.0 | 11.15 | 12.1 | 13.1 | 14.05 | 15.2 |
| 8.ລາຍຈ່າຍເກີດຂຶ້ນ | 3.6 | 3.8 | 10.0 | 11.15 | 12.1 | 13.1 | 14.05 | 15.2 |

11.7 ແຫຼ່ງງົບປະມານທີ່ມີ ໄດ້ສົມທຽບກັບມູນຄ່າພື້ນຖານຂອງໂຄງການ ແລະ ແຜນງານບູລິມະສິດ ເພື່ອສະແດງໃຫ້ເຫັນ ການ ຂະຫຍາຍແຫຼ່ງທຶນໂດຍທົ່ວໄປ ທີ່ມີແກ່ໂຄງການ ແລະ ແຜນງານ. ບົນພື້ນຖານການສົມມຸດຈຶ່ງຈະແຈ້ງແລ້ວວ່າ ທຶນຈະຕ້ອງມີສຳລັບໂຄງການ ແລະ ແຜນງານບູລິມະສິດ 1, ບູລິມະສິດທີ 2 ແລະ ບູລິມະສິດທີ 3. ມູນຄ່າດັ່ງກ່າວເຫຼົ່ານີ້ແມ່ນເບື້ອງຕົ້ນ ແລະ ຕ້ອງການທົບທວນຄືນ ໃນເມື່ອການດຳເນີນການຮ່າງ ແລະ ກະກຽມໂຄງການລະອຽດຕື່ມ. ເຖິງຢ່າງໃດກໍ່ຕາມພື້ນຖານ ການສົມມຸດ ສຳລັບການມີແຫຼ່ງທຶນ, ເຫັນວ່າມີ 22 ລາຍການທີ່ນອນຢູ່ໃນໂຄງການບູລິມະສິດ 58 ໂຄງການສາມາດເລີ່ມຕົ້ນໄດ້ໃນປີທີນຶ່ງ.

11.8 ເຖິງຢ່າງໃດກໍ່ຕາມມີຫລາຍກວ່າ 80% ຂອງການລົງທຶນຂອງລັດ ໃນແຕ່ລະປີແມ່ນມາຈາກການຊ່ວຍເຫຼືອຈາກສາກົນ, ຄືວ່າຜູ້ໃຫ້ທຶນຊ່ວຍເຫຼືອຈະເລືອກໂຄງການ/ແຜນງານຈາກບັນຊີລາຍການໂຄງການບູລິມະສິດນັ້ນ. ຍິ່ງໄປກວ່ານັ້ນ, ຜູ້ໃຫ້ທຶນສະແດງເຈດຈຳນົງເລືອກເອົາໂຄງການໃຫຍ່ໆ ເພື່ອໃຫ້ທຶນ. ຈາກປະສົບປະການຜ່ານມາ ສະແດງໃຫ້ເຫັນແຈ້ງວ່າ ສປປ ລາວ ບໍ່ສາມາດບັນລຸ ເປົ້າໝາຍການລົງທຶນຂອງລັດ ໂດຍສະເພາະ ໃນພື້ນຖານຄວາມຕ້ອງການຂອງຂະແໜງການຍ່ອຍ, ຍ້ອນວ່າເປົ້າໝາຍການລົງທຶນທັງໝົດ ສູງກວ່າຄວາມອາດສາມາດດ້ານງົບປະມານ. ເພາະສະນັ້ນ ຈຶ່ງມີຄຳເຫັນແນະນຳວ່າ (I) ຫຼັງຈາກຮັບຮອງ ແລະ ແຈກຢາຍແຜນປະຕິບັດການແລ້ວ, ລັດຖະບານຈຶ່ງຈັດປະຊຸມກັບຜູ້ໃຫ້ທຶນ ເພື່ອອະທິ

ບາຍບຸລິມະສິດຕ່າງໆ ແລະ ບັນຫານການປະຕິບັດ; (ii) ອອກຂໍ້ກຳນົດໃໝ່ຕໍ່ຜູ້ສະໜັບສະໜູນການເງິນ ເພື່ອຮັບປະກັນວ່າໂຄງການ/ແຜນງານບຸລິມະສິດຖືກຮັບເອົາຈາກຜູ້ໃຫ້ທຶນ; ແລະ (iii) ຜູ້ໃຫ້ທຶນກໍ່ສາມາດລົງທຶນໃສ່ ຮ່ວງການໄຊ້ຈ່າຍເຄື່ອນໄຫວວຽກງານ.

## 12 ສະຫຼຸບຜົນ ແລະ ເນື້ອໃນເພີ່ມເຕີມ

ສະຫຼຸບຜົນ

12.1 ການສຶກສາໄດ້ກວມລວມທຸກໆລັກສະນະຂອງການພັດທະນາກະສິກຳຢູ່ ສປປລາວ. –ເປັນຜົນໃຫ້ໂຄງການສຶກສາໄດ້ສະເໜີ 110 –ແຜນງານ ແລະ ໂຄງການທີ່ກວມມີໂຄງການທີ່ກຳລັງປະຕິບັດຢູ່ 8 –ໂຄງການ ແລະ ມີ 58 –ໂຄງການ ແລະ ແຜນງານທີ່ຈະສາມາດປະຕິບັດໄດ້ກ່ອນປີ 2010. ດັ່ງຄຳເຫັນ ແລະ ຄຳສະເໜີຂອງຜູຕາງໜ້າຂອງອົງການຈັດຕັ້ງໃຫ້ທຶນໃນກອງປະຊຸມສຳມະນາລະດັບສູນກາງເພື່ອປຶກສາຫາລືກ່ຽງກັບການສຶກສາ ສປປລາວ ຈະບໍ່ມີທຶນ ແລະ ຊັບພະຍາກອນມະນຸດພຽງພໍເພື່ອຈັດຕັ້ງ ແລະ ປະຕິບັດໂຄງການຂະໜາດໃຫ່ຍຢ່າງຫຼວງຫຼາຍ ໃນຊຸມ 18ປີ ທີ່ຈະມາເຖິງນີ້ ມັນກໍ່ຍັງມີຄວາມບໍ່ແນ່ໃຈວ່າການປະຕິບັດທຸກໂຄງການ ແລະ ແຜນງານທີ່ສະເໜີນັ້ນຈະສາມາດບັນລຸເປົ້າໝາຍການຍົກລະດັບໃຫ້ປະເທດຫຼຸດພົ້ນອອກຈາກກຸ່ມປະເທດທຸກຍາກທີ່ສຸດໃນປີ 2020 ທີ່ຖືເປັນວັດຖຸປະສົງລະດັບຊາດ. ດັ່ງນັ້ນ, ການສຶກສາໄດ້ສະເໜີໃຫ້ລັດຖະບານສປປລາວ ໄດ້ຈັດຕັ້ງແຜນງານ ແລະ ໂຄງການຢ່າງສະເໝີ –ໂດຍປະຕິບັດຕາມບູລິມະສິດທີ່ໄດ້ສະເໜີໃນບົດລາຍງານແຜນແມ່ບົດສະບັບນີ້.

12.2 ຈະຕ້ອງໄດ້ຈົດຈຳວ່າ ການຈັດບຸລິມະສິດໃຫ້ແກ່ແຜນງານ ແລະ ໂຄງການໄດ້ສະເໜີວິທີການຈັດຕັ້ງປະຕິບັດໂຄງການຢ່າງກ້ວາງຂວາງ, ເປັນຢ່າງໄດກໍ່ຕາມ ການສຶກສາຂໍ້ແນະນຳໃຫ້ຄັດເລືອກເອົາແຜນງານ ແລະ ໂຄງການຕາມບຸລິມະສິດທີໄດ້ກຳກນົດໄວ້ໃນທີ່ນີ້. ການຈັດບຸລິມະສິດຕາມຖານເຂດພື້ນທີ່ ຫຼື ຕາມບຸລິມະສິດຂອງຂະແໜງການຍ່ອຍຈະຕ້ອງໄດ້ຖືກປັບຈຸເຂົ້າໃຫ້ສອດຄອງຕາມການຈັດບຸລິມະສິດລວມນີ້. ນອກນັ້ນຍັງຈະໄດ້ຄຳນຶງເຖິງນະໂຍບາຍການຊ່ວຍເຫຼືອຂອງບັນດາອົງການຈັດຕັ້ງໃຫ້ທຶນ ເພື່ອຄັດເລືອກເອົາແຜນນງານ ແລະ ໂຄງການ. ດັ່ງໄດ້ພິຈາລະນາໃນບົດລາຍງານສະບັບນີ້, ທິທດທາງຊ່ວຍເຫຼືອຂອງອົງການຈັດຕັ້ງສາກົນຕໍ່ສປປລາວ ເປັນເງື່ອນໄຂສຳຄັນໃນການຄັດເລືອກເອົາແຜນງານ ແລະ ໂຄງການ.

**ເນື້ອໃນການຈັດຕັ້ງປະຕິບັດ ແລະ ຄວາມຮຽກຮ້ອງຕ້ອງການເບື້ອງຕົ້ນ.**

12.3 ມີຫຼາຍຂົງເຂດທີ່ສາມາດກາຍເປັນຂໍ້ກຳນົດໃຫ້ແກ່ການປະຕິບັດແຜນປະຕິບັດງານຢ່າງນີ້ມນອນ ພາຍຫຼັງທີ່າແຜນດັ່ງກ່າວ ໄດ້ຖືກຮັບຮອງຈາກລັດຖະບານ. ນອກຈາກນັ້ນຍັງຈະ

ຕ້ອງໄດ້ມີມາດຕະການກະກຽມເພື່ອໃຫ້ການປະຕະບັດແຜນງານ ແລະ ໂຄງການໄດ້ຮັບຜົນເປັນຢ່າງສູງ. ການສຶກສາໄດ້--ໃຫ້ຄຳແນະນຳໃຫ້ປະຕິບັດມາດຕະການທີ່ຈຳເປັນດັ່ງຕໍ່ໄປນີ້ກ່ອນການຈັດຕັ້ງປະຕິບັດໂຄງການ ແລະ ແຜນງານ.

(1) <u>ມາດຕະການດ້ານນະໂຍບາຍ:</u> ການຈັດຕັ້ງປະຕິບັດແຜນປະຕິບັດງານຮຽກຮ້ອງໃຫ້ມີນະໂຍບາຍທີ່ ສ້າງແວດລ້ອມທີ່ອຳນວຍ ໃຫ້ແກ່ຊາວນາ ແລະ ຜູ້ຜະລິດປຸງແຕ່ງກະສິກຳ ໃຫ້ເຂົາເຈົ້າສາມາດ ດຳເນີນກິດຈະກຳການຜະລິດ ເສດຖະກິດຢ່າງກ້າວໜ້າ ປາສະຈາກການຄວບຄຸມ, ການແຊກແຊງ ແລະ ມີການແຂ່ງຂັນ ທີ່ບໍ່ຍຸດຕິທຳ. ເປັນຢ່າງໃດກໍ່ຕາມ, ຈະຕ້ອງມີການແຊກແຊງຂອງລັດ ເພື່ອເຮັດໃຫ້ຜົນຮັບມີປະສິດທິຜົນສູງ ແລະ ໂດຍທັນທີ. ໄດ້ໃຫ້ຄຳແນະນຳ ໃຫ້ລັດຖະບານສ້າງທີມງານ ສະເພາະກິດ ທີ່ປະກອບດ້ວຍພະນັກງານ ຂັ້ນສູງ ຂອງກະຊວງທີ່ກ່ຽວຂ້ອງ ເພື່ອທວນຄືນສະພາບ ການຈັດການຂອງລັດ ແລະ ກະກຽມໂຄງການໄລຍະສັ້ນໃຫ້ ເພື່ອຍົກເລີກການແຊກແຊງ ຂອງລັດທີ່ບໍ່ຈຳເປັນ ເພື່ອເປັນພື້ນຖານ ໃຫ້ແກ່ການປະຕິບັດ ແຜນປະຕິບັນງານ.

(2) <u>ການຈັດຕັ້ງປະຕິບັດ:</u> ບັນຫາຕົ້ນຕໍ ທີ່ຈະສະກັດກັ້ນການປະຕິບັດ ແຜນປະຕິບັດງານແມ່ນຂີດຄວາມຈຳກັດ ຂອງກະຊວງ /ພະແນກ / ຫ້ອງການກະກິກຳປ່າໄມ້ ໃນການອອກແບບ ແລະ ຈັດຕັ້ງປະຕິບັດໂຄງການ ແລະ ແຜນງານ ຍ້ອນການຂາດເຂີນພະນັກງານທີ່ໄດ້ຮັບການຝຶກອົບຮົມ ແລະ ມີປະສົບປະການ ບັນດາຊ່ອງທາງແກ້ໄຂບັນຫານີ້ແມ່ນໃຊ້ເຫື່ອແຮງ ແລະ ເວລາຫລາຍປີ ແລະ ເປັນຂໍ້ຈຳກັດໃນການຈັດຕັ້ງປະຕິບັດໂຄງການ. ໃນໄລຍະກະກຽມໂຄງການຂໍແນະນຳ ໃຫ້ກະຊວງກະສິກຳປ່າໄມ້ໄດ້ຈັດຕັ້ງ ໜ່ວຍງານ ຈັດຕັ້ງ ປະຕິບັດ ແຜນປະຕິບັດງານພາຍໃຕ້ ກົມແຜນການໜ່ວຍງານດັ່ງກ່າວ ຈະມີຄວາມຮັບຜິດຊອບ ກ່ອນອື່ນໝົດ ໃນການສ້າງທີມງານ ເພື່ອປະຕິບັດແຕ່ລະໂຄງການ ແລະ ແຜນງານທີ່ລະບຸໄວ້ໃນແຜນປະຕິບັດງານ. ຄວາມຄືບໜ້າໃນການປະຕິບັດໂຄງການ ຈະຕ້ອງໄດ້ຖືກກວດກາທົບທວນ ໃນແຕ່ລະປີ ແລະລາຍງານໃນກອງປະຊຸມ ລະດັບກະຊວງ ເພື່ອ ລາຍງານ ປຶກສາ ແລະ ຕັດສິນຄວາມຄືບໜ້າ ຂອງໂຄງການ, ຂໍ້ຈຳກັດ ແລະ ຂໍ້ເປັນຄໍແກ້ວ ແລະ ໂຄງການທີ່ຈະປະຕິບັດໃນປີຕໍ່ໄປ.

(3) <u>ທຶນໃຊ້ຈ່າຍປະຕິບັດງານ.</u> ຄວາມຈຳກັດດ້ານທຶນ ເພື່ອການປະຕິບັດ ແລະ ບູລະນະກິດຈະກຳ ທີ່ມີຢູ່ເປັນບັນຫາສຳຄັນ ຂອງກະຊວງກະສິກຳ ປ່າໄມ້ ແລະ ບັນດາກະຊວງອື່ນໆ ຂອງລັດຖະບານ. ໄດ້ໃຫ້ຂໍ້ແນະນຳໃຫ້ຈັດຕັ້ງ ແລະ ອານຸມັດທຶນໃຊ້ຈ່າຍປະຕິບັດງານ ທີ່ຕ້ອງການເພື່ອຈັດຕັ້ງປະຕິບັດແຜນປະຕິບັດງານ. ຖ້າຫາກງົບປະມານທຶນ

ບໍລິຫານ ແລະ ແຊກຄຸມເດີມ ບໍ່ພຽງພໍ ຈະຕ້ອງໄດ້ຫາທຶນຈາກແຫຼ່ງອື່ນ ເພີ່ມເຕີມ. ທຶນດັ່ງກ່າວອາດຈະຫາມາໄດ້ຈາກການຂາຍຢາວັກຊີນ ຂອງໂຮງງານລັດ, ຈາກການຂາຍເມັດພັນເຊື້ອປັບປຸງ, ຈາກການຂາຍເບ້ຍໄມ້ ແລະ ລູກປາ, ຈາກການຂາຍສັດລ້ຽງ ແລະ ຈາກລາຍຮັບອື່ນໆ ທີ່ເປັນຂອງລັດ. ທຶນດັ່ງກ່າວຈະຖືເປັນທຶນສົມທົບໃຫ້ແກ່ທຶນ ທີ່ໄດ້ຮັບມາຈາກງົບປະມານ ປະຈຳປີຂອງລັດ ແລະ ຈະຖືກນຳໃຊ້ເພື່ອຖົມຊຸມ ການໃຊ້ຈ່າຍງົບປະມານ ຂອງບັນດາໂຄງການທີ່ຕ້ອງການທີ່ສຸດ.

(4) <u>ການປະສານສົມທົບລະຫວ່າງໂຄງການຊ່ວຍເຫລືອຈາກສາກົນ</u>: ບັນດານະໂຍບາຍ ແລະ ວິທີການ, ໂດຍສະເພາະ ໃນການຈັດຕັ້ງປະຕິບັດໂຄງການ ພັດທະນາຂອງບັນດາໂຄງການຊ່ວຍເຫລືອ ຈາກສາກົນ ບໍ່ມີຄວາມເປັນເອກະພາບ. ຕົວຢ່າງ: ການສະໜອງວັດຖຸ ປັດໃຈການຜະລິດເຊັ່ນ: ປຸຍໃຫ້ແກ່ຊາວນາ ແມ່ນໃຊ້ວິທີການ ແລະ ມີລາຄາແຕກຕ່າງກັນລະຫວ່າງ ບັນດາໂຄງການ ສະພາບການດັ່ງກ່າວ ແມ່ນບໍ່ສອດຄ່ອງ ກັບນະໂຍບາຍ ໃຫ້ມີຄວາມເປັນເອກະພາບ ໃນລັດຖະບານ ແລະ ພ້ອມດຽວກັນນັ້ນ ໄດ້ແຊກແຊງບິດເບືອນຂໍ້ມູນຂ່າວສານດ້ານການຕະຫຼາດ. ດັ່ງນັ້ນ ຈຶ່ງມີຄວາມຈຳເປັນ ໃຫ້ມີການປະສານ ສົ ທົບ ແລະ ມີຂໍ້ບັງຄັບໃຫ້ປະຕິບັດ ທີ່ດນຳເພື່ອຮັບປະກັນ ໃຫ້ໂຄງການຊ່ວຍເລືອກຈາກສາກົນ ທຸກໂຄງການໄດ້ປະຕິບັດ ຖືກຕ້ອງກັບແນວທາງນະໂຍບາຍ ແລະ ຍຸດຖະສາດຂອງລັດຖະບານ.

(5) <u>ຄວາມຕ້ອງການສ້າງກ ົນໄກປະສານງານ ລະຫວ່າງອົງການຈັດຕັ້ງ ບັນດາໂຄງການ ແລະ ແຜນງານ</u>: ປະກອບມີ: ການຈັດຕັ້ງ ແລະ ປະຕິບັດຈາກຫຼາຍພາກ ອົງການຈັດຕັ້ງ ໃນລັດຖະບານ. ມັນມີຄວາມຈຳເປັນ ທີ່ໂຄງການດັ່ງກ່າວ ໄດ້ຮັບການປະສານສົມທົບ ແລະ ຈັດວາງໃຫ້ດຳເນີນ ແບບມີປະສິດທິຜົນສູງ. ເພື່ອແກ້ໄຂຂອດປະສານງານ ລະຫວ່າງອົງການຈັດຕັ້ງ ທີ່ກ່ຽວຂ້ອງສະເໜີໃຫ້ຈັດຕັ້ງ ໜ່ວຍປະສານງານຫຼາຍໜ່ວຍ ລະຫວ່າງບັນດາກະຊວງ ທີ່ກ່ຽວຂ້ອງ.

(6) <u>ກອງປະຊຸມປະຈຳປີເພື່ອລາຍງານຄວາມຄືບໜ້າໃຫ້ສາກົນ:</u> ຄາດຄະເນວ່າການປະກອບສ່ວນຂອງສາກົນ ໃນໂຄງການລົງທຶນແຫ່ງລັດ ແລະ ໃນໂຄງການທີ່ລະບຸໃນແຜນປະຕິບັດງານ ຈະມີຈຳນວນຫລວງຫລາຍ. ເວລາທີ່ແຜນປະຕິບັດງານ ໄດ້ຖືກຮັບຮອງຈາກລັດຖະບານແລ້ວ ຈະຕ້ອງໄດ້ຈັດປະຊຸມລາຍງານຕໍ່ ອົງການຈັດຕັ້ງສາກົນ ລວມທັງອົງການຈັດຕັ້ງບໍ່ແມ່ນລັດຖະບານ. ຈຸດປະສົງຂອງກອງປະຊຸມ ແມ່ນເພື່ອອະທິບາຍ ໃຫ້

ຄວາມກະຈ່າງແຈ້ງ ຕໍ່ບັນດາເປົ້າໝາຍ ແລະ ຕົວເລກ ຄາດໝາຍ ຂອງແຜນປະຕິບັດວຽກງານ; ການຈັດບຸລິມະສິດ ແລະ ການຈັດອັນດັບ ການປະຕິບັດໂຄງການ ແລະ ເພື່ອລະບຸໜ້າທີ່ ວຽກງານຂອງລັດຖະບານ. ກອງປະຊຸມຈະໄດ້ຈັດຂຶ້ນ ເປັນປະຈຳໃນທຸກໆປີ ເພື່ອສາມາດສ່ອງແສງ ຄວາມຄືບໜ້າ ຂອງໂຄງການ ແລະ ແຜນງານຕ່າງໆ, ບັນດາຂໍ້ຈຳກັດ ແລະ ຂໍ້ເປັນຄໍແກ້ວ ທີ່ໂຄງການໄດ້ປະສົບພົບພໍ້ ແລະ ລາຍງານແຜນການປະຕິບັດໃນປີຕໍ່ໄປ.

(7) <u>ສາຍພົວພັນ ລະຫວ່າງ ກະຊວງກະສິກຳ-ປ່າໄມ້ ແລະ ບັນດາແຂວງ</u> ຜ່ານການປະຕິບັດນະໂຍບາຍ ການມອບໂອນຄວາມຮັບຜິດຊອບ ໃຫ້ແກ່ທ້ອງຖິ່ນ ມີຄວາມຮູ້ສຶກວ່າ ສາຍພົວພັນລະຫວ່າງກະຊວງກະສິກຳ ແລະ ບັນດາອຳນາດການປົກຄອງ ທ້ອງຖິ່ນຂອງລັດຖະບານ ໃນການຈັດຕັ້ງປະຕິບັດໂຄງການ ແມ່ນຍັງອ່ອນ. ໃນຄະນະທີ່ ພະແນກກະສິກຳ-ປ່າໄມ້ ມີຂີດຈຳກັດ ດ້ານການບໍລິຫານ ແລະ ຂາດພະນັກງານ ງົບປະມານ ຊ້ຳພັດຢູ່ໃນກຳມືຂອງຫ້ອງການ ປົກຄອງແຂວງ ເຮັດໃຫ້ກະຊວງ ມີຂໍ້ຈຳກັດໃນການ ກວດກາຕິດຕາມແລະ ຊຸກຍູ້ການປະຕິບັດໂຄງການ. ດ້ວຍເຫດນີ້ ສະເໜີໃຫ້ກົມແຜນການ ໄດ້ສ້າງລະບົບ ຕິດຕາມກິດ ຈະກຳຂອງໂຄງການ ພ້ອມທັງກວດກາ ຕິດຕາມດ້ານການເງິນ ແລະ ຜົນສຳເລັດ ຂອງໂຄງການທີ່ແຂວງປະຕິບ ັດ.

(8) <u>ການຈັດວາງໂຄງການລົງທຶນ ແຫ່ງລັດ (PIP) ເຂົ້າໃນແຜນການປະຕິບັດງານ</u> ວິທີການເພື່ອຮ່າງໂຄງການ ລົບທຶນແຫ່ງລັດ ແມ່ນເຮັດແຕ່ເທິງລົງລຸ່ມ ແລະ ແຕ່ຖານຂຶ້ນມາ ບົນພື້ນຖານ ການປະກອບສ່ວນ ສ້າງແຜນຈາກບ້ານ ແລະ ເມືອງຂຶ້ນມາ. ກະຊວງກະສິກຳຈະຕ້ອງໄດ້ຈັດວາງ ໃຫ້ແຜນປະຕິບັດງານ ເຂົ້າໃນແຜນງານ ຂອງຂະແໜງກະສິກຳ ແລະອອກຄຳສັ່ງແນະນຳ ໃນການຈັດຕັ້ງປະຕິບັດ ການຂຶ້ນແຜນໂຄງການລົງທຶນແຫ່ງລັດ ໃຫ້ແກ່ແຂວງ ແລະ ເມືອງ ໃນແຕ່ລະປີ ພ້ອມທັງຮັບປະກັນ ໃຫ້ຂະບວນການ ສ້າງໂຄງການລົງທຶນແຫ່ລັດ ໄດ້ໄປຕາມບຸລິມະສິດ ທີ່ລະບຸໄວ້ໃນແຜນປະຕິບັດງານ. ກະຊວງກະສິກຳປ່າໄມ້ ຈະຕ້ອງໄດ້ກວດກາຄືນເນື້ອໃນຂອງຮ່າງແຜນການ 05 ປີ ເພື່ອຮັບປະກັນ ໃຫ້ແຜນປະຕິບັດງານ ສອດຄ່ອງກັບແຜນພັດທະນາ 5 ປີ ຂອງກະຊວງ.

(9) <u>ໜ້າທີ່ຂອງລັດບໍລິຫານໃນແຜນປະຕິບັດງານ:</u> ຄວາມຕ້ອງການ ຍົກລະດັບຄວາມຮູ້ຄວາມສາມາດໃນທຸກດ້ານ ແລະ ການຂາດເຂີນຄວາມຊຳນານ ໃນໜ່ວຍພະນັກງານພະລາກອນຂອງລັດ ເປັນຄວາມຈຳກັດຕົ້ນຕໍເພື່ອ ປັບປຸງການຈັດຕັ້ງ ປະຕິບັດໂຄງການ.

ສະພາບນີ້ ປະກອບດ້ວຍຫລາຍສາຍເຫດ, ອັນສຳຄັນກວ່າໝູ່ແມ່ນສະພາບ ເງິນເດືອນຕ່ຳຂອງພະນັກງານ. ອີກດ້ານໜຶ່ງ ຍັງຂາດໄມ້ງັດ ໃນການເຮັດວຽກ ຢູ່ເຂດຮ່າງໄກສອກຫຼີກ, ຂາດພາຫະນະ ແລະ ທຶນຮອນ ເພື່ອໄປເຮັດວຽກສະໜາມ ພ້ອມນັ້ນ ຍັງມີງົບປະມານເຄື່ອນໄຫວ ບົວລະບັດຮັກສາທີ່ຈຳກັດ, ທຸກສິ່ງທຸກຢ່າງ ທີ່ກ່າວມານີ້ ແມ່ນສະກັດກັ້ນຄວາມສາມາດ ໃນການຈັດຕັ້ງປະຕິບັດ ໃນລະດັບທ້ອງຖິ່ນ. ຂໍ້ຈຳກັດໃນການປະຕິບັດ ໃນລະດັບທ້ອງຖິ່ນ ແລະ ບັນຫາອື່ນໆ ທີ່ຂັດຂວາງຄວາມຄືບໜ້າ ໃນການປະຕິບັດໂຄງການຈະຕ້ອງໄດ້ນຳໄປ ພິຈາລະນາ ໃນຄະນະກຳມະການຊີ້ນຳ ການປະຕິຮູບລະບົບຄຸ້ມຄອງຂອງລັດ ທີ່ກຳລັງພິຈາລະນາແກ້ໄຂ ສ້າງໂຄງການ ປັບປຸງລະບົບບໍລິຫານຄຸ້ມຄອງ ຂອງລັດ. ເປັນຢ່າງໃດກໍ່ຕາມ, ມັນຈະບໍ່ມີຊ່ອງທາງແກ້ໄຂ ທີ່ງ່າຍດາຍ, ແລະ ການແກ້ໄຂບັນຫາດັ່ງກ່າວ ຈະຕ້ອງໃຊ້ເວລາຫລາຍປີ.

(10) <u>ການຮ່າງໂຄງການແລະຄາດຄະເນງົບປະມານ</u>: ບັນຊີໂຄງການແລະຮ່າງແຜນງານທີ່ສະເໜີໃນແຜນປະຕິບັດງານນີ້ ແມ່ນມີຮູບລັກສະນະ ເປັນໂຄງສ້າງລວມ. ບັນດາວັດຖຸປະສົງ, ຍຸດທະສາດ, ການອອກແບບ, ແລະຄ່າໃຊ້ຈ່າຍ ຂອງໂຄງການ ຈະຕ້ອງໄດ້ຖືກສຶກສາຄິດໄລ່ຄືນໃໝ່ ຕາມຂໍ້ມູນອັນໃໝ່.

**ການສຶກສາແຜນແມ່ບົດ**

**ກ່ຽວກັບ**

**ການພັດທະນາກະສິກຳຮອບດ້ານ**

**ໃນ**

**ສາທາລະນະລັດປະຊາທິປະໄຕປະຊາຊົນລາວ**

**ເຫລັ້ມທີ 1ບົດລາຍງານຕົ້ນຕໍ**

## <u>ສາລະບານ</u>


**ແຜນທີ່ຂອງ ສ.ປ.ປ.ລາວ.**

ບົດສັງລວມ

**ພາກທີ1:** ຄຳນຳ

1.1 .ສະພາບທົ່ວໄປ....................1.1

1.2 .ພື້ນຖານແລະຈຸດປະສົງ.................... 1.1

1.2.1 .ພື້ນຖານຂອງການສຶກສາ....................1.1

1.2.2 ຈຸດປະສົງຂອງການສຶກສາ....................1.3

1.3 ຂັ້ນຕອນການສຶກສາ ແລະ ຄວາມກ້າວໜ້າຂອງວຽກ....................1.3

1.3.1 ຂັ້ນຕອນການສຶກສາ ....................1.3

1.3.2 .ຄວາມກ້າວໜ້າຂອງການສຶກສາ....................1.5

<u>**ພາກທີ2**</u>: ພື້ນຖານກ່ຽວກັບເສດຖະກິດ ແລະ ສັງຄົມ....................2.1

2.1 ແຜນພັດທະນາເສດຖະກິດສັງຄົມ ແລະ ຄວາມຄືບໜ້າ....................2.1

2.1.1 .ຄວາມຄືບໜ້າລວມຂອງເສດຖະກິດມະຫາພາກ....................2.1

2.1.2 . ການເງິນພາຍໃນ ແລະ ພາຍນອກ....................2.4

2.1.3 ສິ່ງທ້າທາຍຂອງການພັດທະນາລະດັບຊາດ ....................2.7

2.2. ຍຸດທະສາດ ການພັດທະນາເສດຖະກິດສັງຄົມ 2010-2020 ແລະ ແຜນການ 5 ປີ
ຄັ້ງທີ່ 5 2001-2005....................2.9

2.2.1. ຍຸດທະສາດພື້ນຖານຂອງການພັດທະນາໄລຍະ ເຖິງປີ 2010-2020. ....................2.9

2.2.2 ແຜນພັດທະນາເສດຖະກິດສັງຄົມ ຄັ້ງທີ່ 5 (2001-2005)....................2.10

2.3 .ການປະຕິບັດການຄ້າໃນໂຄງປະກອບການຄ້າໂລກ....................2.14

2.4 ໂຄງສ້າງການປົກຄອງແຫ່ງຊາດ ແລະ ການກະຈາຍອຳນາດໃຫ້ທ້ອງຖິ່ນ....................2.20

2.5. ການສ້າງເສດຖະກິດສັງຄົມໃນເຂດຊົນນະບົດ....................2.24

2.5.1 ໂຄງສ້າງຂອງສັງຄົມ.................... 2.24

2.5.2 ການບໍລິໂພກ, ລາຍຮັບ ແລະ ວຽກເຮັດງານທຳໃນເຂດຊົນນະບົດ....................2.25

2.5.3 ໂຕຊີ້ບອກທາງດ້ານສັງຄົມທີ່ເປັນຂໍ້ກຸນແຈ....................2.26

2.6. ບັນຫາສັງຄົມ....................2.27

2.6.1. ວຽກງານຊົນເຜົ່າ. ....................2.27

2.6.2 .ບັນຫາກ່ຽວກັບບົດບາດຍິງ-ຊາຍ.................... 2.29

2.6.3 ການຍົກຍ້າຍສ້າງຕັ້ງຖິ່ນຖານໃໝ່........................................2.30

2.6.4 .ການລົບລ້າງຄວາມທຸກຈົນ........................................2.32

**<u>ພາກທີ3</u>** : ເບື້ອງຫຼັງ ແລະ ຂໍ້ຈຳກັດຂອງການກະສິກຳລາວ

3.1 .ນະໂຍບາຍ ແລະ ຍຸດທະສາດຂອງການພັດທະນາກະສິກຳໃນ ສ .ປ.ປ. ລາວ........................................3.1

3.1.1 .ສະພາບລວມ ແລະ ໝາກຜົນການພັດທະນາກະສິກຳ..........-..........3.1

3.1.2 .ຍຸດທະສາດຂອງລັດຖະບານຕໍ່ຂະແໜງການກະສິກຳ........................................3.2

3.2 .ສະພາບເງື່ອນໄຂ ແລະ ຂໍ້ຈຳກັດຂອງກະສິກຳລາວ..........-..........3.4

3.2.1 .ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ........................................3.5

3.2.2 .ສະຖາບັນຄຸ້ມຄອງ ແລະ ຈັດຕັ້ງ........................................3.7

3.2.3 .ການຄອບຄອງທີ່ດິນ........................................3.16

3.2.4 .ການພັດທະນາຊັບພະຍາກອນມະນຸດ........................................3.18

3.2.5 .ພືດ..........-..-.-..-..........3.23

3.2.6 .ການລ້ຽງສັດ ແລະ ການປະມົງ........................................3.33

3.2.7 .ການຖາງປ່າເຮັດໄຮ່..........-..-..........3.37

3.2.8 .ການຕະຫລາດ ແລະ ການປຸງແຕ່ງກະສິກຳ.......... ..-..........3.41

3.2.9 .ການເງິນຊົນນະບົດ........................................3.45

3.2.10 .ແນວຄວາມຄິດການພັດທະນາຊົນນະບົດ........................................3.51

3.2.11 .ຊົນລະປະທານ........................................3.55

3.3 .ການຮ່ວມມືສາກົນກ່ຽວກັບການກະສິກຳກັບການພັດທະນາ ຊົນນະບົດ........................................3.63

3.3.1 .ການຮ່ວມມື ແລະ ການຊ່ວຍເຫຼືອຈາກສາກົນ..........-..-.-..........3.63

3.3.2 ບົດບາດຂອງອົງການບໍ່ແມ່ນລັດຖະບານໃນການພັດທະນາກະສິກຳແລະຊົນນະບົດ..........3.67

3.4 .ກິດຈະການ ການພັດທະນາກະສິກຳໃນປະຈຸບັນແລະທີ່ຜ່ານມາ........................................3.69

3.4.1 .ໂຄງການພັດທະນາກະສິກຳຂອງກະຊວງກະສິກຳປ່າໄມ້........................................3.69

3.4.2 .ບົດຮຽນຖອດຖອນໄດ້ຈາກການຊ່ວຍເຫລືອທີ່ຜ່ານມາ..........-..-..........3.69

**<u>ພາກທີ4</u>** : ການປະເມີນຜົນຮູບການຜະລິດກະສິກຳ ແລະ ທ່າແຮງສຳລັບການພັດທະນາ

4.1 .ການປະເມີນຜົນຮູບການຜະລິດດ້ານກະສິກຳ........................................4.1

4.1.1 .ວິທີການວິເຄາະ........................................4.1

4.1.2 .ການຈັດກຸ່ມຂອງເມືອງ..........-...-..........4.8

4.2 .ການປະເມີນທ່າແຮງດ້ານກະສິກຳ..........-..........4.16

4.2.1 .ວິທີການປະເມີນ........................................4.16

4.2.2 .ຜົນຮັບຂອງການປະເມີນຜົນສຳເລັດດ້ານທ່າແຮງກະສິກຳ.......... ..-. ..-..........4.20

4.3. ຄວາມຮັ່ງມີໃນການຂະຫຍາຍເນື້ອທີ່ກະສິກຳໃໝ່ ແລະ
ການຈັດບູລິມະສິດເພື່ອເກັບກູ້ລະເບີດ(UXO). ........ ........ ........ ........ ........ ........ ......4.25

**ພາກທີ5** : ທິດທາງແລະແນວຄວາມຄິດ ຕິດພື້ນຖານສຳລັບແຜນດຳເນີນງານ.

5.1 .ຈຸດປະສົງ ແລະ ຍຸດທະສາດພັດທະນາສຳລັບແຜນດຳເນີນງານ....................5.1
5.2 .ເສດຖະກິດຕະຫລາດ....................5.2
5.3 .ໂຄງສ້າງຂອງການພັດທະນາກະສິກຳ....................5.4
    5.3.1 ໂຄງສ້າງດ້ານປະຊາກອນ....................5.4
    5.3.2 .ໂຄງປະກອບເສດຖະກິດມະຫາພາກ....................5.6
    5.3.3 .ໂຄງສ້າງນະໂຍບາຍ....................5.10
    5.3.4 .ບົດບາດຂອງພາກເອກະຊົນໃນແຜນການປະຕິບັດ....................5.12
5.4 .ວິທີການສ້າງໂຄງການ/ແຜນງານໃນແຜນປະຕິບັດການ....................5.13
5.5 .ການພັດທະນາກະສິກຳ ແລະ ຊົນນະບົດຕາມເຂດພື້ນທີ່....................5.18
    5.5.1 .ທົ່ວເລື້ອງ....................5.18
    5.5.2 .ເນື້ອທີ່ເຂດເນີນສູງ ແລະ ເຂດພູດອຍພາກເໜືອ....................5.19
    5.5.3 .ກຳແພງນະຄອນແລະເຂດອ້ອມຂ້າງ....................5.22
    5.5.4 .ເຂດພາກກາງ ແລະ ພາກໃຕ້....................5.23
    5.5.5 .ເຂດພູພຽງບໍລິເວນ....................5.25

**ພາກທີ6** : ຈຸດປະສົງແລະຍຸດທະສາດການພັດທະນາກະສິກຳໃນຂະແໜງການຍ່ອຍ

6.1ທົ່ວເລື້ອງ....................6.1
6.2 .ການພັດທະນາຊັບພະຍາກອນດິນ ແລະ ນ້ຳ....................6.1
6.3. ສະຖາບັນ ແລະ ການຈັດຕັ້ງ. ....................6.9
6.4 .ການພັດທະນາຊັບພະຍາກອນມະນຸດ.................... 6.15
6.5. ການປູກຝັງ.................... 6.22
6.6 .ການລ້ຽງສັດແລະການປະມົງ.................... 6.31
    6.6.1 .ການລ້ຽງສັດ....................6.31
    6.6.2 .ການປະມົງ....................6.38
6.7 .ການຫຼຸດຜ່ອນການຖາງປ່າເຮັດໄຮ່ດ້ວຍການເຮັດກະເສດ-ປ່າໄມ້
    ປະສົມປະສານເຄື່ອງປ່າຂອງດົງ ປະກອບສ່ວນສ້າງຫຼຸດຜ່ອນຄວາມທຸກຈົນໃນເຂດຊົນນະບົດ....................6.42
6.8 .ການຕະຫຼາດແລະການປຸງແຕ່ງ.................... 6.50
6.9 .ການເງິນຊົນນະບົດ.................... 6.55
6.10 .ການພັດທະນາຊົນນະບົດ....................6.59
6.11 .ຊົນລະປະທານ.................... 6.65

**ພາກທີ7** :ແຜນການປະຕິບັດວຽກງານ ສຳລັບ ການພັດທະນາກະສິກຳແບບປະສົມປະສານ

7.1 .ແຜນການປະຕິບັດວຽກງານປີ 2020 ສຳລັບການພັດທະນາກະສິກຳຮອບດ້ານ....................7.1
7.2 .ການເລືອກ ແຜນງານ ແລະ ໂຄງການ ເພື່ອຈັດຕັ້ງປະຕິບັດກ່ອນ 2010....................7.27
    7.2.1 .ວິທີການຈັດຕາມລຳດັບ....................7.27
    7.2.2 .ການປະເມີນຜົນ ສຳລັບການຈັດລຽງຕາມລຳດັບ....................7.29

**<u>ພາກທີ8</u>** : ການປະເມີນຜົນດ້ານສະພາບແວດລ້ອມເພື່ອຈັດລຽງບູລິມະສິດໂຄງການ
8.1 ລະບຽບການ ແລະ.ກົດໝາຍ ສິ່ງແວດລ້ອມ....................8.1
8.2 .ການກໍ່ຕັ້ງ ກົ່ນກອງດ້ານສະພາບແວດລ້ອມສຳລັບໂຄງການຈຸດສຸມ....................8.8

**<u>ພາກທີ9</u>** : ທິດທາງການປະຕິບັດເຖິງປີ 2010
9.1 ເປົ້າໝາຍການພັດທະນາ ທີ່ເປັນພື້ນຖານ ຈັດບູລິມະສິດ ໃນບາດກ້າວທີ 2 ຂອງການສຶກສາ ........ .......9.1
9.2 ຜົນຂອງການຈັດບູລິມະສິດ ແລະ ລຳດັບຄວາມສຳຄັນຂອງໂຄງການ ແລະ ແຜນງານ....................9.3
9.2.1 . ຫົວເລື່ອງ....................9.3
9.2.2. ຜົນຂອງການຈັດບູລິມະສິດ ໂດຍການວາງຄະແນນ....................9.4
9.2.3. ການຈັດບູລິມະສິດ ຕາມແນວຄວາມຄິດການພັດທະນາ ກະສິກຳ ແລະ ຊົນນະບົດ ຕາມເຂດພື້ນທີ່....................9.9
9.2.4. ການຈັດບູລິມະສິດ ຕາມຂະແໜງການຍ່ອຍ....................9.9
9.3. ຜົນຂອງການຈັດບູລິມະສິດ ແລະ ລຳດັບຕາມຄວາມສຳຄັນຂອງໂຄງການ ແລະ ແຜນງານ....................9.15

**<u>ພາກທີ່ 10</u>**: ບົດສະຫຼຸບ ແລະ ການຈັດຕັ້ງປະຕິບັດ.
10.1. ບົດສະຫຼຸບ. ....................10.1
10.2. ການຈັດຕັ້ງປະຕິບັດ. ....................10.2
10.2.1. ຄຳນຳ. ....................10.2
10.2.2. ນະໂຍບາຍເພື່ອປະຕິບັດ. ....................10.2
10.2.3. ການຈັດວາງການປະຕິບັດ....................10.2
10.2.4 ລາຍຈ່າຍຂອງທຶນທີ່ເກີດຂື້ນ. ....................10.3
10.2.5 ປະສານງານກັບໂຄງການຊ່ວຍເຫຼືອຈາກສາກົນ. ....................10.4
10.2.6 ຕ້ອງການກົນໄກສຳລັບການປະສານງານພາຍໃນອົງການ. ....................10.5
10.2.7 ກອງປະຊຸມປະຈຳປີ ເພື່ອທົບທວນ ແລະ ລາຍງານແກ່ຜູ້ໃຫ້ທຶນ. ....................10.5
10.2.8 ການຕິດພັນຂອງກະຊວງກະສິກຳ ແລະ ປ່າໄມ້ແຂວງ. ....................10.6
10.2.9 ການຮວມເອົາການລົງທຶນຂອງລັດ ເຂົ້າກັບແຜນປະຕິບັດການ. ....................10.6
10.2.10 ບົດບາດການຄຸ້ມຄອງຂອງລັດຕໍ່ແຜນປະຕິບັດການ. ....................10.7
10.2.11 ໂຄງຮ່າງໂຄງການ ແລະ ການປະເມີນມູນຄ່າ. ....................10.7

## <u>ຕາຕະລາງ</u>

1.1 ລາຍຊື່ ຂອງທີມນັກສຶກສາໃຈກາ ແລະ ຜູ້ປະສານງານຂອງ ກະຊວງກະສິກຳປ່າໄມ້ .................... .... .... .... ....................1.9
2.1 ສັນຫຼຸບ ອັດຕາການເຕີບໂຕຂອງ GDP ຕົວຈິງ. ........ ........ .... .... .... ....................2.3
2.2 ເສດຖະກິດ ແລະ ຕົວຊີ້ບອກການເງິນແຕ່ປີ 1992-2000 ຂອງ ສປປລາວ. .... .... .... .... .......2.4
2.3 ງົບປະມານລວມຂອງ ລັດຖະບານແຕ່ປີ 1996-1999(ຕື້ກີບ).................... 2.5

2.4 ລວມຜູ້ໃຫ້ທຶນຕໍ່ບັນດາໂຄງການຮ່ວມມືກັບ ຕ່າງປະເທດໃນວຽກງານກະສິກຳ. ... 2.5

2.5 ສັງລວມການຈັດຕັ້ງ ປະຕິບັດແຜນການລົງທຶນຂອງລັດ ປີ 1996-2000. ... 2.6

2.6 ສັງລວມການຈັດອັນດັບ ພາສີອາກອນ ໃນໝວດທີ່ສຳຄັນ. ... 2.15

2.7 ໂອກາດການເຂົ້າຮ່ວມສິດທິພິເສດຂອງຕະຫຼາດ
ໃນປະເທດໄທຂອງ ສປປລາວ. ... 2.19

2.8 ສ່ວນແບ່ງທີ່ຄິດໄລ່ເປັນເປີເຊັນ ຂອງການບໍລິໂພກ
ໃນແຕ່ລະເຂດສົກປີ 1997-1998. ... 2.25

2.9 ໄວສະກັນໃຊ້ເວລາໃນການເຮັດວຽກສ້າງລາຍຮັບເພີ່ມ ໃນເຂດຊົນນະບົດ... 2.26

2.10 ຕົວຊີ້ບອກທີ່ສຳຄັນຂອງສັງຄົມ. ... 2.27

2.11 ເປີເຊັນຂອງຜູ້ທຸກຈົນໃນເຂດແຄວ້ນ ແລະ
ແຂວງໃນສົກປີ 1997-1998. ... 2.32

2.12 ຜົນຂອງຄວາມທຸກຈົນໃນແຂວງ ແລະ ເຂດຊົນນະບົດ
ແລະ ຕົວເມືອງ. ... 2.33

3.1 ລວມຍອດພາຍໃນ ຜະລິດຕະພັນ 1999. ... 3.1

3.2 ອັດຕາການເຕີບໃຫຍ່ຂອງຂະແໜງການຍ່ອຍ 1994-1999
ໃນລາຄາປີ 1999. ... 3.2

3.3 ແນວຄິດສະເພາະການພັດທະນາ ເຂດທົ່ງພຽງ ແລະ ພູດອຍ. ... 3.4

3.4 ການນຳໃຊ້ດິນ 1928 ແລະ 1989 (000ເຮັກຕາ). ... 3.6

3.5 ໜ້າທີ່ຂອງບັນດາກົມ ແລະ ສະຖາບັນຂອງກະຊວງກະສິກຳ
ແລະ ປ່າໄມ້. ... 3.10

3.6 ພະນັກງານກະສິກຳ ແລະ ປ່າໄມ້ ແຍກຕາມລະດັບການສຶກສາ
ແລະ ການກະຈາຍ. ... 3.19

3.7 ການຈັດວາງ ພະນັກງານແບ່ງຕາມພາກ. ... 3.19

3.8 ພະນັກງານຂັ້ນເມືອງໄປແຕ່ລະພາກ. ... 3.19

3.9 ສູນຝຶກອົບຮົມກະສິກຳ ... 3.22

3.10 ສັງລວມເຂດນິເວດກະສິກຳ ໃນ ສປປລາວ. ... 3.23

3.11 ເນື້ອທີ່ຖືຄອງ ອີງຕາມການໃຊ້ດິນ. ... 3.23

3.12 ເນື້ອທີ່ເກັບກ່ຽວຜະລິດຕະພາບຂອງພືດທີ່ສຳຄັນ. ... 3.25

3.13 ຄອບຄົວແນວພັນປັບປຸງ ຝຸ່ນ, ຢາ ແລະ ກົນຈັກ. ... 3.26

3.14 ຄາດຄະເນດຸ່ນດ່ຽງເຂົ້າ (000 ໂຕນ). ... 3.30

3.15 ການຄາດຄະເນເບື້ອງຕົ້ນກ່ຽວກັບ ການຜະລິດເຂົ້າ ແລະ
ການຊົມໃຊ້ຮອດປີ 2020. ... 3.33

3.16 ຄາດຄະເນຈຳນວນສັດລ້ຽງ 1996-2000. ... 3.33

3.17 ການນຳໃຊ້ດິນ ແຍກເປັນພາກ. ... 3.38

3.18 ຄວາມແຕກຕ່າງຂອງລາຄາ ຂອງຊາວກະສິກອນ
ແບ່ງເປັນພາກລາຄາປີ 1999. ... 3.43

3.19 ການປຸງແຕ່ງຜົນຜະລິດກະສິກຳ. ... 3.44

3.20 ພື້ນທີ່ມີກິດຈະການຂອງ ທກສ. .... .... .... .... .... .... .... .. ..... ..... ..... ...... .... .... ....3.49

3.21 ການເກັບທຶນຄືນປະຈຳປີ. .... .... .... .... .... .... .... .... .... ..... ..... ..... ........ .... .... .... .3.50

3.22 ສະຫຼຸບກ່ຽວກັບຈຸດສຸມ. .... .... .... .... .... .... .... .... .... .. ..... ..... ..... ...... .... .... .... ....3.52

3.23 ເນື້ອທີ່ຮັບນ້ຳຊົນລະປະທານ. .... .... .... .... .... .... .... .... ..... ..... ..... .. .... .... .... ..3.56

3.24 ການກະຈາຍຂອງລະບົບຊົນລະປະທານ ຊະນິດຕ່າງໆ ຕາມເຂດ. .... .. ..... ..... ..... .... .... ...3.57

3.25 ອັດຕາທີ່ວໜ່ວຍເກັບຄ່ານ້ຳ ແລະ ການແບ່ງທຶນຂອງ
ກອງທຶນພັດທະນາບ້ານ. .... .... .... .... .... .... .... .... .... .... .. ..... ..... ..... .... .... .... ....3.59

3.26 ເນື້ອທີ່ນ້ຳຖ້ວມ ແລະ ການເສຍຫາຍໃນປີ 2000. .... .... .... .... .. ..... ..... ..... .... .... .... ...3.60

3.27 . ທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າ ທີ່ສະແດງອອກ
ໃນໂຕະມົນຄັ້ງທີ່ 7 (000ໂດລາ)..........................................................................3.65

3.28 ການຊ່ວຍເຫຼືອຝຸ່ນ ແລະ ກົນຈັກໃນປີ 2000. .... .... .... .... .... .. ..... ..... ..... .... .... .... ...3.67

3.29 ຈຳນວນທຶນ NGO ຊ່ວຍແຍກຕາມຂະແໜງການປີ 1997. .... .. ..... ..... ..... ..... .... .... .... 3.68

3.30 ໂຄງການພັດທະນາກະສິກຳ ທີ່ຜ່ານມາ ແລະ ໃນປະຈຸບັນຮັບຜິດຊອບຂອງແຕ່ລະກົມ. .... ... ....3.69

4.1 ຂໍ້ມູນທີ່ຖືກນຳໃຊ້ໃນການວິເຄາະ..........................................................................4.2

4.2 ການຜະລິດກະສິກຳໃນ ສປປລາວ ໂດຍຈັດແບ່ງເປັນກຸ່ມຂອງເມືອງ.........................................4.9

4.3 ຂໍ້ມູນ GIS ທີ່ນຳໃຊ້ສຳລັບການປະເມີນຜົນທ່າແຮງດ້ານກະສິກຳ ............ ..... ..... ..... .......... 4.17

4.4 ມາດຕະຖານຂອງການກຳນົດທ່າແຮງເນື້ອທີ່ຂອງການຈັດກຸ່ມພືດ ............ ..... ..... ..... ..........4.18

4.5 ປະເພດສ່ຽງໄພຕໍ່ລະເບີດຍັງບໍ່ທັນແຕກ (UXO) ...................... ..... ..... ..... .........................4.19

4.6 ຂອບເຂດຂອງເນື້ອທີ່ທ່າແຮງດ້ານກະສິກຳສຳລັບກຸ່ມຂອງພືດແຕ່ລະກຸ່ມແລະ
ທົ່ງຫຍ້າລ້ຽງສັດ........................................................................................ .4.20

4.7 ບັນຫາຄວາມສ່ຽງໄພຕໍ່ລະເບີດບໍ່ທັນແຕກ..........................................................................4.25

4.8 ບັນດາເມືອງທີ່ມີຄວາມກົດດັນພົນລະເມືອງສູງ ຕໍ່ດິນກະສິກຳ...............................................4.28

4.9 ເຮັດການປະເມີນ ສຳລັບການວາງແຜນ ພັດທະນາກະສິກຳ ຕາມເຂດແຄ້ວນ
ແລະພັດທະນາຊົນນະບົດ..........................................................................................4.25

5.1 ການປະເມີນການເຕີບໂຕພົນລະເມືອງ.............................................................................5.5

5.2 ຊົນນະບົດ, ຕົວເມືອງ ແລະ ການຄາດຄະເນພົນລະເມືອງທັງໝົດ
ຮອດປີ 2020.............................................................................. ..... ..... ..... . ..............5.5

5.3 ການຄາດຄະເນການພົວພັນ ສ່ວນແບ່ງຂອງພົນລະເມືອງ
ໃນຕົວເມືອງ-ຊົນນະບົດ..........................................................................................5.5

5.4 ພາບທີ1: GDP ຕາມຂະແໜງການໃຫຍ່........................................ ..... ..... ..... ......................5.8

5.5 ພາບທີ2: ການຄາດຄະເນ GDP ດ້ວຍຂະແໜງການຫຼັກໃຫ້ໄດ້ 885
ໂດລາ/ປີໃນປີ 2020................................................................ ..... ..... ..... ................5.9

5.6 ຄາດຄະເນຊັບພະຍາກອນທີ່ມີສຳລັບ ແຜນປະຕິບັດການສຳລັບ
ກະສິກຳ2000-2020................................................................ ..... ..... ..... ...........................5.9

5.7. ຕົວຈິງ ແລະ ແຜນການລົງທຶນຂອງລັດ ລວມທັງໝົດ ແລະ
ຂະແໜງກະສິກຳ 1995/1996-2002/03 ...................................... ..... ..... ..... ..................... 5.10

5.8 ຄວາມຕ້ອງການ ການລົງທຶນຂອງລັດສຳລັບ ກະສິກຳ ເພື່ອໃຫ້ບັນລຸ

| | | |
|---|---|---|
| | ເປົ້າໝາຍ 885 ໂດລາ, ເປົ້າໝາຍການລົງທຶນເຂົ້າກະສິກຳປະຈຳປີ 2002 ຫາ 2010 (ນອກຈາກປ່າໄມ້). | 5.10 |
| 6.1 | ເນື້ອທີ່ເປົ້າໝາຍ, ຜະລິດຕະພາບຂອງນາ ແລະ ນາແຊງ (ລະດູແລ້ງ). | 6.30 |
| 6.2 | ເນື້ອທີ່ເປົ້າໝາຍ, ຜະລິດຕະພາບ ແລະ ຜົນຜະລິດຂອງເຂົ້າເນີນສູງ. | 3.31 |
| 6.3 | ການພັດທະນາການລ້ຽງສັດ ຄາດໝາຍໃນປີ 2020. | 6.32 |
| 6.4 | ການລ້ຽງປາ ແລະ ອັດຕາການເພີ່ມ. | 6.39 |
| 7.1 | ສັງລວມແຜນງານ ແລະ ໂຄງການທີ່ສະເໜີ. | 7.1 |
| 7.2 | ລຳດັບຂອງການສະເໜີແຜນງານ ແລະ ໂຄງການ. | 7.29 |
| 8.1 | ການກັ່ນກອງ ດ້ານສະພາບແວດລ້ອມສຳລັບໂຄງການຈຸດສຸມທັງໝົດ. | 8.9 |
| 9.1. | ມາດຖານຕີລາຄາ ແລະ ໃຫ້ຄະແນນແຕ່ຄວາມສາມາດປະຕິບັດ | 9.2 |
| 9.2. | ມາດຖານຕີລາຄາ ແລະ ໃຫ້ຄະແນນຕາມບູລິມະສິດ | 9.3 |
| 9.3. | ການຈັດລຳດັບບູລິມະສິດຂອງໂຄງການ/ແຜນງານໃນແຜນດຳເນີນງານ | 9.7 |
| 9.4. | ໂຄງການແລະ ແຜນງານບູລິມະສິດ | 9.10 |
| 9.5. | ບັນດາໂຄງການ ແລະ ແຜນງານບູລິມະສິດ ຕາມຂະແໜງການຍ່ອຍ | 9.13 |
| 9.6. | ຂໍ້ມູນງົບປະມານຂອງກະຊວງກະສິກຳ ແລະ ປ່າໄມ້ (ຕົວຈິງ 1995-1996 ເຖິງ 1999-2000) ແລະ ແຜນການ 2001-2002 | 9.15 |
| 9.7. | ຄວາມເປັນຈິງ ແລະ ແຜນການລວມ PIP ແລະ ກະສິກຳ 1995/96 ເຖິງ 2002/03 | 9.15 |
| 9.8. | ຂະແໜງກະສິກຳ ການວາງແຜນການລົງທຶນ (2002/03 ເຖິງ 2009/10). | |
| 9.9. | ທຶນປະຈຳປີ ແລະ ມູນຄ່າ ຂໍຢືມຕໍ່ ຂອງໂຄງການ ແລະ ແຜນງານບູລິມະສິດ | 9.19 |


## ລາຍຊື່ຮູບ:


ຮູບ 1.1. ຂັ້ນຕອນການສຶກສາແຜນແມ່ບົດກະສິກຳ ຮອບດ້ານຢູ່ ສປປລາວ. -..-.-..—..-.-..—..-.-..—..-.-..—..-1.8

ຮູບ 2.1: ການປ່ຽນແປງອັດຕາແລກປ່ຽນ SE Asian. ........ 2.2

ຮູບ 3.1: ໂຄງຮ່າງການຈັດຕັ້ງ ກະຊວງກະສິກຳ ແລະ ປ່າໄມ້. ........ 3.9

ຮູບ 3.2: ການຈັດຕັ້ງຂອງສະຖາບັນຄົ້ນຄ້ວາ ກະສິກຳ ແລະ ປ່າໄມ້. ........ 3.27

ຮູບ 3.3: ລະບົບການຕະຫຼາດຂອງປາອ່າງນ້ຳງື່ມ........ 3.42

ຮູບ 3.5: ທີ່ຕັ້ງຂອງໂຄງການຊົນລະປະທານ. ........ 3.58

ຮູບ 3.6: ເຂດນ້ຳຖ້ວມປະຈຳຕາມລຳແມ່ນ້ຳຂອງ. ........ 3.62

ຮູບ 4.1: ກຸ່ມຂອງເມືອງ. ........ 4.14

ຮູບ 4.2: ເສັ້ນສະແດງຂອງແຕ່ລະກຸ່ມ. ........ 4.15

ຮູບ 4.3: ທ່າແຮງໃນການເປັນໄປໄດ້ໃນການປູກເຂົ້າ........ 4.21

ຮູບ 4.4: ທ່າແຮງໃນການເປັນໄປໄດ້ໃນການປູກພືດເນີນສູງ. ........ 4.22

ຮູບ 4.5: ທ່າແຮງໃນການເປັນໄປໄດ້ໃນການປູກພືດຢືນຕົ້ນ. ........ 4.23

ຮູບ 4.6. ທ່າແຮງແລະ ເຂດທົ່ງຫຍ້າທີ່ມີຢູ່. ........ 4.24

ຮູບ 4.7: ສະເລ່ຍເຂດເນື້ອທີ່ໃໝ່ ..........................................................................................4.26
ຮູບ 4.8: ປະເມີນລະດັບຄວາມສ່ຽງໄພ ລະເບີດບໍ່ທັນແຕກ..............................................................4.27.

## ລາຍການຄັດຕິດ

**ຄັດຕິດ1** .ສັງລວມລັກສະນະດ້ານກະສິກຳໃນການພັດທະນາ.
**ຄັດຕິດ2** . ບັນຊີໂຄງການ ແລະ ແຜນງານທີ່ສະເໜີ.